ADB

# ຍຸດທະສາດ
# ແລະ
# ແຜນງານເພື່ອການຮ່ວມມືກັບປະເທດ

---

## ສາທາລະນະລັດປະຊາທິປະໄຕປະຊາຊົນລາວ
## 2009–2011

ສິງຫາ 2008

ທະນາຄານພັດທະນາອາຊີ

”ເອກະສານນີ້ໄດ້ຖືກແປຈາກພາສາອັງກິດເພື່ອສາມາດເຂົ້າເຖິງຜູ້ອ່ານໃຫ້ໄດ້ຫລາຍກຸ່ມ. ໃນລະຫວ່າງທີ່ທະນາຄານພັດທະນາອາຊີ (ເອດີບີ) ພະຍາຍາມຢັ້ງຢືນຄວາມຖືກຕ້ອງຂອງການແປນີ້,ພາສາອັງກິດແມ່ນພາສາທີ່ໃຊ້ໃນການເຮັດວຽກທາງການຂອງ ເອດີບີ ແລະ ຕົ້ນສະບັບພາສາອັງກິດຂອງເອກະສານນີ້ແມ່ນເປັນສະບັບທີ່ມີເນື້ອໃນຕົວຈິງເທົ່ານັ້ນ (ນັ້ນຄື, ເປັນທາງການ ແລະ ເຊື່ອຖືໄດ້). ທຸກການອ້າງເຖິງແມ່ນຕ້ອງອີງໃສ່ຕົ້ນສະບັບພາສາອັງກິດຂອງເອກະສານນີ້.”

## ອັດຕາແລກປ່ຽນເງິນຕາ

(ໃນວັນທີ  ມິຖຸນາ 2008)

| | | |
|---|---|---|
| ຫົວໜ່ວຍເງິນຕາ | – | ກີບ (KN) |
| $1.00 | = | ກີບ8,600 |
| ກີບ1.00 | = | $0.0000971 |

## ຄວາມໝາຍພາສາລາວຂອງອັກສອນຫຍໍ້ ໃນພາສາອັງກິດ

| | | |
|---|---|---|
| ADB | – | ທະນາຄານພັດທະນາອາຊີ |
| ADF | – | ກອງທຶນພັດທະນາອາຊີ |
| ADTA | – | ການຊ່ວຍເຫຼືອການໃຫ້ຄໍາແນະນໍາທາງດ້ານວິຊາການ |
| CDTA | – | ການຊ່ວຍເຫຼືອວິຊາການເພື່ອການພັດທະນາຄວາມສາມາດ |
| COBP | – | ແຜນງານການດໍາເນີນງານສໍາລັບປະເທດ |
| CSP | – | ຍຸດທະສາດ ແລະ ແຜນງານການຮ່ວມມືກັບປະເທດ |
| GDP | – | ຍອດຜົນຜະລິດຕະພັນພາຍໃນປະເທດ |
| GMS | – | ອານຸພາກພື້ນແມ່ນໍ້າຂອງ |
| IMF | – | ກອງທຶນການເງິນສາກົນ |
| Lao PDR | – | ສາທາລະນະລັດປະຊາທິປະໄຕປະຊາຊົນລາວ |
| MDG | – | ເປົ້າໝາຍພັດທະນາສະຫັດສະຫວັດ |
| OCR | – | ແຫຼ່ງທຶນປົກກະຕິ (ທຶນດອກເບ້ຍປົກກະຕິ) |
| PATA | – | ໂຄງການຊ່ວຍເຫຼືອວິຊາການການກະກຽມໂຄງການ |
| PBA | – | ການຕອບສະໜອງທຶນຕາມຜົນການດໍາເນີນງານ |
| PPTA | – | ການຊ່ວຍເຫຼືອວິຊາການການກະກຽມໂຄງການ |
| NSEDP6 | – | ແຜນງານພັດທະນາເສດຖະກິດສັງຄົມແຫ່ງຊາດຫ້າປີ ຄັ້ງທີ 6 |
| SMEs | – | ວິສາຫະກິດຂະໜາດກາງ ແລະ ນ້ອຍ |
| TA | – | ການຊ່ວຍເຫຼືອວິຊາການ |

## ນ້ຳໜັກ ແລະມາດຕາວັດແທກ

| | | |
|---|---|---|
| GWh | – | ກິກກາວັດ ໂມງ |
| km | – | ກິໂລແມັດ |
| Kv | _ | ກິໂລໂວ້ນ |
| m | – | ແມັດ |
| $m^3$ | – | ແມັດກ້ອນ |

**ໝາຍເຫດ**

(i) ປີງົບປະມານຂອງລັດຖະບານ(FY) ແມ່ນສິ້ນສຸດໃນວັນທີ 30 ກັນຍາ

(ii) ໃນບົດລາຍງານນີ້, "$" ໝາຍເຖິງເງິນໂດລາສະຫະລັດ

| | |
|---|---|
| ຮອງປະທານ | C. Lawrence Greenwood, Jr., Operations Group 2 |
| ຫົວໜ້າກົມ | A. Thapan, Southeast Asia Department (SERD) |
| ຜູ້ຕາງໜ້າ | G. H. Kim, Lao Resident Mission (LRM), SERD |
| ຫົວໜ້າທີມງານ | C.T. Hnanguie, Country Economist, LRM, SERD |
| ສະມາຊິກທີມງານ | ADB Lao People's Democratic Republic Country Team |

# ສາລະບານ

ໜ້າທີ

I. ຄວາມສອດຄ່ອງ ຂອງແຜນດຳເນີນງານ ຕໍ່ກັບຍຸດທະສາດການຮ່ວມມືກັບປະເທດໃນປັດຈຸບັນ 1

II. ດັດສະນີແຜນງານການສະໜອງເງິນກູ້/ການຊ່ວຍເຫຼືອລ້າ ແລະບໍ່ແມ່ນການກູ້ຢືມ 4

III. ສັງລວມການປ່ຽນແປງຕໍ່ແຜນງານການສະໜອງເງິນກູ້/ການຊ່ວຍເຫຼືອລ້າ ແລະບໍ່ແມ່ນການກູ້ຢືມ 6
ກ. ການດັດສົມແຜນງານ ປີ 2008
ຂ. ສັງລວມການປ່ຽນແປງຕໍ່ແຜນງານ 2009-2011

IV. ດັດສະນີຄວາມຕ້ອງການທຶນຮອນພາຍໃນຕາມແຜນ 7

V. ການຕິດຕາມໂດຍອີງໃສ່ຜົນຂອງການດຳເນີນງານເປັນພື້ນຖານ 8

ຕາຕະລາງ

1. ດັດສະນີແຜນການຜະລິດຕະພັນຂອງການຊ່ວຍເຫຼືອທີ່ເປັນເງິນກູ້/ການຊ່ວຍເຫຼືອລ້າ, 2009-2011 9
2. ດັດສະນີແຜນການຜະລິດຕະພັນ ແລະການບໍລິການ ຂອງການຊ່ວຍເຫຼືອທີ່ບໍ່ແມ່ນເງິນກູ້, 2009-2011 14
3. ສັງລວມຂໍ້ມູນຜະລິດຕະພັນ ແລະ ການບໍລິການ ຂອງການຊ່ວຍທີ່ເປັນເງິນກູ້/ການຍຊ່ວຍເຫຼືອລ້າ ແລະການຊ່ວຍເຫຼືອທີ່ບໍ່ແມ່ນເງິນກູ້, 2009 20
4. ແຜນການຜະລິດຕະພັນການຂອງຊ່ວຍເຫຼືອຂອງການຊ່ວຍເຫຼືອທີ່ເປັນເງິນກູ້/ການຊ່ວຍເຫຼືອລ້າ, 2008 31
5. ແຜນການຜະລິດຕະພັນຂອງການຊ່ວຍເຫຼືອທີ່ບໍ່ແມ່ນເງິນກູ້ ແລະການບໍລິການ, 2008 32

## I. ຄວາມສອດຄ່ອງ ຂອງແຜນດຳເນີນງານຕໍ່ກັບຍຸດທະສາດການຮ່ວມມືກັບປະເທດໃນປັດຈຸບັນ

1. ແຜນງານພັດທະນາເສດຖະກິດສັງຄົມຫ້າປີຄັ້ງທີ 6 ໄດ້ວາງໂຄງຮ່າງການພັດທະນາທີ່ແທດເໝາະ ແລະ ສອດຄ່ອງໂດຍສຸມໃສ່ແລະໃຫ້ບູລິມະສິດແກ່ຂະແໜງກະສິກຳ, ສາທາ (ລະບົບນ້ຳປະປາ), ຂະແໜງ ສຶກສາ ແລະ ຂະແໜງພື້ນຖານໂຄງລ່າງ ແລະ ຜັກດັນການປະຕິຮູບໃນຂົງເຂດທີ່ສຳຄັນ (ເຊັ່ນ: ການພັດທະນາຄວາມສາມາດ, ການບໍລິຫານຄຸ້ມຄອງ, ການພັດທະນາຂະແໜງເອກະຊົນ ແລະ ການເຊື່ອມໂຍງພາກພື້ນ). ສິ່ງສະແດງ[1] ໃນການທົບທວນເຄິ່ງໄລຍະທຳອິດຂອງແຜນງານພັດທະນາເສດຖະກິດສັງຄົມຫ້າປີຄັ້ງທີ 6 ໄດ້ຊີ້ໃຫ້ເຫັນວ່າມີຄວາມຄືບໜ້າຫຼາຍໃນການທີ່ຈະບັນລຸເປົ້າໝາຍທີ່ໄດ້ວາງໄວ້; ລາຍໄດ້ສະເລ່ຍຕໍ່ຫົວຄົນເພີ່ມຂຶ້ນເປັນ 810 ໂດລາ, ຄວາມທຸກຍາກຫຼຸດລົງຢ່າງໄວຈາກ 33.5% ໃນປີ 2003 ມາເປັນ 22.3%, ແລະ ສືບຕໍ່ບັນລຸເປົ້າໝາຍພັດທະນາສະຫັດສະຫວັດທີ່ເປັນລາຍຮັບ. ການທົບທວນຢັ້ງຢືນວ່າການຂະຫຍາຍໂຕດ້ານເສດຖະ ກິດຢ່າງຍືນຍົງ, ການກະຕຸ້ນການພັດທະນາສັງຄົມ ແລະ ການຫຼຸດຜ່ອນຄວາມທຸກຍາກຍັງແມ່ນເປົ້າໝາຍຍຸດທະສາດຂອງຍຸດທະສາດການພັດທະນາເສດຖະກິດສັງຄົມຂອງສາທາລະນະລັດປະຊາທິປະໄຕປະຊາຊົນ ລາວ.

2. ບັນດາພື້ນຖານເສດຖະກິດມະຫາພາກທີ່ດີ ໄປຄຽງຄູ່ກັບການຄຸ້ມຄອງງົບປະມານທີ່ມີປະສິດທິພາບຈະສືບຕໍ່ນຳພາການຂະຫຍາຍໂຕດ້ານເສດຖະກິດທີ່ເຂັ້ມແຂງຕາມແນວທາງທີ່ຍືນຍົງ. ການຂະຫຍາຍໂຕຂອງຂະແໜງພະລັງງານ ແລະ ຂຸດຄົ້ນເປັນໂຕຂັບເຄື່ອນ, ທີ່ສົ່ງຜົນໃຫ້ລວມຍອດຜະລິດຕະພັນພາຍໃນປະເທດບັນລຸ 8% ໃນປີ 2007, ສູງກວ່າອັດຕາສະເລ່ຍ 7.3% ຂອງການເຕີບໂຕຂອງໄລຍະ 5 ປີທີ່ຜ່ານມາ ແລະ ຄາດວ່າຈະຍັງຄົງຮັກສາໄວ້ທີ່ລະດັບ 7.0%-8.0% ຈົນຮອດປີ 2011. ໃນຂະນະທີ່ອັດຕາເງິນເຟີ້ແມ່ນຢູ່ໃນລະດັບຕ່ຳ 4.5% ໃນປີ 2007, ການເພີ່ມຂຶ້ນຂອງລາຄາອາຫານແລະນ້ຳມັນໃນຕະຫຼາດໂລກໄດ້ສົ່ງຜົນກະທົບຕໍ່ສະພາບເງິນເຟີ້. ອັດຕາເງິນເຟີ້ສະເລ່ຍໃນໄລຍະ 6 ເດືອນຕົ້ນປີຂອງປີ 2008 ແມ່ນ 6.8% ແລະ ຄາດວ່າຈະເພີ້ມຂຶ້ນກາຍສອງໂຕເລກ. ເຖິງແມ່ນວ່າ ສປປ ລາວ ຈະຖືກເບິ່ງວ່າໄດ້ຮັບຜົນກະທົບຈາກການເພີ່ມຂຶ້ນຂອງລາຄາອາຫານ, ແຕ່ການເພີ່ມຂຶ້ນຂອງລາຄາອາຫານແມ່ນກຳລັງສົ່ງຜົນກະທົບຕໍ່ຄວາມທຸກຍາກໃນເຂດເທດສະບານ/ຕົວເມືອງ. ສະຖານະການດັ່ງກ່າວລັດຖະບານແມ່ນກຳລັງຕິດຕາມຢ່າງໃກ້ຊິດ. ຄ່າເງິນກີບຍັງຄົງ ຮັກສາຄວາມມີສະຖຽນລະພາບ (ຢູ່ໃນລະຫວ່າງ 9,500 – 8,500 ກີບ ຕໍ່ 1 ໂດລາ) ຕະຫຼອດປີ 2007 ແລະທົກເດືອນຕົ້ນປີຂອງປີ 2008. ການຂະຫຍາຍໂຕຢ່າງແຂງແຮງຂອງພາກສົ່ງອອກໄດ້ຊ່ວຍໃຫ້ມີການກະຕຸ້ນໃຫ້ມີການຂະຫຍາຍໂຕຂອງທຶນຕ່າງປະເທດໃນພາກການນຳເຂົ້າ, ສົ່ງຜົນໃຫ້ການຂາດດຸນບັນຊີເດີນສະພັດລົດລົງຈາກປະມານ 20% ໃນປີ 2005 ຫາ 13% ໃນປີ 2007. ສັດສ່ວນການຂາດດຸນງົບປະມານໂດຍລວມລົດລົງເປັນ 2.5% ຂອງຍອດຜົນຜະລິດພັນລວມພາຍໃນປະເທດໃນສົກປີງົບປະມານ 2006/07 ເນື່ອງຈາກການເກັບລາຍຮັບຈາກຂະແໜງຊັບພະຍາກອນທີ່ສູງ ແລະ ການຈັດຕັ້ງປະຕິບັດກົດໝາຍພາສີແລະອາກອນສະບັບປັບປຸງໃໝ່ທີ່ຂະຫຍາຍຖານອາກອນແລະການເກັບອາກອນຈາກບັນດາໂຄງການຂະໜາດໃຫ່ຍ ແລະ ການທ່ອງທ່ຽວ. ປະລິມານເງິນລວມແມ່ນເພີ້ມຂຶ້ນໃນລະດັບສະເລ່ຍ 35% ໃນໄລຍະສອງປີທີ່ຜ່ານມາ. ໃນຂະນະທີ່ມັນສາມາດຂະຫຍາຍ ແລະ ສະໜອງເງິນທຶນໃຫ້ແກ່ພາກເສດຖະກິດຫຼາຍຂຶ້ນ, ມັນຍັງກໍ່ໃຫ້ເກີດຄວາມສ່ຽງໃນການເຮັດໃຫ້ເງິນເຟີ້ເພີ່ມຂຶ້ນ. ການປະເມີນຂອງຄວາມມີສະຖຽນລະພາບດ້ານໜີ້ສິນຮ່ວມກັນລະຫວ່າງ (ເອດີບີ, ກອງທຶນການເງິນສາກົນ, ແລະ ທະນາຄານໂລກ) ທີ່ໄດ້ຈັດຕັ້ງ

[1] ການທົບທວນເຄິ່ງໄລຍະທຳອິດ NSEDP6, ໄດ້ລິເລີ້ມໃນເດືອນ ພຶດສະພາ 2008, ຄາດວ່າຈະສຳເລັດກ່ອນ ເດືອນ ກັນຍາ 2008.

ປະຕິບັດໃນເດືອນ ພຶດສະພາ ປີ 2005 ໄດ້ສະແດງໃຫ້ເຫັນວ່າມູນຄ່າສຸດທິຂອງໜີ້ສິນພາຍນອກໄດ້ລຶດລົງເນື່ອງຈາກວ່າການບໍລິຫານໜີ້ສິນທີ່ໄດ້ຮັບການປັບປຸງ ແລະ ຢູ່ໃນລະດັບປະມານ 2.4 ພັນລ້ານ (60% ຂອງ GDP) ຈາກ 77% ໃນປີ 2005. ສະພາບໜີ້ສິນແມ່ນໄດ້ຮັບການປັບປຸງ, ແລະ ສັດສ່ວນການຊຳລະໜີ້ຕໍ່ລາຍຮັບແມ່ນຖືກປະເມີນວ່າຈະລຶດລົງຈາກ ເກືອບວ່າ 20% ໃນປີ 2005 ຫາ 12% ໃນປີ 2007.

3. ບາດກ້າວຂອງການປະຕິຮູບແມ່ນກຳລັງໄດ້ຮັບການກະຕຸ້ນ, ໂດຍສະເພາະແມ່ນນະໂຍບາຍການຄຸ້ມຄອງການເງິນພາກລັດ, ແລະ ຂົງເຂດລະບຽບ ແລະ ນິຕິກຳ. ອີງຕາງເງື່ອນໄຂຂອງໂຄງການພະລັງງານໄຟຟ້ານ້ຳຕົກນຳເທີນ 2, ການປະຕິຮູບໃນພາກການໃຊ້ຈ່າຍພາກລັດແມ່ນມີຄວາມຄືບໜ້າ. ຄວາມຄືບໜ້າແຕ່ລະກ້າວໃນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍງົບປະມານພ້ອມກັບການລວມສູນຂອງໜ່ວຍງານຄັງເງິນ, ພາສີ ແລະ ອາກອນ; ໃນຂະນະທີ່ແຜນງານການກະຈາຍລາຍຮັບແບບແບ່ງປັນໃໝ່ແມ່ນກຳລັງຖືກພັດທະນາ. ໃນການປະຕິຮູບດ້ານງົບປະມານ, ມາດຕະການການຄິດໄລ່ ພາສີທີ່ຫຼາກຫຼາຍ ລວມທັງການປ່ຽນແປງໃນການເກັບອາກອນລາຍຮັບ ແລະ ການຄຸ້ມຄອງການເກັບພາສີສິນຄ້າຟຸ່ມເຟືອຍ ແລະ ກົດໝາຍອາກອນສະບັບໃໝ່ໄດ້ຖືກປະກາດໃຊ້. ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມໄດ້ຖືກຮັບຮອງໃນປີ 2007 ແລະ ດຳລັດວ່າດ້ວຍການກຳນົດຈັດຕັ້ງປະຕິບັດກຳລັງຖືກຮ່າງຂຶ້ນ. ສະພາບແວດລ້ອມຂອງການລົງທຶນໄດ້ມີການປັບປຸງເຊັ່ນດຽວກັນ. ຈຳນວນວັນທີ່ສາມາດເລີ່ມດຳເນີນທຸລະກິດຫຼັງຈາກມີການຂໍຂຶ້ນທະບຽນແມ່ນໜ້ອຍລົງຫຼາຍຈາກ 186 ວັນຫາ 14 ວັນໃນປີ 2008 ເຊິ່ງການຈັດຕັ້ງປະຕິບັດຂອງກົດໝາຍວ່າດ້ວຍວິສາຫະກິດສະບັບໃໝ່ກຳລັງເປັນໄປຕາມບາດກ້າວ. ບັນດາການລົງທຶນໃໝ່, ລວມໄປເຖິງບໍລິສັດເງິນທຶນສາກົນຂອງກຸ່ມທະນາຄານໂລກແລະທະນາຄານອົດສຕຣາລີ ແລະ ສະວິດເຊີແລນ, ທີ່ເຂົ້າມາໃນຕະຫຼາດການເງິນກໍ່ແມ່ນສ່ວນ ໜຶ່ງຂອງການຈັດຕັ້ງປະຕິບັດຂອງກົດໝາຍວ່າດ້ວຍທະນາຄານທີ່ກະຕຸ້ນໃຫ້ມີການແຂ່ງຂັນໃນຂະແໜງການ. ພາຍໃຕ້ແຜນງານການປະຕິຮູບຂະແໜງການໜີ້ທະນາຄານທີ່ບໍ່ເກີດລາຍໄດ້ (ໜີ້ເສຍ) ຂອງບັນດາທະນາຄານລັດວິສາຫະກິດໄດ້ລຶດລົງຈາກ 41% ໃນປີ 2002 ຫາ 6% ໃນປີ 2007. ຍຸດທະສາດຂະແໜງການການເງິນແມ່ນກຳລັງຖືກກະກຽມ.

4. ເຖິງແມ່ນວ່າຈະມີຄວາມຄືບໜ້າຫຼາຍ,
ບັນຫາທີ່ກຳລັງທ້າທາຍລັດຖະບານລວມທັງການຄຸ້ມຄອງການພັດທະນາ ເພື່ອທີ່ຈະເຮັດໃຫ້ແຫຼ່ງຂອງການເຕີບໂຕມີຄວາມຍືນຍົງ ແລະ ຫັນປ່ຽນ, ຄຸ້ມຄອງບັນຫາເງິນເຟີ້, ຮັບປະກັນຄວາມຍືນຍົງຂອງງົບປະມານ, ແລະ ສ້າງກາລະໂອກາດໃນການມີວຽກເຮັດງານທຳທີ່ດີ; ຮັກສາຈັງຫວະແບບຍືນຍົງໃນການລິເລີ້ມການຫຼຸດຜ່ອນຄວາມທຸກຍາກ ແລະ ເລັ່ງກະຕຸ້ນຂະບວນການໃນການ ພັດທະນາສັງຄົມ; ແລະ ການຜັນຂະຫຍາຍວາລະການຄຸ້ມຄອງບໍລິຫານ ແລະ ການພັດທະນາຄວາມສາມາດທີ່ຈຳເປັນຂອງການໃຫ້ການບໍລິການຂອງບຸກຄະລາກອນໃຫ້ມີຄວາມທັນສະໄໝ, ພຽງພໍກັບຄວມຕ້ອງການ, ແລະ ມີປະສິດທິພາບ. ການພັດທະນາຄວາມສາມາດ ແລະ ການສ້າງຄວາມເຂັ້ມແຂງຂອງສະຖາບັນ, ໂດຍສຸມໃສ່ຂະແໜງການບູລິມະສິດ, ແລະ ການສະໜອງຕໍ່ຄວາມຮຽກຮ້ອງຕ້ອງການສະເພາະຂອງ ສປປ ລາວ ເຊິ່ງເປັນຂົງເຂດທີ່ຍັງມີຄວາມອ່ອນແອ ແລະ ຮຽກຮ້ອງໃຫ້ມີການສະໜັບສະໜູນຢ່າງຮີບດ່ວນ.

5. ແຜນງານ ແລະ ຍຸດທະສາດສໍາລັບປະເທດຂອງ ເອດີບີ (CSP) 2007-2011 ສໍາລັບ ສປປ ລາວ[2] ແມ່ນສອດຄ່ອງກັບແຜນງານພັດທະນາເສດຖະກິດສັງຄົມຫ້າປີຄັ້ງທີ 6 ຂອງລັດຖະບານ, ແລະ ສຸມໃສ່ (i) ການສົ່ງເສີມການເຕີບໂຕເພື່ອຫຼຸດຜ່ອນຄວາມທຸກຍາກແບບຍືນຍົງ: ສົ່ງເສີມໂອກາດໃນການສ້າງວຽກເຮັດງານທໍາ ໂດຍຜ່ານການພັດທະນາຂະແໜງເອກະຊົນ (ການພັດທະນາວິສາຫະກິດຂະໜາດກາງ ແລະ ນ້ອຍ, ການຫັນປ່ຽນສູ່ການຜະລິດກະສິກໍາເພື່ອເປັນສິນຄ້າ, ແລະ ການເຊື່ອມໂຍງພາກພື້ນ ເຊິ່ງຖືວ່າເປັນປັດໃຈໃນການຜັກດັນການຂະຫຍາຍໂຕໄປທາງໜ້າ); (ii) ສົ່ງເສີມການພັດທະນາສັງຄົມຮອບດ້ານ: ກະຕຸ້ນຂະບວນການຂອງເປົ້າໝາຍພັດທະນາສະຫັດສະຫວັດທີ່ບໍ່ແມ່ນລາຍຮັບ (ການສຶກສາ, ການຮັກສາສຸກຂະພາບຂັ້ນພື້ນຖານ, ລະບົບນໍ້າປະປາ); (iii) ເນັ້ນໜັກບັນຫາການຄຸ້ມຄອງບູລິມະສິດ: ການສ້າງຄວາມສາມາດສໍາລັບການຄຸ້ມຄອງ ແລະ ການຄຸ້ມຄອງລາຍຮັບຈາກໂຄງການນໍ້າເທີນ 2. ປັດໃຈຫຼັກຂອງຍຸດທະສາດແມ່ນການກ້າວສູ່ການປະສານການພັດທະນາແລະແຜນງານ ແລະ/ຫຼື ແນວທາງທີ່ອີງໃສ່ຂະແໜງການເປັນພື້ນຖານ ຂອງຂະແໜງການບູລິມະສິດທີ່ສະໜັບສະໜູນໂດຍຖະແຫຼງການວຽງຈັນວ່າດ້ວຍປະສິດທິພາບ ຂອງການຊ່ວຍເຫຼືອ[3] ແລະ ແຜນການຈັດຕັ້ງປະຕິບັດຂອງປະເທດ[4]. ແຜນງານຍຸດທະສາດຮ່ວມກັບປະເທດໄດ້ຖືກເພີ້ມເຕີມໂດຍຍຸດທະສາດອານຸພາກພື້ນແມ່ນໍ້າຂອງ (GMS) ແລະ ການລິເລີ້ມແຜນງານທີ່ວາງເປົ້າໝາຍເພື່ອສົ່ງເສີມການເຊື່ອມຕໍ່, ການສົ່ງເສີມການລົງທຶນຂອງຕ່າງປະເທດຂະໜາດໃຫ່ຍ, ແລະ ການສ້າງການບໍລິການພາກລັດໃນພາກພື້ນ.

6. ການພັດທະນາທີ່ສໍາຄັນຫຼາຍດ້ານໄດ້ມີຄວາມຄືບໜ້າຕັ້ງແຕ່ແຜນການການດໍາເນີນງານສໍາລັບປະເທດ 2008-2010 ໄດ້ມີການກະກຽມສໍາລັບ ສປປ ລາວ. ມັນຍັງໄດ້ລວມໄປເຖິງການຮັບຮອງເອົາແຜນງານຍຸດທະສາດຍາວນານ 2020[5]; ຜົນສໍາເລັດຂອງການປຶກສາຫາລືຂອງກອງທຶນພັດທະນາອາຊີສິບ (ADF X), ເຊິ່ງເຮັດໃຫ້ມີການເພີ້ມຂື້ນຂອງການຈັດສັນແຫຼ່ງທຶນ; ແລະ ການຮັບຮອງເອົາແຜນງານປະຕິບັດງານວຽງຈັນສໍາລັບການຈັດຕັ້ງປະຕິບັດການພັດທະນາອານຸພາກພື້ນແມ່ນໍ້າຂອງທີ່ກອງປະຊຸມສຸດຍອດຄັ້ງທີສາມຂອງອານຸພາກພື້ນແມ່ນໍ້າຂອງ. ການພັດທະນາຜ່ານມາສະໜັບສະໜູນການຈັດຕັ້ງແຜນງານຍຸດທະສາດສໍາລັບປະເທດໂດຍຜັນຂະຫຍາຍການຕອບສະໜອງຂອງເອດີບີຕໍ່ຄວາມຕ້ອງການໃນການພັດທະນາຂອງປະເທດ ແລະ ເລືອກເຟັ້ນສະເພາະຂະແໜງການ. ຍຸດທະສາດ ແລະ ແຜນງານເພື່ອການຮ່ວມມືກັບປະເທດສະບັບນີ້ໄດ້ຖືກກະກຽມເພື່ອທີ່ຈະບັນລຸຜົນຂອງການພັດທະນາທີ່ສາມາດເຫັນໄດ້ໃນແຜນງານຍຸດທະສາດສໍາລັບປະເທດ ແລະ ຍຸດທະສາດຍາວນານ 2020 ພາຍໄຕ້ການປະສານງານຢ່າງໃກ້ສິດກັບກິດຈະກໍາຂອງບັນດາຄູ່ຮ່ວມພັດທະນາອື່ນໆ.

---

[2] ທະນາຄານພັດທະນາອາຊີ. 2006 . ຍຸດທະສາດ ແລະ ແຜນງານການຮ່ວມມືກັບປະເທດ (2007-2011).ສປປ ລາວ. ນະຄອນຫລວງມະນີລາ (ຮັບຮອງໂດຍຄະນະປະທານທະນາຄານພັດທະນາອາຊີ ໃນເດືອນ ຕຸລາ)

[3] ຖະແຫຼງການຮ່ວມສະບັບທ້ອງຖິ່ນ ຂອງຖະແຫຼງການຮ່ວມປາລີ ກ່ຽວກັບປະສິດທິພາບຂອງການຊ່ວຍເຫຼືອ, ເຊິ່ງລັດຖະບານ ສປປ ລາວ ແລະ 22 ຄູ່ຮ່ວມພັດທະນາໄດ້ຮັບຮອງເອົາທີ່ກອງປະຊຸມໂຕະມົນທີ່ຈັດຂື້ນທີ່ວຽງຈັນ ໃນເດືອນ ພະຈິກ 2006

[4] ລັດຖະບານ ແລະ ຄູ່ຮ່ວມພັດທະນາໄດ້ຮັບຮອງເອົາແຜນການດໍາເນີນງານຂອງປະເທດ ໃນວັນທີ 31 ພຶດສະພາ 2007

[5] ຍຸດທະສາດ 2020 ຂອງເອດີບີ ວາງແຜນງານສໍາລັບການຈັດສັນຂອງການດໍາເນີນງານຂອງເອດີບີ. ມັນໄດ້ໃຫ້ບູລິມະສິດແກ່ພື້ນຖານໂຄງລ່າງ, ລວມທັງພື້ນຖານໂຄງລ່າງຊົນນະບົດ; ສະພາບແວດລ້ອມ, ລວມທັງການປ່ຽນແປງຂອງສະພາບອາກາດ; ການຮ່ວມມື ແລະ ການເຊື່ອມໂຍງພາກພື້ນ; ການພັດທະນາຂະແໜງການເງິນ; ແລະ ການສຶກສາ ທີ່ເປັນຂົງເຂດທີ່ສໍາຄັນຂອງການດໍາເນີນງານ. ເອດີບີ. 2008. ຍຸດທະສາດ 2020: ແຜນງານຍຸດທະສາດຍາວນານ ເອດີບີ 2008-2020. ມະນີລາ.

7. ບັນດາຂະແໜງການຂອງການຊ່ວຍເຫຼືອຂອງເອດີບີສຳລັບ ສປປ ລາວ ກຳລັງໄດ້ຮັບໝາກຜົນທີ່ໜ້າພໍໃຈ. ບັນດາໂຕຊີ້ບອກຜົນຂອງການດຳເນີນງານຂອງບັນດາໂຄງການເງິນກູ້/ການຊ່ວຍເຫຼືອລ້າກອງທຶນພັດທະນາອາຊີ(ADF) ທີ່ກຳລັງຈັດຕັ້ງປະຕິບັດ 28 ໂຄງການ (ຈຳນວນລວມ 452.4 ລ້ານໂດລາ) ແລະ ໂຄງການການຊ່ວຍເຫຼືອລ້າ 20 ໂຄງການ( 13.52 ລ້ານໂດລາ) ມີຄວາມຄືບໜ້າພ້ອມກັບການພັດທະນາຂອງບັນດາໂຕຊີ້ບອກທີ່ສຳຄັນ[6]. ເວລາສະເລ່ຍຈາກການອະນຸມັດ ຈົນຮອດການຈັດຕັ້ງປະຕິບັດ ແມ່ນ 6.9 ເດືອນ, ສົມທຽບໃສ່ຈຳນວນສະເລ່ຍໂດຍລວມຂອງເອດີບີ ແມ່ນ 8.1 ເດືອນ. ສັດສ່ວນຂອງສັນຍາ ແມ່ນ 38.1% ສົມທຽບກັບ 30.2% ຂອງສັດສ່ວນສະເລ່ຍໂດຍລວມຂອງເອດີບີ ແລະ ສັດສ່ວນການເບີກຈ່າຍຊຳລະ 37.5% ທຽບກັບ 25.4%. ໃນຂະນະດຽວກັນປະມານ 56.5% ຂອງເງິນກູ້ ແລະ ເງິນຊ່ວຍເຫຼືອລ້າແມ່ນມີຜົນສັກສິດຫຼາຍກ່ວາ 90 ວັນຫຼັງຈາກມີການລົງນາມເຫັນດີສົມທຽບໃສ່ 58.9% ຂອງສັດສ່ວນສະເລ່ຍໂດຍລວມຂອງເອດີບີ, ບັນດາຂະແໜງເງິນກູ້/ເງິນຊ່ວຍເຫຼືອລ້າສ່ວນຫຼາຍຍັງຄົງຮັກສາລະດັບທີ່ໜ້າພໍໃຈມີພຽງແຕ່ໂຄງການດຽວເທົ່ານັ້ນທີ່ມີຄວາມສ່ຽງ. ລັດຖະບານໄດ້ເນັ້ນໜັກໃຫ້ຄວາມສຳຄັນຕໍ່ການຈັດຕັ້ງປະຕິບັດທີ່ໄດ້ເຫັນດີໃນກອງປະຊຸມທົບທວນບັນດາຂະແໜງການທີ່ຜ່ານມາ, ໂດຍສະເພາະແມ່ນກ່ຽວກັບການຕິດຕາມຜົນຂອງການດຳເນີນງານ, ການເພີ່ມຂຶ້ນຂອງຄ່າໃຊ້ຈ່າຍ, ການຈັດຕັ້ງການດຳເນີນງານທີ່ທັນສະໄໝ, ການເຊັນສັນຍາການຊ່ວຍເຫຼືອດ້ານວິຊາການໃຫ້ໄວຂຶ້ນ, ແລະ ຄວາມຊັກຊ້າໃນການສົ່ງບົດລາຍງານການກວດສອບທາງດ້ານການເງິນ.

## II. ດັດສະນີແຜນງານການສະໜອງເງິນກູ້/ການຊ່ວຍເຫຼືອລ້າ ແລະ ບໍ່ແມ່ນການກູ້ຢືມ

8. ອີງຕາມທິດທາງການວາງແຜນຊີ້ນຳຂອງປະທານໃນເດືອນ ພຶດສະພາ ປີ 2008, ດັດສະນີໂຕເລກຈຳນວນເງິນຊ່ວຍລ້າຂອງກອງທຶນພັດທະນາອາຊີແມ່ນປະມານ 55 ລ້ານໂດລາສະຫະລັດຕໍ່ປີໃນນັ້ນ 20% ທີ່ຈັດສັນໄວ້ສຳລັບໂຄງການອານຸພາກພື້ນທີ່ຈະນຳໄປໃຊ້ໃນການສ້າງໂຄງການຊ່ວຍເຫຼືອລ້າສະໜັບສະໜູນ ໂດຍກອງທຶນພັດທະນາອາຊີສຳລັບ ປີ 2009-2011. ທັງນີ້ແມ່ນອີງໃສ່ລະບົບການຈັດສັນທີ່ອີງໃສ່ຜົນຂອງການດຳເນີນງານເປັນຫຼັກ. ດັດສະນີໂຕເລກເງິນກູ້ ແລະ ເງິນຊ່ວຍເຫຼືອລ້າແມ່ນສອດຄ່ອງກັບການປະເມີນຮ່ວມຂອງຄວາມຍືນຍົງຂອງດ້ານໜີ້ສິນ, ການກູ້ຢືມຂອງລັດຖະບານ ແລະ ຄວາມສາມາດໃນການ ບໍລິຫານ, ແລະ ການນຳໃຊ້ຂອງເງິນຊ່ວຍເຫຼືອລ້າ. ການສືບຕໍ່ຂະຫຍາຍໂຕຢ່າງແຂງແຮງ ແລະ ສັດສ່ວນລາຍຮັບຕໍ່ຍອດຜະລິດຕະພັນພາຍໃນປະເທດທີ່ສູງຂຶ້ນ ຈະຊ່ວຍປັບປຸງຄວາມສາມາດຂອງລັດຖະບານໃນການບໍລິ ຫານໃນໄລຍະສັ້ນ. ໃນປັດຈຸບັນ ສປປ ລາວ ແມ່ນຢູ່ໃນເງື່ອນໄຂທີ່ໄດ້ຮັບການຊ່ວຍເຫຼືອລ້າ 100% ຂອງກອງທຶນພັດທະນາອາຊີ.

9. ແຜນງານການເຮັດວຽກດ້ານເສດຖະກິດ ແລະ ຂະແໜງການສ້າງພື້ນຖານສຳລັບການຊ່ວຍເຫຼືອຂອງເອດີບີ ໃນການປະຕິຮູບນະໂຍບາຍ, ການສ້າງຄວາມສາມາດ, ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ສະຖາບັນ. ເມື່ອພິຈາລະນາການດຳເນີນງານຂອງການໃຫ້ກູ້ຢືມ ແລະ ເງິນຊ່ວຍເຫຼືອລ້າທີ່ກຳລັງປະຕິບັດ ແລະ ສະເໜີ ແລະ ຄວາມຮຽກຮ້ອງຕ້ອງການຂອງການສະໜັບສະໜູນໃນການພັດທະນາຄວາມສາມາດ ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ສະຖາບັນ, ເອດີບີກຳລັງດຳເນີນຕາມເສັ້ນທາງດັ່ງກ່າວທີ່ລວມເອົາທາງເລືອກຂອງ

---

[6] ໃນປີ 2007, ເອດີບີ ເບີກຖອນ ຈຳນວນ 76.63 ລ້ານໂດລາສະຫະລັດ, ໃນນັ້ນ 0.91 ລ້ານ ແມ່ນນອນໃນແຫຼ່ງທຶນປົກກະຕິ, 73.02 ລ້ານ ແຫຼ່ງເງິນກູ້ກອງທຶນພັດທະນາອາຊີ, ແລະ 2.7 ລ້ານ ແມ່ນການຊ່ວຍເຫຼືອລ້າຈາກກອງທຶນພັດທະນາອາຊີ.

ແນວທາງທີ່ເປັນອັນດຽວກັນໃນການດຳເນີນງານການຊ່ວຍເຫຼືອດ້ານວິຊາການ ການພັດທະນາຄວາມສາມາດ (CDTA). ໂດຍສອດຄ່ອງກັບນະໂຍບາຍຂອງເອດີບີທີ່ມອບສິດການບໍລິຫານການຊ່ວຍເຫຼືອລ້າວິຊາການໃຫ້ແກ່ບັນດາຜູ້ຮັບຜິດຊອບໂຄງການ [7] , ການປະເມີນຄວາມສາມາດຂອງບັນດາຜູ້ຮັບຜິດຊອບໂຄງການ ແລະ ບັນດາຜູ້ຈັດຕັ້ງປະຕິບັດໂຄງການຈະໄດ້ມີການຈັດຂຶ້ນ ແລະ ການລິເລີ່ມທີ່ມີຄວາມຈຳເປັນຈະມີການນຳສະເໜີຕາມຄວາມເໝາະສົມ.

10. ແຜນງານການໃຫ້ກູ້ຢືມ, ເງິນຊ່ວຍເຫຼືອລ້າ, ແລະ ບໍ່ແມ່ນເງິນກູ້ສຳລັບປີ 2009-2011 ປະກອບດ້ວຍ 8 ໂຄງການກອງທຶນພັດທະນາອາຊີສຳລັບປະເທດ (139 ລ້ານໂດລາ), ແລະ 16 ໂຄງການອານຸພາກພື້ນແມ່ນ້ຳຂອງ (352 ລ້ານໂດລາສະຫະລັດ) ທີ່ລວມທັງ 4 ການດຳເນີນງານຂອງພາກລັດເອກະຊົນທີ່ສະໜອງທຶນຈາກແຫຼ່ງທຶນປົກກະຕິ ຈຳນວນ 181 ລ້ານໂດລາ (OCR) (ຕາຕະລາງ1). ນອກນັ້ນຍັງມີການປະ ກອບສ່ວນໂດຍ 18 ໂຄງການການຊ່ວຍເຫຼືອດ້ານວິຊາການສຳລັບປະເທດຈຳນວນ 11 ລ້ານໂດລາສະຫະລັດຫຼືປະມານ 3.6 ລ້ານໂດລາຕໍ່ປີແລະ 17 ໂຄງການຊ່ວຍເຫຼືອດ້ານວິຊາການອານຸພາກພື້ນແມ່ນ້ຳຂອງ ທີ່ກວມເອົາສ່ວນແບ່ງຈາກປະເທດອານຸພາກພື້ນແມ່ນ້ຳຂອງຈຳນວນ 15.2 ລ້ານໂດລາ (ຕາຕະລາງ 2). ການຈັດສັນຕາມຂະແໜງການໂດຍລວມສຳລັບດັດສະນີແຜນງານການໃຫ້ເງິນຊ່ວຍເຫຼືອລ້າສຳລັບປະເທດໄດ້ຈັດໃຫ້ຂະແໜງກະສິກຳ ແລະ ຊັບພະຍາກອນທຳມະຊາດ 12.5% ຂະແໜງສຶກ ສາ 37.5%; ພະລັງງານ 12.5%; ສຸກຂະພາບ, ໂພສະນາການ, ການປົກປ້ອງສັງ 12.5%; ອຸດສະຫະກຳແລະການຄ້າ 7.7%; ກົດ ໝາຍ, ການຄຸ້ມຄອງເສດຖະກິດ, ນະໂຍບາຍພາກລັດ 11.5%, ແລະ ລະບົບນ້ຳປະປາ, ສຸກຂະລະນາໄມ ແລະການຄຸ້ມຄອງຂີ້ເຫຍື້ອ 12.5%; ແລະ ການຂົນສົ່ງ 12.5%. ສຳລັບການດຳເນີນງານທີ່ບໍ່ແມ່ນເງິນກູ້, ແມ່ນໄດ້ໃຫ້ບູລິມະສິດແກ່ໂຄງການການຊ່ວຍເຫຼືອການກະກຽມໂຄງການ(PPTA).

11. ເພື່ອທີ່ຈະຕອບສະໜອງຄວາມຮຽກຮ້ອງຕ້ອງການແຫຼ່ງທຶນເອດີບີ (ເພີ້ມເຕີມໃສ່ການຈັດສັນທີ່ວາງໄວ້ ສຳລັບປະເທດ ແລະ ການຈັດສັນພາກພື້ນຂອງກອງທຶນພັດທະນາອາຊີ) ຈະລະດົມການດຳເນີນງານແບບຮ່ວມທຶນໃຫ້ສູງຂຶ້ນ, ກອງທຶນພັດທະນາເອດີບີ ບໍລິຫານໂດຍເອດີບີ ແລະ ການລິເລີ້ມພິເສດ, ແລະ ການຮ່ວມມືກັບພາກລັດເອກະຊົນ; ຂະຫຍາຍການນຳໃຊ້ເຄື່ອງມືດ້ານການເງິນອື່ນໆທີ່ລວມທັງກອງທຶນພັດທະນາອາຊີເງື່ອນໄຂສູງ[8]; ແລະ ນຳໃຊ້ແຫຼ່ງທຶນປົກກະຕິ[9] ໂດຍມີການເລືອກເຟັ້ນສຳລັບໂຄງການພະລັງງານໄຟຟ້າ ແລະ ການດຳເນີນງານຂະແໜງເອກະຊົນ. ບັນດາໂຄງການການຮ່ວມມືພາກພື້ນທີ່ ສປປ ລາວ ເຂົ້າຮ່ວມຈະເຮັດໃຫ້ສາມາດເຂົ້າຫາແຫຼ່ງທຶນຂອງກອງທຶນພັດທະນາອາຊີນອກເໜືອຈາກການຈັດສັນຂອງກອງທຶນພັດທະນາໃນປະເທດ. ໂດຍອີງຕາມແຜນການຈັດຕັ້ງປະຕິບັດສະບັບທົບທວນ

---

[7] ການທົບທວນຂອງການຄວບຄຸມຂັ້ນຕອນ ແລະ ຄຸນນະພາບຂອງການດຳເນີນງານການຊ່ວຍເຫຼືອດ້ານວິຊາການທີ່ໄດ້ວາງໃນ ເອດີບີ. 2007. ຜົນໄດ້ຮັບຫຼາຍຂຶ້ນຂອງແຜນງານການຊ່ວຍເຫຼືອດ້ານວິຊາການຂອງເອດີບີ. ມະນີລາ.

[8]. ເງິນກູ້ເງື່ອນໄຂສູງຂອງກອງທຶນພັດທະນາອາຊີທີ່ສະໜອງຂັ້ນຕອນຂອງເງື່ອນໄຂຫຼາຍກ່ວາເງິນກູ້ຈາກແຫຼ່ງທຶນປົກກະຕິ, ໂດຍຜ່ານອັດຕາດອກເບ້ຍທີ່ຕ່ຳ ແລະ ໄລຍະເວລາປອດດອກເບ້ຍແມ່ນຍາວນານກວ່າ. ເງິນກູ້ເງື່ອນໄຂສູງຂອງກອງທຶນພັດທະນາອາຊີແມ່ນຄ້າຍຄືກັບແຫຼ່ງທຶນເງື່ອນໄຂສູງຂອງການຊ່ວຍເຫຼືອການພັດທະນາສາກົນຂອງທະນາຄານໂລກ(IDA).

[9] ເອດີບີຈັດໃຫ້ ສປປ ລາວຢູ່ໃນໝວດ A (ສະເພາະ ກອງທຶນພັດທະນາອາຊີເທົ່ານັ້ນ ADF). ປະໂຫຍດຂອງແຫຼ່ງທຶນປົກກະຕິທີ່ຖືວ່າເປັນທຶນເພີ່ມເຕີມຂອງການສະໜອງທຶນໃຫ້ບັນດາໂຄງການພັດທະນາທີ່ສ້າງລາຍຮັບທີ່ເປັນບູລິມະສິດ ທີ່ສາມາດຊຳລະເງິນກູ້ຄືນໄດ້. ການລະດົມທຶນຂອງແຫຼ່ງທຶນປົກກະຕິແມ່ນອີງໃສ່ຄວາມກຽມພ້ອມ, ຄວາມສາມາດໃນການຮັກສາຄວາມໝັ້ນຄົງທາງດ້ານການເງິນ, ແລະ ຄວາມຮຽກຮ້ອງຕ້ອງການທີ່ຈຳເປັນຂອງລັດຖະບານ.

ຄືນ, ບັດດາໂຄງການ ການຮ່ວມມືຈະໄດ້ຮັບການສະໜອງທຶນຈາກດັດສະນີທຶນພາກພື້ນທີ່ຂຶ້ນແຜນໄວ້ ຫຼື ວ່າ ດັດສະນີທຶນທີ່ຂຶ້ນໄວ້ສຳລັບສປປ ລາວ. ທຸກໆຈຳນວນໜຶ່ງໂດລາສະຫະລັດທີ່ສະໜອງຈາກກອງທຶນພັດທະນາຈະເພີ້ມເຕີມ ໂດຍ 0.5 ເຊັນຈາກແນວທາງທີ່ອີງໃສ່ຜົນຂອງການດຳເນີນງານເປັນຫຼັກຂອງປະເທດຂອງ ສປປ ລາວ. ການປະກອບສ່ວນທີ່ຕ້ອງການຈາກແນວທາງທີ່ອີງໃສ່ຜົນຂອງການດຳເນີນງານເປັນຫຼັກ (PBA) ທີ່ມີໄລຍະເວລາ 2 ປີ ຈະອີງໃສ່ການກຳນົດເພດານສູງສຸດແມ່ນ 20%, ການສະໜອງທຶນທີ່ອີງໃສ່ແນວທາງທີ່ອີງໃສ່ຜົນຂອງການດຳເນີນງານເປັນຫຼັກ (PBA) ທີ່ເກີນກວ່ານັ້ນຈະບໍ່ແມ່ນຂໍ້ບັງຄັບຕໍ່ໄປ.

## III. ສັງລວມການປ່ຽນແປງຕໍ່ແຜນງານການສະໜອງເງິນກູ້/ການຊ່ວຍເຫຼືອລ້າແລະບໍ່ແມ່ນ ການກູ້ຢືມ

12. ການດັດສົມຂອງແຜນງານ 2008 ແລະ ການປ່ຽນແປງຂອງແຜນການ 2009-2011 ໄດ້ມີການ ປຶກສາຫາລື ແລະ ມີຄວາມເຂົ້າໃຈກັບລັດຖະບານ ແລະ ບັນດາຜູ້ຮ່ວມງານໃນເວລາທີ່ມີການຢ້ຽມຢາມຂອງຄະນະສ້າງແຜນງານ 2008. ແຜນງານທີ່ສະເໜີແມ່ນສອດຄ່ອງກັບເສົາຄ້ຳຍຸດທະສາດຂອງຍຸດທະສາດ ແລະ ແຜນງານການຮ່ວມມືກັບປະເທດ. ການດັດສົມແລະການປ່ຽນແປງຕໍ່ແຜນງານການໃຫ້ກູ້ຢືມພາກພື້ນ ແລະ ບໍ່ແມ່ນເງິນກູ້ແມ່ນສອດຄ່ອງກັບແຜນການການດຳເນີນງານການຮ່ວມມືອານຸພາກພື້ນແມ່ນ້ຳຂອງ.

### ກ. ການດັດສົມແຜນງານ ປີ 2008

13. ກິດຈະກຳແຜນງານການໃຫ້ກູ້ຢືມ 2008 ແລະ ການຊ່ວຍເຫຼືອລ້າທີ່ໄດ້ວາງໄວ້ໃນແຜນການການດຳເນີນງານຂອງປະເທດສະບັບກ່ອນແມ່ນກຳລັງດຳເນີນໄປດ້ວຍດີ. ຕາມຄວາມຮຽກຮ້ອງຕ້ອງການຂອງລັດຖະບານ ແລະ ອີງໃສ່ຄວາມກຽມພ້ອມໂຄງການ ແລະ ການສະໜອງທຶນເພີ້ມເຕີມຈາກກອງທຶນພັດທະນາອາຊີ, ແຜນງານການພັດທະນາຂະແໜງກະສິກຳທີ່ໄດ້ຂຶ້ນແຜນໄວ້ ສຳລັບປີ 2009 ໄດ້ຈັດຕັ້ງປະບັດໄປກ່ອນໃນປີ 2008 ແລະ ປ່ຽນຊື່ເປັນໂຄງການສົ່ງເສີມການເພີ່ມຜົນຜະລິດ ແລະ ການຄຸ້ມຄອງແຫຼ່ງຊັບພະຍາກອນທຳມະ ຊາດແບບຍືນຍົງ (SNRMPEP). ການດັດສົມຕໍ່ການເນີນງານທີ່ບໍ່ແມ່ນເງິນກູ້ເພື່ອໃຫ້ສອດຄ່ອງກັບຜົນຂອງການດຳເນີນງານຂອງການປະຕິບັດທີ່ໃຫ້ບູລິມະສິດສຳລັບການດຳເນີນງານທີ່ບໍ່ແມ່ນເງິນກູ້ໃນຕົ້ນປີ 2008. ການປ່ຽນແປງລວມມີ (i) ສະໜອງທຶນເພີ້ມໃຫ້ແກ່ການຊ່ວຍເຫຼືອການໃຫ້ຄຳແນະນຳທາງດ້ານວິຊາການການປະເມີນຄວາມຕ້ອງການຂະແໜງກະສິກຳ ແລະ ຊັບພະຍາກອນທຳມະຊາດ ແລະ ໂຄງການຍ່ອຍ ເພື່ອທີ່ ຈະກະກຽມໂຄງການສົ່ງເສີມການຜະລິດ ແລະ ການຄຸ້ມຄອງແຫຼ່ງຊັບພະຍາກອນທຳມຊາດແບບຍືນຍົງ (SNRMPEP), (ii) ການເຊື່ອມເຂົ້າກັນຂອງການຊ່ວຍເຫຼືອວິຊາການການກະກຽມໂຄງການເພື່ອທີ່ຈະກະກຽມໂຄງການ (PPTA) ສ້າງຄວາມເຂັ້ມແຂງໃຫ້ແກ່ການສຶກສາຂັ້ນສູງໃນປີ 2009, ການຊ່ວຍເຫຼືອວິຊາການການພັດທະນາຄວາມສາມາດ (CDTA) ສຳລັບການສ້າງຄວາມສາມາດໃຫ້ແກ່ ສປປ ລາວ ໃນການພັດທະນາເຂດເສດຖະກິດພິເສດ, ແລະ ການຊ່ວຍເຫຼືອວິຊາການການກະກຽມໂຄງການ (PPTA) ທີ່ສະໜອງທຶນໂດຍກອງທຶນສຳລັບການປ່ຽນແປງຂອງສະພາບອາກາດເພື່ອທີ່ຈະກະກຽມໂຄງການພັດທະນາໄຟຟ້າຂະໜາດກາງ ແລະ ນ້ອຍໃນປີ 2010. ແຜນງານການໃຫ້ກູ້ຢືມ ແລະ ບໍ່ແມ່ນເງິນກູ້ຢືມລ້າສຸດສຳລັບປີ 2008 ແມ່ນຢູ່ໃນຕາຕະລາງ 4 ແລະ 5.

## ຂ. ສັງລວມການປ່ຽນແປງຕໍ່ແຜນງານ 2009-2011

14. ການປ່ຽນແປງຕໍ່ແຜນງານເງິນກູ້ ແລະ ບໍ່ແມ່ນເງິນກູ້ສໍາລັບປີ 2009-2010 ຂອງແຜນການເນີນງານ ທີ່ຜ່ານມາ: (i) ຍົກຍ້າຍແຜນງານການພັດທະນາຂະແໜງກະສິກໍາຈາກປີ 2009 ມາໃສ່ປີ 2008 ແລະ ປ່ຽນຊື່ເປັນ SNRMPEP, ແລະ ຍົກຍ້າຍແຜນງານການພັດທະນາຂະແໜງສາທາຈາກ ປີ 2010 ມາໃສ່ປີ 2009; (ii) ລວມເອົາໂຄງການການສ້າງຄວາມເຂັ້ມແຂງໃຫ້ຂະແໜງການສຶກສາຂັ້ນສູງໄວ້ໃນປີ 2009; (iii) ລວມເອົາໂຄງການພັດທະນາພື້ນຖານໂຄງລ່າງເຂດຊົນນະບົດ ແລະ ການພັດທະນາພະລັງງານໄຟຟ້າຂະ ໜາດກາງ ແລະ ນ້ອຍ ໄວ້ໃນປີ 2010. ໂຄງການໃໝ່ສໍາລັບປີ 2011 ລວມມີການຝຶກອົບຮົມດ້ານວິຊາຊີບ ແລະ ການສຶກສາວິຊາຊ່າງເຕັກນິກ, ການຄຸ້ມຄອງຂີ້ເຫຍື້ອ ແລະ ສະພາບແວດລ້ອມທີ່ສະອາດ, ແລະ ໂຄງການພັດທະນາຂະແໜງຂົນສົ່ງ. ແຜນງານການໃຫ້ເງິນກູ້ ແລະ ບໍ່ແມ່ນເງິນກູ້ສໍາລັບປີ 2009-2011 ລ້າສຸດແມ່ນຢູ່ໃນຕາຕະລາງ 1.

15. ການປ່ຽນແປງຕໍ່ແຜນງານທີ່ບໍ່ແມ່ນເງິນກູ້ 2009-2010 ລວມມີ: (i) ຍົກຍ້າຍການຊ່ວຍເຫຼືອວິ ຊາການການກະກຽມໂຄງການພັດທະນາຂະແໜງຄົມມະນາຄົມຈາກປີ 2010 ມາໃສ່ປີ 2009; (ii) ລວມເອົາການຊ່ວຍເຫຼືອວິຊາການການກະກຽມໂຄງການໃນປີ 2009 ສໍາລັບການກະກຽມໂຄງການພັດທະນາພື້ນຖານໂຄງລ່າງເຂດຊົນນະບົດ, ການຊ່ວຍເຫຼືອວິຊາການການກະກຽມໂຄງການສໍາລັບການປະເມີນຂະແໜງການເງິນ ແລະ ການສໍາຫຼວດຕະຫຼາດແຮງງານ, CDTA ສໍາລັບການສ້າງຄວາມເຂັ້ມແຂງຂອງກົມສະຖິຕິ, ກະຊວງແຜນການ ແລະ ການລົງທຶນ; (iii) ປ່ຽນຊື່ການຊ່ວຍເຫຼືອການໃຫ້ຄໍາແນະນໍາທາງດ້ານວິຊາການ (ADTA) ສໍາລັບຂະແໜງເອກະຊົນ ແລະ ການພັດທະນາຂະແໜງການເງິນທີ່ຂຶ້ນແຜນໄວ້ສໍາລັບປີ 2010 ທີ່ຢູ່ໃນແຜນການດໍາເນີນງານ (COBP) ສະບັບກ່ອນເປັນການຊ່ວຍເຫຼືອວິຊາການການກະກຽມໂຄງການ (PPTA) ແຜນງານການພັດທະນາຂະແໜງການເງິນໃນປີ 2010; (iv) ລວມເອົາການຊ່ວຍເຫຼືອວິຊາການການກະກຽມໂຄງການ (PPTA) ສໍາລັບການຝຶກອົບຮົມວິຊາຊີບ ແລະ ການສຶກສາດ້ານເຕັນນິກ, ແລະການພັດທະນາພະລັງງານທີ່ສາມາດທົດແທນໄດ້ສໍາລັບ ປີ 2010. ແຜນງານທີ່ບໍ່ແມ່ນເງິນກູ້ ປີ 2011 ລວມເອົາການຊ່ວຍເຫຼືອວິຊາການການກະກຽມໂຄງການ (PPTA) ການພັດທະນາຊົນນະບົດ, ການສົ່ງໄຟຟ້າ, ລະບົບນໍ້າປະປາ ແລະແຜນງານຂະແໜງສຸກຂະອານາໄມ, ການປັບປຸງພື້ນຖານໂຄງລ່າງສໍາລັບການພັດທະນາການທ່ອງທ່ຽວ, ແລະ CDTA ສໍາລັບການສ້າງຄວາມເຂັ້ມແຂງຂອງອົງການກວດສອບແຫ່ງລັດ. ແຜນງານການສະໜັບສະໜູນທີ່ບໍ່ແມ່ນເງິນກູ້ສະບັບປັບປຸງໃໝ່ແມ່ນຢູ່ໃນຕາຕະລາງ 2.

## IV. ດັດສະນີຄວາມຕ້ອງການທຶນຮອນພາຍໃນຕາມແຜນ

16. ການດໍາເນີນງານທີ່ເພີ່ມຂຶ້ນສອງເທົ່າໃນ ສປປ ລາວ ທີ່ສະໜອງທຶນໂດຍການຈັດສັນຂອງກອງທຶນພັດທະນາອາຊີຈະສົ່ງຜົນເຮັດໃຫ້ພະນັກງານມີຄວາມຮັບຜິດຊອບຫຼາຍຂຶ້ນ, ຄວາມສາມາດ, ແລະ ຄວາມສາມາດທີ່ຫຼາກຫຼາຍເພື່ອທີ່ຈະດໍາເນີນການຈັດຕັ້ງປະຕິບັດແຜນງານ 2009-2011 ໃຫ້ໄດ້ຮັບໝາກຜົນ. ຈໍານວນພະນັກງານຫຼາຍຂຶ້ນພ້ອມກັບຄວາມສາມາດທີ່ເໝາະສົມຂອງພະນັກງານແມ່ນຈໍາເປັນຕ້ອງໄດ້ຖືກພິຈາລະນາ, ຫ້ອງການເອດີບີປະຈໍາ ສປປ ລາວຈະປັບປຸງດັດສົມຊັບພະຍາກອນມະນຸດທີ່ມີໃນປັດຈຸບັນເພື່ອໃຫ້ແທດເໝາະກັບການດໍາເນີນງານທີ່ຫຼາຍຂຶ້ນໃນ ສປປ

ລາວ. ຄວາມພະຍາຍາມທີ່ຕໍ່ເນື່ອງຂອງພະນັກງານແຕ່ລະຂະແໜງການທີ່ຢູ່ໃນສຳນັກງານໃຫຍ່ ແລະ ປະກອບສ່ວນຢ່າງມີປະສິດທິຜົນຂອງບັນດາພະນັກງານຢູ່ສູນກາງແມ່ນມີຄວາມສຳຄັນໃນການຈັດຕັ້ງປະຕິບັດແຜນງານຍຸດທະສາດຮ່ວມມືກັບປະເທດ ແລະ ການຂະ ຫຍາຍຕົວຂອງບັນດາຂະແໜງການຕ່າງໆ.

## V. ການຕິດຕາມໂດຍອີງໃສ່ຜົນຂອງການດຳເນີນງານພື້ນຖານ

17. ລັດຖະບານນຳພາຈັດຕັ້ງປະຕິບັດການປະສານງານຂອງການຊ່ວຍເຫຼືອທີ່ໄດ້ຊີ້ນຳຢູ່ໃນຖະແຫຼງການວຽງຈັນກ່ຽວກັບປະສິດທິພາບຂອງການຊ່ວຍເຫຼືອ ແລະ ແຜນງານການປະຕິບັດງານທີ່ໄດ້ໝູນໃຊ້ລະບຽບ/ນະໂຍບາຍຂອງຖະແຫຼງການປາຣີໃນການວາງເປົ້າໝາຍຂອງ ສປປ ລາວ ແລະ ຈຸດປະສົງທີ່ພົວພັນກັບຮອບວຽນຂອງແຜນງານປະຕິບັດ ແລະ ແຜນການຕິດຕາມຢ່າງໃກ້ຊິດ. ການຈັດຕັ້ງປະຕິບັດ 72 ແຜນການຂອງແຜນການປະຕິບັດງານຂອງປະເທດຈະຊ່ວຍໃຫ້ການຈັດຕັ້ງປະຕິບັດແຜນງານການພັດທະນາເສດຖະກິດສັງຄົມ 5 ປີຄັ້ງທີ 6 ໄດ້ຮັບໝາກຜົນໄວ້ຂື້ນ. ລັດຖະບານໄດ້ວາງເປົ້າໝາຍເພື່ອບັນລຸເປົ້າໝາຍພັດທະນາສະຫັດສະຫວັດ ກ່ອນປີ 2015 ແລະ ຈະນຳພາປະເທດຫຼຸດພົ້ນອອກຈາກຖານະປະເທດດ້ອຍພັດທະນາພາຍໃນປີ 2020, ແຜນງານການພັດທະນາເສດຖະກິດສັງຄົມ 5 ປີຄັ້ງທີ 6 ຍັງຈະສືບຕໍ່ຊ່ວຍຫຼຸດຜ່ອນຄວາມທຸກຍາກ ແລະ ເສີມຂະຫຍາຍການພັດທະນາສັງຄົມຢ່າງຮີບດ່ວນ.

18. ການຈັດຕັ້ງປະຕິບັດຍຸດທະສາດການຮ່ວມມືກັບປະເທດແມ່ນມີເປົ້າໝາຍທີ່ຈະຊ່ວຍເຫຼືອລັດຖະບານບັນລຸການລິເລີ່ມແຜນພັດທະນາເສດຖະກິດສັງຄົມຫ້າປີຄັ້ງທີ່ 6 (NSEDP6) ແລະ ເປົ້າໝາຍໃນການປັບປຸງ ຄຸນນະພາບ ແລະ ການເຂົ້າເຖິງການສຶກສາຂັ້ນພື້ນຖານ ແລະ ການບໍລິການດ້ານສາທາ, ກະຕຸ້ນການຫັນປ່ຽນການຜະລິດໃຫ້ກາຍເປັນສິນຄ້າ, ແລະ ການປັບປຸງສະພາບແວດລ້ອມທີ່ເອື້ອອຳນວຍສຳລັບການພັດທະນາຂະ ແໜງເອກະຊົນ. ການຈັດຕັ້ງປະຕິບັດແຜນແມ່ນໄດ້ມີການຕິດຕາມໂດຍຜ່ານການອອກແບບໂຄງການ ແລະ ແຜນງານການຕິດຕາມ ແລະ ຄະນະທົບທວນໂຄງການ. ຜົນຂອງການດຳເນີນງານຂອງຂະແໜງການຈະຖືກ ທົບທວນໃນໄລຍະເວລາທີ່ມີການທົບທວນຂະແໜງການຂອງປະເທດ. ຄວາມຄືບໜ້າປະຈຳປີຂອງແຜນງານຍຸດທະສາດການຮ່ວມມືກັບປະເທດຈະຖືກບັນທຶກ ແລະ ຕິດຕາມໂດຍຜ່ານແຜນງານຜົນຂອງການດຳເນີນງານ, ຄະນະເຮັດວຽກທົບທວນຂະແໜງການຂອງປະເທດ, ຄະນະເຮັດວຽກແຜນງານຂອງປະເທດ, ແລະ ຄະນະເຮັດວຽກປະເມີນຜົນຂອງການດຳເນີນງານຂອງປະເທດ. ຄວາມຄືບໜ້າກຳລັງຈັດຕັ້ງປະຕິບັດເພື່ອບັນລຸຕາມເປົ້າໝາຍຂອງແຜນງານຜົນຂອງການດຳເນີນງານໃນແຜນງານຍຸດທະສາດຮ່ວມມືກັບປະເທດ. ໃນຂະນະທີ່ແນວທາງ ແລະ ແຜນງານຜົນຂອງກາດຳເນີນງານຍັງຄົງຖືກນຳໃຊ້, ການທົບທວນລະອຽດຂອງເຄິ່ງໄລຍະຂອງແຜນງານຍຸດທະສາດຮ່ວມມືກັບປະເທດຈະມີຂື້ນໃນປີ 2009.

ຕາຕະລາງ 1: ດັດສະນີແຜນການຜະລິດຕະພັນຂອງການຊ່ວຍເຫຼືອທີ່ເປັນເງິນກູ້/ການຊ່ວຍເຫຼືອລ້າ, 2009-2011

| ຂະແໜງ<br>ໂຄງການ/ແຜນງານ<br>ຊື່ໂຄງການ | ຈັດປະເພດ<br>ການວາງເປົ້າ<br>ໝາຍ | ບູລິມະສິດ<br>ຕາມທິວຂໍ້<br>ພັດທະນາ | ພະແນກ | ປີທີ່ມີການ<br>ຊ່ວຍເຫຼືອ<br>ກະກຽມ<br>ໂຄງການ | ລວມ | ມູນຄ່າ (ລ້ານ$) | | | | |
|---|---|---|---|---|---|---|---|---|---|---|
| | | | | | | ADB | | | ລັດຖະ<br>ບານ | ມີການ<br>ຮ່ວມທຶນ |
| | | | | | | OCR | ADF | Total | | |
| **2009 ທຶນກູ້ຢືມທີ່ແນ່ນອນ/ຊ່ວຍເຫຼືອລ້າ** | | | | | | | | | | |
| **ລະດັບຊາດ** | | | | | | | | | | |
| **ການສຶກສາ** | | | | | | | | | | |
| 1. ໂຄງການການສ້າງຄວາມເຂັ້ມແຂງໃຫ້ການສຶກສາຂັ້ນສູງ | GI | ISD, GAD | SESS | 2008 | 32.0 | 0.0 | 22.0 | 22.0 | 2.0 | 8.0 (Aus/Kor Rep.) |
| **ສາທາລະນະສຸກ, ສຸກຂະອານາໄມ, ແລະ ການປົກປ້ອງສັງຄົມ** | | | | | | | | | | |
| 2. ແຜນງານການພັດທະນາຂະແໜງສາທາ | GI | ISD, GAD | SESS | 2008 | 32.0 | 0.0 | 22.0 | 22.0 | 2.0 | 8.0 (Aus/Jap) |
| ລວມ | | | | | **64.0** | **0.0** | **44.0** | **44.0** | **4.0** | **16.0** |
| **ສຳຮອງແຫ່ງຊາດ** | | | | | | | | | | |
| **ພະລັງງານ** | | | | | | | | | | |
| 1. ໂຄງການພັດທະນາພະລັງງານໄຟຟ້າຂະໜາດກາງ ແລະ ນ້ອຍ(ADF –ເງື່ອນໄຂສູງ) | TI | ECO | SEID | 2008 | 20.0 | 0.0 | 5.0ຓ | 5.0 | 1.0 | 14.0 (Jap/Kor Rep., Carbon Credit) |
| **ອານຸພາກພື້ນ** | | | | | | | | | | |
| **ພະລັງງານ** | | | | | | | | | | |
| 1. ສາຍສົ່ງແຮງສູງພາກເໜືອ ອານຸພາກພື້ນແມ່ນ້ຳຂອງ | TI | ECO, RCI | SEID | 2006 | 25.0 | 0.0 | 20.0 | 20.0 | 5.0 | 0.0 |
| 2. ໂຄງການພະລັງງານໄຟຟ້ານ້ຳງື່ມ 3 ອານຸພາກ | TI | ECO, RCI | SEID, | 2006 | 52.0 | 47.0 | 0.0 | 47.0 | 5.0 | 0.0 |

| ຂະແໜງ<br>ໂຄງການ/ແຜນງານ<br>ຊື່ໂຄງການ | ຈັດປະເພດ<br>ການວາງເປົ້າ<br>ໝາຍ | ບູລິມະສິດ<br>ຕາມຫົວຂໍ້<br>ພັດທະນາ | ພະແນກ | ປີທີ່ມີການ<br>ຊ່ວຍເຫຼືອ<br>ກະກຽມ<br>ໂຄງການ | ມູນຄ່າ (ລ້ານ$) | | | | | |
|---|---|---|---|---|---|---|---|---|---|---|
| | | | | | ລວມ | ADB | | | ລັດຖະ<br>ບານ | ມີການ<br>ຮ່ວມທຶນ |
| | | | | | | OCR | ADF | Total | | |
| ພື້ນແມ່ນ້ຳຂອງ | | | PSIF2 | | | | | | | |
| **ສາທາລະນະສຸກ, ສຸກຂະອານາໄມ, ແລະ ການປົກປ້ອງສັງຄົມ** | | | | | | | | | | |
| 3.ສ້າງຄວາມສາມາດໃຫ້ແກ່ການປ້ອງກັນໂລກ HIV/AIDS ອະນຸພາກພື້ນແມ່ນ້ຳຂອງ | TI | ISD, GAD, RCI | SESS | 2008 | 5.5 | 0.0 | 5.0 | 5.0 | 0.5 | 0.0 |
| **ຄົມມະນາຄົມ ແລະ ຂົນສົ່ງ** | | | | | | | | | | |
| 4. ເງິນຊ່ວຍເຫຼືອລ້າເພີ້ມເຕີມສຳລັບໂຄງການປັບປຸງຕາໜ່າງຂົນສົ່ງພາກເໜືອອຸພາກພື້ນແມ່ນ້ຳຂອງ | GI | ECO, RCI | SEID | 2007 | 16.5 | 0.0 | 15.0 | 15.0 | 1.5 | 0.0 |
| 5. ການປັບປຸງຕາໜ່າງຂົນສົ່ງພາກເໜືອອຸພາກພື້ນແມ່ນ້ຳຂອງໂຄງການ 2 | GI | ECO, RCI | SEID | 2008 | 40.0 | 0.0 | 20.0 | 20.0 | 2.0 | 18.0 |
| **ການຄຸ້ມຄອງຂີ້ເຫຍື້ອ, ນ້ຳປະປາ, ສຸກຂະອານາໄມ** | | | | | | | | | | |
| 6. ໂຄງການສຸກຂະອານາໄມ ແລະ ນ້ຳປະປາອານຸພາກພພື້ນແມ່ນ້ຳຂອງ | GI | ECO, GAD, ISD, RCI | SESS | 2008 | 8.0 | 0.0 | 1.0 | 1.0 | 0.0 | 7.0 |
| ລວມ | | | | | **147.0** | **47.0** | **61.0** | **108.0** | **14.0** | **25.0** |
| **ລວມແຫ່ງຊາດ ແລະ ອານຸພາກພື້ນ** | | | | | **211.0** | **47.0** | **105.0** | **152.0** | **18.0** | **41.0** |
| **2010 ທຶນກູ້ຢືມທີ່ແນ່ນອນ/ຊ່ວຍເຫຼືອລ້າ** | | | | | | | | | | |
| **ລະດັບຊາດ** | | | | | | | | | | |
| **ກະສິກຳ ແລະ ຊັບພະຍາກອນທຳມະຊາດ** | | | | | | | | | | |
| 1. ການພັດທະນາພື້ນຖານໂຄງລ່າງເຂດຊົນນະບົດ | GI | ISD, ENV | SEAE | 2009 | 34.0 | 0.0 | 24.0 | 24.0 | 2.0 | 8.0 (Fra/Ger) |
| **ການສຶກສາ** | | | | | | | | | | |

| ຂະແໜງ<br>ໂຄງການ/ແຜນງານ<br>ຊື່ໂຄງການ | ຈັດປະເພດ<br>ການວາງເປົ້າ<br>ໝາຍ | ບູລິມະສິດ<br>ຕາມຫົວຂໍ້<br>ພັດທະນາ | ພະແນກ | ປີທີ່ມີການ<br>ຊ່ວຍເຫຼືອ<br>ກະກຽມ<br>ໂຄງການ | ລວມ | ມູນຄ່າ (ລ້ານ$) | | | | |
|---|---|---|---|---|---|---|---|---|---|---|
| | | | | | | ADB | | | ລັດຖະ<br>ບານ | ມີການ<br>ຮ່ວມທຶນ |
| | | | | | | OCR | ADF | Total | | |
| 2. ແຜນງານການພັດທະນາຂະແໜງສຶກສາ | GI | ISD, GAD | SESS | 2009 | 26.0 | 0.0 | 20.0 | 20.0 | 2.0 | 4.0<br>(Aus) |
| **ພະລັງງານ** | | | | | | | | | | |
| 3. ໂຄງການພັດທະນາພະລັງງານໄຟຟ້າຂະໜາດກາງ ແລະ ນ້ອຍ(ADF ເງື່ອນໄຂສູງ) | TI | ECO | SEID | 2008 | 20.0 | 0.0 | 5.0໓ | 5.0 | 1.0 | 14.0 (Jap/Kor Rep., Carbon Credit) |
| **ລວມ** | | | | | **80.0** | **0.0** | **49.0** | **49.0** | **5.0** | **26.0** |
| **ສຳຮອງແຫ່ງຊາດ** | | | | | | | | | | |
| **ຂົນສົ່ງ** | | | | | | | | | | |
| 1. ໂຄງການພັດທະນາຂະແໜງຂົນສົ່ງ | GI | ECO | SEID | 2009 | 34.0 | 0.0 | 24.0 | 24.0 | 2.0 | 8.0 |
| **ອານຸພາກພື້ນ** | | | | | | | | | | |
| **ກະສິກຳ ແລະ ຊັບພະຍາກອນທຳມະຊາດ** | | | | | | | | | | |
| 1. ການຫຼຸດຜ່ອນ ແລະ ການຄຸ້ມຄອງຄວາມສ່ຽງຂອງໄພນ້ຳຖ້ວມ ແລະ ແຫ້ງແລ້ງ | GI | ECO, RCI | SEAE | 2008 | 25.0 | 0.0 | 20.0 | 20.0 | 5.0 | 0.0 |
| 2.ການຮັກສາຊີວະນາພັນຕາມແລວອານຸພາກພື້ນແມ່ນ້ຳຂອງ | GI | ENV, RCI | SEAE | 2009 | 37.0 | 0.0 | 20.0 | 20.0 | 2.0 | 15.0 |
| **ພະລັງງານ** | | | | | | | | | | |
| 3. (MFF:$100 million) ການເຊື່ອມຕໍ່ ແລະ ສາຍສົ່ງໄຟຟ້າ ນາບົງ-ອຸດອນທານີ ອານຸພາກພື້ນແມ່ນ້ຳຂອງ | GI | ECO, RCI | SEID | 2007 | 84.0 | 74.0 | 0.0 | 74.0 | 10.0 | 0.0 |
| 4. ໂຄງການພະລັງງານໄຟຟ້ານ້ຳງຽບ 1 ອານຸພາກພື້ນແມ່ນ້ຳຂອງ | TI | ECO, RCI, PSD | SEID/ PSIF2 | 2008 | 35.0 | 35.0 | 0.0 | 35.0 | 0.0 | 0.0 |
| **ສາທາລະນະສຸກ,** ໂພສະນາການ, **ແລະ ການປົກປ້ອງສັງຄົມ** | | | | | | | | | | |
| 5. ການຄວບຄຸມພະຍາດຕິດຕໍ່ອານຸພາກພື້ນແມ່ນ້ຳຂອງ 2 | GI | ISD, RCI | SESS | 2009 | 13.0 | 0.0 | 10.0 | 10.0 | 1.0 | 2.0<br>(Aus) |

| ຂະແໜງ<br>ໂຄງການ/ແຜນງານ<br>ຊື່ໂຄງການ | ຈັດປະເພດ<br>ການວາງເປົ້າ<br>ໝາຍ | ບູລິມະສິດ<br>ຕາມຫົວຂໍ້<br>ພັດທະນາ | ພະແນກ | ປີທີ່ມີການ<br>ຊ່ວຍເຫຼືອ<br>ກະກຽມ<br>ໂຄງການ | ມູນຄ່າ (ລ້ານ$)<br>ລວມ | ADB<br>OCR | ADF | Total | ລັດຖະ<br>ບານ | ມີການ<br>ຮ່ວມທຶນ |
|---|---|---|---|---|---|---|---|---|---|---|
| ລວມ | | | | | **194.0** | **109.0** | **50.0** | **159.0** | **18.0** | **17.0** |
| **ລວມ ແຫ່ງຊາດ ແລະ ອານຸພາກພື້ນ** | | | | | **274.0** | **109.0** | **99.0** | **208.0** | **23.0** | **51.0** |
| **2011 ທຶນກູ້ຢືມທີ່ແນ່ນອນ/ຊ່ວຍເຫຼືອລ້າ** | | | | | | | | | | |
| **ລະດັບຊາດ** | | | | | | | | | | |
| **ການສຶກສາ** | | | | | | | | | | |
| 1. ໂຄງການການຝຶກອົບຮົມວິຊາຊີບ ແລະ ການສຶກສາດ້ານເຕັກນິກ | GI | ISD, GAD | SESS | 2009 | 30.0 | 0.0 | 20.0 | 20.0 | 2.0 | 8.0 (Ger/Lux) |
| **ຂົນສົ່ງ** | | | | | | | | | | |
| 2. ໂຄງການພັດທະນາຂະແໜງຂົນສົ່ງ | GI | ECO | SEID | 2009 | 34.0 | 0.0 | 24.0 | 24.0 | 2.0 | 8.0 |
| **ການຄຸ້ມຄອງຂີ້ເຫຍື້ອ, ນ້ຳປະປາ, ສຸກຂະອານາໄມ** | | | | | | | | | | |
| 3. ໂຄງການຄຸ້ມຄອງສະພາບແວດລ້ອມ ແລະ ຂີ້ເຫຍື້ອ (ADF ເງື່ອນໄຂສູງ) | GI | ENV, ECO | SEID | 2008 | 10.0 | 0.0 | 2.0[a] | 2.0 | 0.0 | 8.0 (Jap/ Kor Rep., Carbon Credit) |
| ລວມ | | | | | **74.0** | **0.0** | **46.0** | **46.0** | **4.0** | **24.0** |
| **ສຳຮອງແຫ່ງຊາດ** | | | | | | | | | | |
| **ພະລັງງານ** | | | | | | | | | | |
| ໂຄງການພັດທະນາພະລັງງານທົດແທນ | TI | ECO | SEID | 2010 | 22.0 | 0.0 | 20.0 | 20.0 | 2.0 | TBD |
| **ອຸດສະຫະກຳ ແລະ ການຄ້າ** | | | | | | | | | | |
| 2. ແຜນງານພັດທະນາຂະແໜງການເງິນ | GI | ISD | SEGF | 2009 | 17.0 | 0.0 | 15.0 | 15.0 | 2.0 | TBD |
| 3. ການປັບປຸງພື້ນຖານໂຄງລ່າງສຳລັບການພັດທະນາການທ່ອງທ່ຽວ | GI | ECO | SEID | 2010 | 22.0 | 0.0 | 20.0 | 20.0 | 2.0 | TBD |

| ຂະແໜງ<br>ໂຄງການ/ແຜນງານ<br>ຊື່ໂຄງການ | ຈັດປະເພດ<br>ການວາງເປົ້າ<br>ໝາຍ | ບູລິມະສິດ<br>ຕາມຫົວຂໍ້<br>ພັດທະນາ | ພະແນກ | ປີທີ່ມີການ<br>ຊ່ວຍເຫຼືອ<br>ກະກຽມ<br>ໂຄງການ | ລວມ | ມູນຄ່າ (ລ້ານ$) | | | | |
|---|---|---|---|---|---|---|---|---|---|---|
| | | | | | | ADB | | | ລັດຖະ<br>ບານ | ມີການ<br>ຮ່ວມທຶນ |
| | | | | | | OCR | ADF | Total | | |
| ອານຸພາກພື້ນ | | | | | | | | | | |
| **ພະລັງງານ** | | | | | | | | | | |
| 1. ໂຄງການພະລັງງານທົດແທນ ແລະ ຊົນນະບົດ ອານຸພາກພື້ນແມ່ນ້ຳຂອງ | GI | ECO, RCI | SEAE | 2009 | 13.0 | 0.0 | 10.0 | 10.0 | 1.0 | 2.0 |
| 2. ການສົ່ງເຊື່ອມຕໍ່ໄຟຟ້າ ອານຸພາກພື້ນ ແມ່ນ້ຳຂອງ (ບ້ານສີກເປືອຍກູ) | TI | ECO, RCI | SEID | 2008 | 150.0 | 25.0 | 0.0 | 25.0 | 8.0 | 117.0 |
| **ຂະແໜງການລວມ** | | | | | | | | | | |
| 3. ການພັດທະນາການຂົນສົ່ງ ແລະ ການໃຫ້ ຄວາມສະດວກດ້ານການຄ້າ ອານຸພາກພື້ນ ແມ່ນ້ຳຂອງ | GI | ECO, RCI | TRM/<br>SEGF | 2009 | 23.0 | 0.0 | 20.0 | 20.0 | 1.0 | 2.0 |
| 4. ການພັດທະນາຕົວເມືອງຕາມແລວຊາຍແດນ ອານຸພາກພື້ນແມ່ນ້ຳຂອງ | GI | ECO, RCI | SESS | 2010 | 13.0 | 0.0 | 10.0 | 10.0 | 1.0 | 2.0 |
| **ຄົມມະນາຄົມ ແລະ ຂົນສົ່ງ** | | | | | | | | | | |
| 5. ແລວເສດຖະກິດຕາເວັນອອກ-ຕາເວັນຕົກ ອານຸພາກພື້ນແມ່ນ້ຳຂອງ 2 | GI | ECO, RCI | SEID | 2009 | 23.0 | 0.0 | 20.0 | 20.0 | 1.0 | 2.0 |
| **ລວມ** | | | | | **222.0** | **25.0** | **60.0** | **85.0** | **12.0** | **125.0** |
| **ລວມແຫ່ງຊາດ ແລະ ອານຸພາກພື້ນ** | | | | | **296.0** | **25.0** | **106.0** | **137.0** | **16.0** | **149.0** |

ADB = ທະນາຄານພັດທະນາອາຊີ; Aus =ອົດສະຕຣາລີ; ECO = ການຂະຫຍາຍໂຕຂອງເສກຖະກິດແບບຍືນຍົງ; ENV = ຄວາມຍືນຍົງຂອງສະພາບແວດລ້ອມ; Fra = ຝຣັ່ງ; GAD = ເພດ ແລະ ການພັດທະນາ; Ger = ປະເທດເຢຍລະມັນ; GI = ສັນຍາທົ່ວໄປ; Gov't = ລັດຖະບານ; GMS = ອານຸພາກພື້ນແມ່ນ້ຳຂອງ; ISD = ການພັດທະນາສັງຄົມໂດຍລວມ; Jap = ຢີ່ປຸ່ນ; Kor Rep. = ປະເທດເກົາຫຼີ; Lux = ລຸກຊັມບວກ; PSIF2 = ພະແນກການດຳເນີນງານຂະແໜງເອກະຊົນພື້ນຖານໂຄງລ່າງ 2; RCI = ການຮ່ວມມື ແລະ ການເຊື່ອມໂຍງພາກພື້ນ; SEAE = ກົມອາຊີອາຄະເນ, ພະແນກຊັບພະຍາກອນ ແລະ ສະພາບແວດລ້ອມ, ; SEGF = ພະແນກການປົກຄອງບໍລິຫານ, ການເງິນແລະການຄ້າກົມອາຊີອາຄະເນ; SEID = ພະແນກພື້ນຖານໂຄງລ່າງຂອງກົມອາຊີອາຄະເນ; SESS = ພະແນກສັງຄົມຂອງກົມອາຊີອາຄະເນ[1]; TI = **ສັນຍາເປົ້າໝາຍ**

a = ກອງທຶນພັທະນາອາຊີ ເງື່ອນໄຂສູງ

ແຫຼ່ງຂໍ້ມູນ: ທະນາຄານພັດທະນາອາຊີ.

## ຕາຕະລາງ 2: ດັດສະນີແຜນການຜະລິດຕະພັນ ແລະ ການບໍລິການ ຂອງການຊ່ວຍເຫຼືອທີ່ບໍ່ແມ່ນເງິນກູ້, 2009-2011

| ຂະແໜງ<br>ຊື່ຂອງການຊ່ວຍເຫຼືອ | ພະແນກ<br>ຮັບຜິດຊອບ | ປະເພດການ<br>ຊ່ວຍເຫຼືອ | ແຫຼ່ງທຶນ: ADB<br>ແຫຼ່ງທຶນ | ແຫຼ່ງທຶນ: ADB<br>ຈຳນວນ ($'000) | ແຫຼ່ງທຶນ: Others<br>ແຫຼ່ງທຶນ | ແຫຼ່ງທຶນ: Others<br>ຈຳນວນ ($'000) | ລວມ<br>($'000) |
|---|---|---|---|---|---|---|---|
| 2009 ທຶນແນ່ນອນ | | | | | | | |
| **ກະສິກຳ ແລະຊັບພະຍາກອນທຳມະຊາດ** | | | | | | | |
| 1. ໂຄງການພັດທະນາພື້ນຖານໂຄງລ່າງຊົນນະບົດ | SEAE | PPTA | TASF | 800.0 | | 0.0 | 800.0 |
| **ການສຶກສາ** | | | | | | | |
| 2. ແຜນງານພັດທະນາຂະແໜງການສຶກສາ | SESS | PPTA | TASF | 700.0 | | 0.0 | 700.0 |
| **ສາທາລະນະສຸກ, ສຸກຂະອານາໄມ, ແລະ ການປົກປ້ອງສັງຄົມ** | | | | | | | |
| 3. ການສະໜັບສະໜູນສຳລັບ ແຜນງານພັດທະນາຂະແໜງສາທາ | SESS | PATA | TASF | 500.0 | | 0.0 | 500.0 |
| **ອຸດສະຫະກຳ ແລະ ການຄ້າ** | | | | | | | |
| 4.ການປະເມີນຂະແໜງການເງິນ | SEGF | RDTA | TASF | 500.0 | | 0.0 | 500.0 |
| **ກົດໝາຍ, ການຄຸ້ມຄອງເສດຖະກິດ, ແລະ ນະໂຍບາຍພາກລັດ** | | | | | | | |
| 5. ຜັນຂະຫຍາຍຄວາມສາມາດສຳລັບກົມສະຖິຕິຂອງກະຊວງແຜນການ ແລະ ການລົງທຶນ | LRM, ERD | CCDTA | TASF | 500.0 | | 0.0 | 500.0 |
| 6.ການສຳຫຼວດຕະຫຼາດແຮງງານລາວ | SESS, LRM | RDTA | TASF | 500.0 | | 0.0 | 500.0 |
| **ຄົມມະນາຄົມຂົນສົ່ງ** | | | | | | | |

| ຂະແໜງ<br>ຊື່ຂອງການຊ່ວຍເຫຼືອ | ພະແນກ<br>ຮັບຜິດຊອບ | ປະເພດການ<br>ຊ່ວຍເຫຼືອ | ແຫຼ່ງທຶນ<br>ADB<br>ແຫຼ່ງທຶນ | <br><br>ຈຳນວນ<br>($'000) | <br>Others<br>ແຫຼ່ງທຶນ | <br><br>ຈຳນວນ<br>($'000) | ລວມ<br>($'000) |
|---|---|---|---|---|---|---|---|
| 7. ໂຄງການພັດທະນາຂະແໜງການຂົນສົ່ງ | SEID | PPTA | TASF | 700.0 | | 0.0 | 700.0 |
| ລວມ | | | | **4,200.0** | | **0.0** | **4,200.0** |
| 2009 ສຳຮອງແຫ່ງຊາດ | | | | | | | |
| **ການສຶກສາ** | | | | | | | |
| 1. ໂຄງການຝຶກອົບຮົມວິຊາຊີບ ແລະ ການສຶກສາດ້ານເຕັກນິກ | SESS | PPTA | TASF | 700.0 | | 0.0 | 700.0 |
| **ອານຸພາກພື້ນ** | | | | | | | |
| **ກະສິກຳ ແລະ ຊັບພະຍາກອນທຳມະຊາດ** | | | | | | | |
| 1. ແຜນງານການຮັກສາຊີວະນະພັນຕາມແລວ **ອານຸພາກພື້ນແມ່ນ້ຳຂອງ** | SEAE | RPPTA | TASF | 1,000.0 | | 0.0 | 1,000.0 |
| 2. ໂຄງການພະລັງງານທົດແທນ –ແລະ ຊົນນະບົດ (ໂຄງການພັດທະນານ້ຳມັນຊີວະພາກ) | SEAE | RPPTA | TASF | 2,000.0 | | 0.0 | 2,000.0 |
| **ການສຶກສາ** | | | | | | | |
| 3. Phase IV –ແຜນການພະນົມເປັນ **ອານຸພາກພື້ນແມ່ນ້ຳຂອງ ສຳລັບການຄຸ້ມຄອງການພັດທະນາ** | SEOD | RCDTA | TASF | 1,000.0 | PRC | 500.0 | 1,500.0 |
| **ພະລັງງານ** | | | | | | | |
| 4.ການໃຫ້ຄວາມສະດວກແບບຍືນຍົງ, ການຄ້າພະລັງງານພາກພື້ນທີ່ເປັນມິດຕໍ່ສະພາບແວດລ້ອມໃນ **ອານຸພາກພື້ນແມ່ນ້ຳຂອງ ຂັ້ນ 2 (ການສຶກສາການເຊື່ອມຕໍ່ ແລະ ການປັບປຸງສາຍສົ່ງ ຈີນ-ລາວ-ກຳປູເຈຍ)** | SEID | RPATA | | 0.0 | PRC, RCIF, Sweden | 2,000.0 | 2,000.0 |

| | | | ແຫຼ່ງທຶນ | | | | |
|---|---|---|---|---|---|---|---|
| | | | ADB | | Others | | |
| ຂະແໜງ<br>ຊື່ຂອງການຊ່ວຍເຫຼືອ | ພະແນກ<br>ຮັບຜິດຊອບ | ປະເພດການ<br>ຊ່ວຍເຫຼືອ | ແຫຼ່ງທຶນ | ຈຳນວນ<br>($'000) | ແຫຼ່ງທຶນ | ຈຳນວນ<br>($'000) | ລວມ<br>($'000) |
| **ສາທາລະນະສຸກ, ສຸກຂະອານາໄມ, ແລະ ການປົກປ້ອງສັງຄົມ** | | | | | | | |
| 5. ໂຄງການຄວບຄຸມພະຍາດຕິດຕໍ່ 2 **ອານຸພາກພື້ນແມ່ນ້ຳຂອງ** | SESS | RPPTA | TASF | 500.0 | | 0.0 | 500.0 |
| **ຂະແໜງການລວມ** | | | | | | | |
| 6. ການພັດທະນາການຂົນສົ່ງສິນຄ້າ ແລະ ການອຳນວຍຄວາມສະດວກທາງດ້ານການຄ້າ **ອານຸພາກພື້ນແມ່ນ້ຳຂອງ ຄົມມະນາຄົມ ແລະ ຂົນສົ່ງ** | TRM, SEGF | RPPTA | TASF | 800.0 | | 0.0 | 800.0 |
| 7. **ຂົນສົ່ງແລວເສດຖະກິດຕາເວັນອອກຕາເວັນຕົກ ອານຸພາກພື້ນແມ່ນ້ຳຂອງ** | SEID | RPPTA | TASF | 1,000.0 | | 0.0 | 1,000.0 |
| ລວມ | | | | **6,300.0** | | **2,500.0** | **11,300.0** |
| **ລວມແຫ່ງຊາດ ແລະ ອານຸພາກພື້ນ** | | | | **10,500.0** | | **2,500.0** | **15,500.0** |

2010 ທຶນແນ່ນນອນ

| | | | | | | | |
|---|---|---|---|---|---|---|---|
| **ກະສິກຳ ແລະ ຊັບພະຍາກອນທຳມະຊາດ** | | | | | | | |
| 1. ການຫັນປ່ຽນ ແລະ ການຜະລິດເພື່ອເປັນສິນຄ້າ | SEAE | RDTA | TASF | 400.0 | | 0.0 | 400.0 |
| **ການສຶກສາ** | | | | | | | |
| 2.ໂຄງການການຝຶກອົບຮົມວິຊາຊີບ ແລະ ການສຶກສາຂັ້ນສູງ | SESS | PPTA | TASF | 700.0 | | 0.0 | 700.0 |
| **ພະລັງງານ** | | | | | | | |
| 3. ໂຄງການພັດທະນາພະລັງງານທົດແທນ | SEID | PPTA | TASF | 700.0 | | 0.0 | 700.0 |
| **ອຸດສະຫະກຳ ແລະ ການຄ້າ** | | | | | | | |
| 4. ແຜນງານການພັດທະນາຂະແໜງການເງິນ | SEGF | PPTA | TASF | 600.0 | | 0.0 | 600.0 |

| | | | ແຫຼ່ງທຶນ | | | | |
|---|---|---|---|---|---|---|---|
| | | | ADB | | Others | | |
| ຂະແໜງ<br>ຊື່ຂອງການຊ່ວຍເຫຼືອ | ພະແນກ<br>ຮັບຜິດຊອບ | ປະເພດການ<br>ຊ່ວຍເຫຼືອ | ແຫຼ່ງທຶນ | ຈຳນວນ<br>($'000) | ແຫຼ່ງທຶນ | ຈຳນວນ<br>($'000) | ລວມ<br>($'000) |
| ກົດໝາຍ, ການຄຸ້ມຄອງເສດຖະກິດ, ແລະ ນະໂຍບາຍພາກລັດ | | | | | | | |
| 5. ແຜນການຈັດຕັ້ງປະຕິບັດແຜນຫ້າປີ ຄັ້ງທີ່ 7 | LRM | PATA | TASF | 600.0 | | 0.0 | 600.0 |
| ລວມ | | | | **3,000.0** | | **0.0** | **3,000.0** |
| **ອານຸພາກພື້ນ** | | | | | | | |
| **ກະສິກຳ ແລະ ຊັບພະຍາກອນທຳມະຊາດ** | | | | | | | |
| 1. ການຈັດຕັ້ງປະຕິບັດການສະໜັບສະໜູນທາງດ້ານກະສິກຳທີ່ສຳຄັນ | SEAE | RPATA | TASF | 1,000.0 | | 0.0 | 1,000.0 |
| **ພະລັງງານ** | | | | | | | |
| 2. **ການພັດທະນາສາຍສົ່ງພາກພື້ນ ແລະ ອຳນາດການປົກຄອງລະບຽບຫຼັກການ** | SEID | RPATA | | | France | 1,000.0 | 1,000.0 |
| 3. **ສາຍສົ່ງໄຟຟ້າພາກເໜືອ ອານຸພາພື້ນແມ່ນ້ຳຂອງ** ຂະແໜງການລວມ | SEID | PPTA | TASF | 1,000.0 | | 0.0 | 1,000.0 |
| 4. **ໂຄງການພັດທະນາຕົວເມືອງຕາມແລວຊາຍແດນ ອານຸພາກພື້ນແມ່ນ້ຳຂອງ** | SESS | RPPTA | TASF | 1,000.0 | | 0.0 | 1,000.0 |
| 5. ການສ້າງຄວາມເຂັ້ມແຂງການປະສານງານຂອງແຜນ ອານຸພາກພື້ນແມ່ນ້ຳຂອງ | SEOC | RPATA | TASF | 1,000.0 | RCIF | 3,000.0 | 4,000.0 |
| ລວມ | | | | **4,000.0** | | **4,000.0** | **9,000.0** |
| ລວມແຫ່ງຊາດ ແລະ ອານຸພາກພື້ນ | | | | **7,000.0** | | **9,000.0** | **12,000.0** |

2011 ທຶນແນ່ນອນ

| | | | ແຫຼ່ງທຶນ | | | | |
|---|---|---|---|---|---|---|---|
| | | | ADB | | Others | | |
| ຂະແໜງ<br>ຊື່ຂອງການຊ່ວຍເຫຼືອ | ພະແນກ<br>ຮັບຜິດຊອບ | ປະເພດການ<br>ຊ່ວຍເຫຼືອ | ແຫຼ່ງທຶນ | ຈຳນວນ<br>($'000) | ແຫຼ່ງທຶນ | ຈຳນວນ<br>($'000) | ລວມ<br>($'000) |
| **ກະສິກຳ  ແລະຊັບພະຍາກອນທຳມະຊາດ** | | | | | | | |
| 1. ໂຄງການພັດທະນາຊົນນະບົດ | SEAE | PPTA | TASF | 700.0 | | 0.0 | 700.0 |
| **ພະລັງງານ** | | | | | | | |
| 2. ໂຄງການສາຍສົ່ງໄຟຟ້າ | SEID | PPTA | TASF | 700.0 | | 0.0 | 700.0 |
| ອຸດສະຫະກຳ ແລະ ການຄ້າ | | | | | | | |
| 3.ການພັດທະນາຄວາມສາມາດຂອງຫ້ອງການກວດກາພັກລັດ ກົດໝາຍ, ການຄຸ້ມຄອງເສດຖະກິດ, ແລະ ນະໂຍບາຍລັດ | SEGF | CDTA | TASF | 500.0 | | 0.0 | 500.0 |
| 4. ການພັດທະນາຄວາມສາມາດສຳລັບກົມສະຖິຕິ ຂອງກະຊວງແຜນການ ແລະ ການລົງທຶນ ຄົມມະນາຄົມຂົນສົ່ງ | LRM, ERD | CDTA | TASF | 500.0 | | 0.0 | 500.0 |
| 5. ການປັບປຸງພື້ນຖານໂຄລ່າງ ເພື່ອພັດທະນາການທ່ອງທ່ຽວ | SESS | PPTA | TASF | 700.0 | | 0.0 | 700.0 |
| **ການຄຸ້ມຄອງຂີ້ເຫຍື້ອ, ນ້ຳປະປາ, ສຸກຂະອານາໄມ** | | | | | | | |
| 6. ແຜນງານຂະແໜງສຸກຂະລະນາໄມ ແລະ ລະບົບນ້ຳປະປາ | SESS | PPTA | TASF | 700.0 | | 0.0 | 700.0 |
| ລວມ | | | | **3,800.0** | | **0.0** | **3,800.0** |

**ອານຸພາກພື້ນ**

| | | | | | | | |
|---|---|---|---|---|---|---|---|
| **ກະສິກຳ ແລະ ຊັບພະຍາກອນທຳມະຊາດ** | | | | | | | |
| 1. ການລິເລີ້ມການຮັກສາຊີວະນາພັນ ແລະ ແຜນງານສະພາບແວດລ້ອມທີ່ສຳຄັນ ຂັ້ນ 2 | SEAE | RPATA | TASF | 1,000.0 | | 0.0 | 1,000.0 |
| ອຸດສະຫະກຳ ແລະ ການຄ້າ | | | | | | | |

| ຂະແໜງ<br>ຊື່ຂອງການຊ່ວຍເຫຼືອ | ພະແນກ<br>ຮັບຜິດຊອບ | ປະເພດການ<br>ຊ່ວຍເຫຼືອ | ແຫຼ່ງທຶນ<br>ADB<br>ແຫຼ່ງທຶນ | <br><br>ຈຳນວນ<br>($'000) | <br>Others<br>ແຫຼ່ງທຶນ | <br><br>ຈຳນວນ<br>($'000) | ລວມ<br>($'000) |
|---|---|---|---|---|---|---|---|
| 2. ການພັດທະນາການທ່ອງທ່ຽວແບບຍືນຍົງ ອານຸພາກພື້ນແມ່ນ້ຳຂອງ ຂະແໜງການລວມ | SESS | RPPTA | TASF | 1,000.0 | | 0.0 | 1,000.0 |
| 3. ການສ້າງຄວາມເຂັ້ມແຂງທາງດ້ານຂົນສົ່ງ ແລະ ການໃຫ້ຄວາມສະດວກກ້ານຄ້າຂັ້ນທີ 2 | TRM, SEGF | RPATA | TASF | 1,000.0 | | 0.0 | 1,000.0 |
| 4. Phase II ການຈັດຕັ້ງປະຕິບັດ ແຜນການ ແລະ ແຜນງານຍຸດທະສາດການພັດທະນາຊັບພະຍາກອນມະນຸດອານຸພາກພື້ນແມ່ນ້ຳຂອງ | SESS | RPATA | TASF | 700.0 | | 0.0 | 700.0 |
| **ການຄຸ້ມຄອງຂີ້ເຫຍື້ອ, ນ້ຳປະປາ, ສຸກຂະອານາໄມ** | | | | | | | |
| 5. ໂຄງການສຸຂະລະນາໄມ ແລະ ລະບົບນ້ຳປະປາ ອານຸພາກພື້ນແມ່ນ້ຳຂອງ[b] | SESS | RPPTA | TASF | 1,200.0 | | 0.0 | 1,200.0 |
| **ລວມ** | | | | **4,900.0** | | **0.0** | **4,900.0** |
| **ລວມ ແຫ່ງຊາດ ແລະ ອານຸພາກພື້ນ** | | | | **8,700.0** | | **0.0** | **8,700.0** |

ADB = ທະນາຄານພັດທະນາອາຊີ; CCDTA = ການຊ່ວຍເຫຼືອວິຊາການພັດທະນາຄວາມສາມາດຂະແໜງການ; ERD = ກົມຄົ້ນຄ້ວາ ແລະ ເສດຖະກິດ; Gov't = ລັດຖະບານ; GMS = ອະນຸພາກພື້ນແມ່ນ້ຳຂອງ; LRM = ຫ້ອງການທະນາຄານພັດທະນາອາຊີປະຈຳ ສປປ ລາວ; PATA = ການຊ່ວຍເຫຼືອດ້ານວິຊາການໃຫ້ຄຳແນະນຳ ແລະ ນະໂຍບາຍ; PPTA = ການຊ່ວຍເຫຼືອວິຊາການການກະກຽມໂຄງການ; PRC = ປະເທດຈີນ; RCIF = ກອງທຶນເຊື່ອມໂຍງ ແລະ ການຮ່ວມມືພາກພື້ນ, RDTA = ການຊ່ວຍເຫຼືອດ້ານວິຊາການ ການພັດທະນາ ແລະ ຄົ້ນຄ້ວາ; RPPTA = ການຊ່ວຍເຫຼືອວິຊາການການກະກຽມໂຄງການພາກພື້ນ; RPATA = ການຊ່ວຍເຫຼືອດ້ານວິຊາການໃຫ້ຄຳແນະນຳພາກພື້ນ; SEAE = ພະແນກກະສິກຳ ສິ່ງແວດລ້ອມ ແລະ ຊັບພະຍາກອນທຳມະຊາດຂອງກົມອາຊີອາຄະເນ; SEGF = ພະແນກການປົກຄອງບໍລິຫານ, ການເງິນແລະການຄ້າກົມອາຊີອາຄະເນ; SEID = ພະແນກພື້ນຖານໂຄງລ່າງຂອງກົມອາຊີອາຄະເນ; SESS = ພະແນກສັງຄົມຂອງກົມອາຊີອາຄະເນ; TASF = ກອງທຶນການຊ່ວຍເຫຼືອພິເສດດ້ານວິຊາການພິເສກ; TBD =ເພື່ອທີ່ຈະຖືກກຳນົດ; TRM = ຫ້ອງການທະນາຄານພັດທະນາອາຊີປະຈຳ ປະເທດໄທ.

ແຫຼ່ງຂໍ້ມູນ: ທະນາຄານພັດທະນາອາຊີ

## ຕາຕະລາງ 3: ສັງລວມຂໍ້ມູນຜະລິດຕະພັນ ແລະ ການບໍລິການຂອງການຊ່ວຍທີ່ເປັນເງິນກູ້/ການຍຊ່ວຍເຫຼືອລ້າ ແລະການຊ່ວຍເຫຼືອທີ່ບໍ່ແມ່ນເງິນກູ້, 2009

| ກ. ຜະລິດຕະພັນ ເງິນກູ້ ແລະ ເງິນຊ່ວຍເຫຼືອລ້າ | |
|---|---|
| **ຊື່ໂຄງການ** | **ແຜນງານການພັດທະນາຂະແໜງສາທາ( 22.0 ລ້ານໂດລາ)** |
| ເປົ້າໝາຍ, ອົງປະກອບ, ແລະ ຜົນໄດ້ຮັບ | ແຜນງານແມ່ນມີເປົ້າໝາຍແນໃສ່ (i) ເພີ່ມຂະຫຍາຍການເຂົ້າເຖິງການຮັກສາແມ່ ແລະ ເດັກ, (ii) ປັບປຸງຄຸນນະພາບຂອງການຮັກສາ, (iii) ເຮັດໃຫ້ການຮັກສາຕອບສະໜອງທົ່ວເຖິງ, ແລະ (iv) ສ້າງຄວາມເຂັ້ມແຂງການຄຸ້ມຄອງໃນຂັ້ນແຂວງແລະເມືອງ. ການຮັກສາແມ່ເປັນຂະແໜງບູລິມະສິດຂອງກະຊວງສາທາ ເນື່ອງຈາກວ່າການໃຫ້ການບໍລິການການປະສູດຍັງອ່ອນແອ ກ່ຽວພັນກັບເປົ້າໝາຍພັດທະນາສະຫັດສະຫວັດ. ຫ້ອງກວດພະຍາດ ແລະ ໂຮງໝໍຫຼາຍແຫ່ງບໍ່ສາມາດສະໜອງການປະສູດທີ່ຮີບດ່ວນ ແລະ ມີຂັ້ນຕອນອັນສັບສົນ. ກະຊວງສາທາວາງແຜນທີ່ຈະພັດທະນາ ແລະ ສ້າງແຮງຈູງໃຈສຳລັບຄວາມສະດວກດ້ານສຸກຂະພາບ ແລະ ສະໜອງການຮັກສາໃຫ້ມີຄຸນນະພາບ. ຄ່າໃຊ້ຈ່າຍສຳລັບຮັກສາສຸກຂະພາບໃນປະຈຸບັນແມ່ນຍັງຕ່ຳ ປະມານ 3.2% ຂອງຍອດຜະລິດຕະພັນພາຍໃນປະເທດ (GDP), ຫຼື ປະມານ 13 ໂດລາ ຕໍ່ມື້ຕໍ່ຄົນ. ທົກສິບສ່ວຍຮ້ອຍຂອງຄ່າໃຊ້ຈ່າຍສຸກຂະພາບແມ່ນງົບປະມານພາຍນອກ. ຄ່າໃຊ້ຈ່າຍທີ່ສູງສຳລັບຜູ້ທຸກ, ກໍ່ໃຫ້ເກີດການຮັກສາບໍ່ທົ່ວເຖິງ ແລະ ສິ່ງຜົນກະທົບໃຫ້ລາຍຮັບໜ້ອຍລົງ. ກະຊວງສາທາກຳລັງວາງແນວທາງການຄຸ້ມຄອງລະບົບສຸກຂະພາບຂັ້ນເມືອງ ແລະ ລະບົບອີງໃສ່ຜົນຂອງການດຳເນີນງານເປັນຫຼັກຢູ່ຂັ້ນແຂວງ. ເອດີບີໄດ້ມີການຮ່ວມມືທີ່ເຂັ້ມແຂງ ແລະ ມີປະໂຫຍດກັບກະຊວງສາທາຕັ້ງແຕ່ປີ 1990 ແລະ ກຳລັງເຮັດວຽກຢ່າງໃກ້ສິດກັບຄູ່ຮ່ວມອື່ນໆ, ໂດຍສະເພາະຢີ່ປຸ່ນ, ກອງທຶນສະຫະປະຊາຊາດເພື່ອເດັກນ້ອຍ, ອົງການຈັດຕັ້ງເພື່ອສຸກຂະພາບໂລກ ແລະ ທະນາຄານໂລກ. ເອດີບີໄດ້ໃຫ້ການສະໜັບສະໜູນການຂະຫຍາຍການຮັກສາສຸກຂະພາບຂັ້ນພື້ນຖານໃນແປດແຂວງພາກເໜືອແລະສ້າງຄວາມເຂັ້ມແຂງຄວາມສາມາດຂອງສະຖາບັນສຳລັບການຄຸ້ມຄອງການຮັກສາສຸກຂະພາບຂັ້ນພື້ນຖານໃນຂອບເຂດທົ່ວປະເທດ. ເພື່ອທີ່ຈະປັບປຸງຄຸນນະພາບ ແລະ ການນຳໃຊ້ການບໍລິການ, ໂຄງການພັດທະນາລະບົບສາທາຈະເຮັດໃຫ້ມັນເຂັ້ມແຂງຂື້ນໄປໂດຍການສຸມໃສ່ການພັດທະນາຊັບພະຍາກອນມະນຸດ, ແລະ ການແນະນຳແນວທາງທີ່ອີງໃສ່ຜົນຂອງການດຳເນີນງານເປັນຫຼັກ ແລະ ກອງທຶນສະສົມເພື່ອສຸກຂະພາບ ໂດຍອີງໃສ່ແນວທາງທີ່ສຳເລັດດັ່ງກ່າວນີ້, ລັດຖະບານຮ້ອງຂໍການຊ່ວຍເຫຼືອໃຫ້ມີການເພີ່ມກອງທຶນສະສົມເພື່ອສຸກຂະພາບ ແລະ ແນວທາງແຜນການ, ແລະ ສ້າງຄວາມເຂັ້ມແຂງການຄຸ້ມຄອງລະບົບສາທາແຂວງໃນຂອບເຂດທົ່ວປະເທດ. |
| ຜົນທີ່ຄາດວ່າຈະໄດ້ຮັບ | ເປົ້າໝາຍແມ່ນເພື່ອບັນລຸເປົ້າໝາຍພັດທະນາສະຫັດສະຫັວດໃນການຫຼຸດຜ່ອນການຕາຍຂອງແມ່ ແລະ ເດັກກ່ອນປີ 2015 (ເປົ້າໝາຍ 4 ແລະ 5). ຜົນໄດ້ຮັບແມ່ນຜົນຂອງການດຳເນີນງານທີ່ໄດ້ຮັບການປັບປຸງຂອງລະບົບສາທາໃນເງື່ອນໄຂຂອງການນຳໃຊ້ ແລະ ຄຸນນະພາບຂອງການຮັກສາສຸກຂະພາບຂັ້ນພື້ນຖານ (PHC) ໃນ 8 ແຂວງພາກເໜືອ ແລະ ການຄຸ້ມຄອງລະບົບສາທາແຂວງໃນຂອບເຂດທົ່ວປະເທດ. ໝາກຜົນປະກອບມີ (I) ການເຂົ້າເຖິງການໃຫ້ການບໍລິການສຳລັບແມ່ຍິງ ແລະ ເດັກນ້ອຍໃນແປດແຂວງພາກເໜືອສູງຂື້ນໂດຍການປັບປຸງໃຫ້ມີການຕອບສະໜອງການໃຫ້ການບໍລິການການປະສູດ ແລະ ເດັກນ້ອຍຢ່າງຮີບດ່ວນໃນໂຮງໝໍ; (ii) ເພີ້ມຄວາມສາມາດຂອງສູນສຸກຂະພາບໃນການດູແລແມ່ໃນເວລາເກີດລູກ ແລະ ຂະຫຍາຍແບບຈຳລອງສາທາຂັ້ນບ້ານທີ່ທົດລອງພາຍໃຕ້ກອງທຶນຢີ່ປຸ່ນ ເພື່ອຫຼຸດຜ່ອນຄວາມທຸກຍາກ(JFPR); (iii) ຄຸນນະພາບຂອງການຮັກສາທີ່ສາມາດຕອບສະໜອງໄດ້ສຳລັບຜູ້ທຸກຍາກໃນແປດແຂວງພາກເໜືອຜົນເນື່ອງຈາກການເພີ່ມຂື້ນກອງທຶນເພື່ອສຸກຂະພາບສຳລັບຜູ້ທຸກຍາກໃຫ້ແກ່ 8 ແຂວງພາກເໜືອໂດຍການປະສານງານກັບການລິເລີ້ມອື່ນໆ, ແລະ ເຊື່ອມຕໍ່ສິ່ງເລົ່ານີ້ໃສ່ມາດຕະຖານການໃຫ້ບໍລິການ ແລະ ແຮງຈູງໃຈໂດຍອີງໃສ່ຜົນຂອງການດຳເນີນງານເປັນຫຼັກໃນການໃຫ້ການບໍລິການຄົບຊຸດ; (iv) ປັບປຸງຊັບພະຍາກອນມະນຸດສຳລັບຂະແໜງສາທາ,ການຈັດຕັ້ງປະຕິບັດທີ່ມີສ່ວນຮ່ວມຂອງນະໂຍບາຍດ້ານຊັບພະນາກອນມະນຸດ ແລະ ແຜນການ ໂດຍມີການຮ່ວມມືກັບບັນດາຄູ່ຮ່ວມອື່ນໆ, ລວມທັງການສະໜັບສະໜູນສຳລັບມະຫາວິທະຍາໄລແພດສາດ, ໂຮງຮຽນຄອບຄົວສຶກສາແຂວງຫຼວງພະບາງ, ໂຮງຮຽນແພດຂັ້ນກາງ, ໂຮງຮຽນແພດ ແລະ ໝໍຕຳແຍ (ຜູ້ທີ່ຊ່ວຍໃນຫານອອກລູກ), ແລະ ການຝຶກອົບຮົມຢ່າງຕໍ່ເນື່ອງໃນການໃຫ້ການບໍລິການສຳລັບພະນັກງານ ແລະ ພະນັກງານສາທາບ້ານ ພ້ອມກັບໃຫ້ບຸລິມະສິດແກ່ພະນັກງານເພດຍິງໂດຍທົ່ວໄປ ແລະ ແມ່ບ້ານ, ແລະ (v) ການຄຸ້ມຄອງລະບົບສາທາແຂວງ |

| | |
|---|---|
| | ໄດ້ຮັບການປັບປຸງໃນຂອບເຂດທົ່ວປະເທດ. ແຜນງານຈະສະໜັບສະໜູນບັນຊີສາທາແຂວງ, ການວາງແຜນ ແລະ ການຂື້ນງົບປະມານ, ການຄຸ້ມຄອງການເງິນ, ຮວມສູນການຊ່ວຍເຫຼືອຂັ້ນແຂວງ, ແລະ ຕິດຕາມ ແລະ ການປະເມີນໃນການສະໜັບສະໜູນຂອງນະໂຍບາຍລັດຖະບານ ອີງຕາມການກະຈາຍອຳນາດ ແລະ ແນວທາງການບຄຸ້ມຄອງໂດຍອີງໃສ່ຜົນຂອງການດຳເນີນງານເປັນຫຼັກ. ອົງປະກອບຈະລວມເອົາການບໍລິຫານແຜນງານເຊື່ອມໂຍງ ແລະ ການປະສານງານການຊ່ວຍເຫຼືອແຫ່ງຊາດ, ພ້ອມກັບວຽກງານວິຊາການທີ່ຈະໄດ້ຈັດຕັ້ງປະຕິບັດໂດຍບັນດາກົມກ່ຽວຂ້ອງໃນກະຊວງສາທາ. |
| **ຊື່ໂຄງການ** | **ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ການສຶກສາຂັ້ນສູງ( 22.0 ລ້ານໂດລາ)** |
| ເປົ້າໝາຍ, ອົງປະກອບ, ແລະ ຜົນໄດ້ຮັບ | ໂຄງການແມ່ນແນໃສ່ການພັດທະນາລະບົບການສຶກສາຂັ້ນສູງທີ່ມີມາດຕະຖານສາກົນໂດຍການປັບປຸງການເຂົ້າເຖິງທີ່ເທົ່າທຽມກັນ, ຄຸນນະພາບ, ແລະ ສອດຄ່ອງ; ແລະ ການສ້າງຄວາມເຂັ້ມແຂງໃນການສິດສອນ ແລະ ຄວາມສາມາດໃນການຄົ້ນຄ້ວາ. ມັນຈະສະໜັບສະໜູນ (i) ການພັດທະນາ ຂອງນະໂຍບາຍໂດຍລວມ ແລະ ແຜນງານລະບຽບຫຼັກການທີ່ສອດຄ່ອງກັບຍຸດທະສາດການປະຕິຮູບລະບົບການສຶກສາແຫ່ງາຊາດ, 2006-2015, (ii) ການສ້າງຄວາມເຂັ້ມແຂງຂອງມະຫາວິທະຍາໄລທີ່ມີຢູ່ແລ້ວລວມທັງມະ ຫາວິທະຍາໄລແຫ່ງຊາດ, ສຸພານຸວົງ ຢູ່ແຂວງແຫຼວງພະບາງ, ແລະ ຈຳປາສັກ ຢູ່ເມືອງປາກເຊ, ແລະ ສະຖາບັນການສຶກສາຂັ້ນສູງທີ່ສຳຄັນອື່ນໆໃນເງື່ອນໄຂຂອງການບໍລິການ ແລະ ການຄຸ້ມຄອງ, ອຸປະກອນອຳນວຍຄວາມສະດວກ, ແລະ ພະນັກງານ(ພະນັກງານບໍລິຫານ ແລະ ພະນັກງານຄະນະວິຊາ); ແລະ (iii) ການປະສານງານ ແລະ ການຄຸ້ມຄອງການຈັດຕັ້ງປະຕິບັດໂຄງການ. |
| ຜົນທີ່ຄາດວ່າຈະໄດ້ຮັບ | ໂຄງການຈະສືບຕໍ່ຊ່ວຍໃຫ້ປະເທດຫຼຸດພົ້ນອອກຈາກຖານະປະເທດດ້ອຍພັດທະນາກ່ອນ ປີ 2020, ແລະ ເຊື່ອມໂຍງເຂົ້າສູ່ເສດຖະກິດພາກພື້ນ ແລະ ຂອງໂລກ. ການພັດທະນາຂອງຂະແໜງການສຶກສາຂັ້ນສູງໃຫ້ມີມາດຕະຖານສາກົນຈະມີບົດບາດສຳຄັນໃນການບັນລຸບັນດາເປົ້າໝາຍນີ້. |
| **ຊື່ໂຄງການ** | **ສາຍສົ່ງໄຟຟ້າພາກເໜືອ ອານຸພາກພື້ນແມ່ນ້ຳຂອງ ( 20.0 ລ້ານໂດລາ)** |
| ເປົ້າໝາຍ, ອົງປະກອບ, ແລະ ຜົນໄດ້ຮັບ | ໂຄງການແມ່ນແນໃສ່ການຈັດສັນສະໜອງພະລັງງານທີ່ພຽງພໍແລະຍືນຍົງທຳມະຊາດໃຫ້ແກ່ພາກເໜືອ ສປປ ລາວ ແລະ ພາກເໜືອຂອງປະເທດໄທ. ໂຄງການຈະສຳເລັດການສຶກສາຄວາມເປັນໄປໄດ້ ແລະ ການອອກແບບໂຄງການ, ທີ່ເຫັນດີໂດຍເອດີບີ ແລະ ລັດຖະບານ, ທີ່ຈະສາມາດຕອບສະໜອງໄຟຟ້າທີ່ພຽງພໍໃຫ້ແກ່ຂົງເຂດຫ່າງໄກໃນພາກເໜືອຂອງ ສປປ ລາວທີ່ມີຂໍ້ຈຳກັດໃນການເຂົ້າເຖິງ, ປັບປຸງຄວາມພຽງພໍໃນການສະໜອງ, ແລະ ຈະຂະຫຍາຍການເຊື່ອມຕໍ່ກັບປະເທດໄທ. ເປົ້າໝາຍສູງສຸດຂອງໂຄງການແມ່ນເພື່ອສົ່ງເສີມການພັດທະນາສັງຄົມ ແລະ ເສດຖະກິດເພື່ອຫຼຸດຜ່ອນຄວາມທຸກຍາກໂດຍຜ່ານຄວາມສາມາດເຂົ້າເຖິງໄຟຟ້າທີ່ໄດ້ຮັບການປັບປຸງ. ໂຄງການຈະຖືກອອກແບບເພື່ອສົ່ງເສີມ ແລະ ເພື່ອເພີ້ມກຳລັງສົ່ງຂອງສາຍສົ່ງຂະໜາດ 115kv ໄປທົ່ວບັນດາແຂວງພາກເໜືອ ຂອງແຂວງຜົ້ງສາລີ, ຫຼວງນ້ຳທາ, ອຸດົມໄຊ, ໄຊຍະບູລີ, ແລະ ວຽງຈັນ. ມັນລວມທັງສະຖານນີໄຟຟ້າຍ່ອຍສາມແຫ່ງ (115kv ແລະ 22kv) ໃນບຸນເໜືອ (ແຂວງຜົ້ງສາລີ), ນາໂມ (ແຂວງອຸດົມໄຊ), ແລະ ປາກລາຍ (ໄຊຍະບູລີ), ແລະ ອຸປະກອນການແຈກຈ່າຍທີ່ມີກຳລັງສົ່ງຂະໜາດກາງ ແລະ ຂະໜາດຕ່ຳສຳລັບການຜະລິດໄຟຟ້າເຂດທ້ອງຖິ່ນ. ໂຄງການຈະຍົກລະດັບການເຊື່ອມຕໍ່ໃສ່ປະເທດໄທຈາກ 22 kV ເປັນ 115 kV ແລະ ການຊ່ວຍເຫຼືອດ້ານອື່ນໆໃນການໃຫ້ການປຶກສາການໃຫ້ບໍລິການ, ການປັບປຸງການດຳເນີນງານ, ແລະ ການຕິດຕາມຜົນປະໂຫຍດຂອງໂຄງການ. |
| ເປົ້າໝາຍ, ອົງປະກອບ, ແລະ ຜົນໄດ້ຮັບ | ການຂະຫຍາຍຂອງການສະໜອງໄຟຟ້າຊົນນະບົດແມ່ນມີຄວາມສຳຄັນເພື່ອທີ່ຈະພັດທະນາເຂດຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກໃນພາກພື້ນພາກເໜືອທີ່ທຸກຍາກຂອງ ສປປ ລາວ. ນະໂຍບາຍ ສປປ ລາວ ໃຫ້ບຸລິມະສິດແກ່ການຂະຫຍາຍການສະໜອງ/ຄອບຄຸມຂອງໄຟຟ້າໃນທຸກໆແຂວງ ເພື່ອທີ່ຈະສົ່ງເສີມການພັດທະນາເສດຖະກິດສັງຄົມ. ເພື່ອທີ່ຈະບັນລຸເປົ້າໝາຍຂອງລັດຖະບານ ໃນການສະໜອງກະແສໄຟຟ້າໃຫ້ໄດ້ 90% ກ່ອນປີ 2020, ການສະໜອງພະລັງງານໄຟຟ້າແມ່ນມີຄວາມຈຳເປັນຕ້ອງມີການຂະຫຍາຍ. ໃນພາກພື້ນທາງພາກເໜືອ, ເອດີບີຈະສືບຕໍ່ລົງທຶນໃນການພັດທະນາຂອງຕາໜ່າງເຄືອຄ່າຍສາຍສົ່ງ ແລະ ການສະໜອງພະລັງງານທ້ອງຖິ່ນ. ເພື່ອທີ່ຈະສະໜອງແຜນງານໄຟຟ້າ ແລະ ປັບປຸງຄວາມພຽງພໍຂອງການຜະລິດ, ການສະໜອງພະລັງງານທີ່ຫຼາກຫຼາຍ ແລະ ພຽງພໍແມ່ນມີຄວາມຈຳເປັນ ອີງໃສ່ດ້ານເຕັກນິກ. ການສຶກສາຍຸດທະສາດຂະແໜງພະລັງງານສຳລັບ ສປປ ລາວ ປະກອບຄຳເຫັນວ່າ ຕາມແລວຊາຍແດນພາກເໜືອ, ການເຊື່ອມຕໍ່ຊາຍແດນຂ້າມຜ່ານ ແລະ ການຄ້າພະລັງງານກັບບັນດາປະເທດໃກ້ຄຽງຈະເປັນທາງເລືອກດ້ານເສດຖະກິດ. ນອກນັ້ນ, ແຜນດັ່ງກ່າວເປັນໜຶ່ງໃນແຜນງານອານຸພາກພື້ນແມ່ນ້ຳຂອງ,ໂຄງການເຊື່ອມຕໍ່ພະລັງງານທີ່ຈັດຕັ້ງການເຊື່ອມຕໍ່ຂອງລະບົບພະລັງງານອານຸພາກພື້ນໄດ້ລິເລີ້ມແລ້ວ. ມັນຈະສະໜອງຄວາມຮຽກຮ້ອງຕ້ອງການທີ່ເພີ່ມຂື້ນໃນພາກພື້ນທາງພາກເໜືອ ຜ່ານສາຍສົ່ງພະລັງງານກຳລັງສູງ. ໂຄງການຈະໃຫ້ຄວາມສະດວກການພັດທະນາການແລກປ່ຽນພະລັງງານພາກພື້ນລະຫວ່າງບັນດາປະເທດອານຸພາກພື້ນແມ່ນ້ຳຂອງ ແລະ |

| | |
|---|---|
| | ຕອບສະໜອງການສະໜອງພະລັງງານທີ່ພຽງພໍໃຫ້ແກ່ພາກພື້ນພາກເໜືອຂອງ ສປປ ລາວ. |
| **ຊື່ໂຄງການ** | **ໂຄງການພັດທະນາພະລັງງານໄຟຟ້ານ້ຳຕົກ ນ້ຳງື່ມ 3 ອານຸພາກພື້ນແມ່ນ້ຳຂອງ (47.0 ລ້ານໂດລາ)** |
| ເປົ້າໝາຍ, ອົງປະກອບ, ແລະ ຜົນໄດ້ຮັບ | ໂຄງການໄດ້ມີສ່ວນຮ່ວມໃນການພັດທະນາ, ກໍ່ສ້າງ ແລະ ດຳເນີນການຜະລິດ ຂອງເຂື່ອນໄຟຟ້າທີ່ມີກຳລັງຕິດຕັ້ງຂະໜາດ 440 ເມກາວັດ (MW) ທີ່ມີກຳລັງການຜະລິດພະລັງງານໄຟຟ້າ 2,191 ກິກາວັດໂມງ. ໂຄງການແມ່ນຢູ່ພາຍໃຕ້ການຮ່ວມມືລັດເອກະຊົນລະຫວ່າງກົມປະຕິບັດງານຂະແໜງເອກະຊົນແລະພະແນກໂຄງລ່າງຂອງກົມອາຊີອາຄະເນໃນການສະໜັບສະໜູນເປົ້າໝາຍການຂະຫຍາຍຕົວຂອງເສດຖະກິດຂອງ ສປປ ລາວ ໃນຄະນະດຽວກັນ ເພື່ອແນໃສ່ ຕອບສະໜອງ ຄວາມຮຽກຮ້ອງຕ້ອງການຂອງການໄຟຟ້າຝ່າຍຜະລິດຂອງປະເທດໄທ. ໂຄງການຕັ້ງຢູ່ໃນບໍລິເວນແມ່ນ້ຳງື່ມ, ຢູ່ເໜືອອ່າງເກັບນ້ຳງື່ມ 1 ປະມານ 58 ກິໂລແມັດ ໃນເມືອງໄຊສົມບູນ. ການຈັດຕັ້ງປະຕິບັດໂຄງການແມ່ນຢູ່ພາຍໃຕ້ສັນຍາສຳປະທານກັບລັດຖະບານ ສປປ ລາວ ມີອາຍຸສັນຍາ 25 ປີ ນັບຕັ້ງແຕ່ ມື້ທີ່ເລີ່ມຕົ້ນຜະລິດເພື່ອສົ່ງຂາຍ. ບໍລິສັດໄຟຟ້ານ້ຳງື່ມ 3 ຈະເຊັນສັນຍາຊື້ຂາຍກັບອົງການໄຟຟ້າຝ່າຍຜະລິດຂອງປະເທດໄທເພື່ອທີ່ຈະສົ່ງຂາຍປະມານ 92% ຂອງກຳລັງໄຟຟ້າທີ່ຜະລິດໄດ້ພາຍໃຕ້ເງື່ອນໄຂສົ່ງສິນຄ້າ ແລະ ເໝົາໝົດທີ່ເປັນເວລາ 25 ປີ. ໂຕເຂື່ອນຈະເຮັດໜ້າທີ່ຄືກັບລະບົບກັກເກັບນ້ຳ ໂດຍອ່າງເກັບນ້ຳສາມາດເກັບນ້ຳໄດ້ 3,000,000 ແມັດກ້ອນແລະໂຕເຂື່ອນ. ຮູບແບບຂອງເຂື່ອນປະກອບດ້ວຍ: (i) ສະຖານນີຜະລິດໄຟຟ້າໃຕ້ດິນທີ່ມີກຳລັງຕິດຕັ້ງຂະໜາດ 2 x 220 ເມກາວັດ (MW), (ii) ຄວາມສູງຂອງສັນເຂື່ອນ 220 ແມັດ ສາມາດເກັບຮັກສານ້ຳໄດ້ 3,000,000 ແມັດກ້ອນ, ແລະ (iii) ສາຍສົ່ງຂະໜາດ 250 ກິໂລໂວ້ນ ຍາວ 105 ກິໂລແມັດ ຫາສະຖານນີຍ່ອຍບ້ານນາບົງ |
| ເປົ້າໝາຍ, ອົງປະກອບ, ແລະ ຜົນໄດ້ຮັບ | ໂຄງການແມ່ນໜຶ່ງໃນບັນດາໂຄງການທີ່ສຳຄັນທີ່ປະກອບຢູ່ໃນແຜນການສົ່ງອອກພະລັງງານຂອງລັດຖະບານເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການພະລັງງານຂອງປະເທດໄທ. 3,300 ເມກາວັດ ຈະສົ່ງອອກໄປປະເທດໄທພາຍໃຕ້ບົດບັນທຶກຊ່ວຍຈຳໃນ ປີ 1996. ໂຄງການປະກອບສ່ວນໃຫ້ລັດຖະບານໃນການພັດທະນາຄວາມສາມາດໃນການຜະລິດໄຟຟ້າເພື່ອສົ່ງອອກ. ລາຍໄດ້ຈາກການສົ່ງອອກພະລັງງານພາຍໃຕ້ໂຄງການ (ປະມານ 600 ລ້ານໂດລາ ໃນໄລຍະ25ປີ) ທີ່ຈະຖືກນຳໃຊ້ເຂົ້າໃນແຜນງານພັດທະນາຂອງລັດຖະບານຕໍ່ໄປ. ພ້ອມກັນນີ້, 8% ຂອງກຳລັງການຜະລິດຂອງໂຄງການຈະສະໜອງໃຫ້ແກ່ໄຟຟ້າລາວ ແລະ ຈະຊ່ວຍຕອບສະໜອງໄຟຟ້າໃຫ້ທ້ອງຖິ່ນເພີ່ມຂຶ້ນ. ຍັງມີບາງໂຄງການພາຍໃຕ້ລະບົບພະລັງງານຂອງ ສປປ ລາວ ແລະ ປະເທດລາວໄທ ທີ່ຈະສົ່ງອອກໄຟຟ້າຈາກ ສປປ ລາວ: (i) ນ້ຳງື່ມ, ນ້ຳເທີນ ແລະ ເຊກອງ ແມ່ນມີຍຸດທະສາດທີ່ຈະຕອບສະໜອງໃຫ້ແກ່ທັງສອງປະເທດ (ກ) ພາກເໜືອຂອງປະເທດໄທທີ່ຂາດຄວາມສາມາດໃນການຜະລິດ; ແລະ (ຂ) ກຸງເທບປະລິມົນທົນ; (ii) ຄວາມຕ້ອງການຊົມໃຊ້ສູງສຸດຂອງ ສປປ ລາວ ແລະ ໄທ ມີຄາວມແຕກຕ່າງກັນດັ່ງນັ້ນມັນສາມາດຜັດປ່ຽນກັນຊົມໃຊ້ມື້ຕໍ່ມື້; ແລະ (iii) ການຕອບສະໜອງພະລັງງານຈາກ ສປປ ລາວ ຍັງຊ່ວຍໃຫ້ປະເທດໄທຫຼຸດຜ່ອນການນຳເຂົ້າແກ໋ດສມຳມະຊາດຈາກປະເທດພະມ້າ. ເພາະສະນັ້ນ, ຍຸດທະສາດຂອງໂຄງການບໍ່ພຽງແຕ່ຕອບສະໜອງພະລັງງານໃຫ້ແກ່ພາກເໜືອຂອງປະເທດໄທເທົ່ານັ້ນ, ແຕ່ມັນຍັງສອດຄ່ອງກັບຍຸດທະສາດຂອງປະເທດໄທໃນການຊອກຫາ ແຫຼ່ງສະໜອງພະລັງງານ. |
| **ຊື່ໂຄງການ** | ສ້າງຄວາມເຂັ້ມແຂງໃຫ້ແກ່ການປ້ອງກັນໂລກ HIV/AIDS ອະນຸພາກພື້ນແມ່ນ້ຳຂອງ (5.0 ລ້ານໂດລາ) |
| ເປົ້າໝາຍ, ອົງປະກອບ, ແລະ ຜົນໄດ້ຮັບ | ເປົ້າໝາຍຂອງໂຄງການແມ່ນການຊ່ວຍຢັບຢັ້ງການແຜ່ລາມຂອງເຊື້ອ HIV ໃນຂົງເຂດອານຸພາກພື້ນ. ມັນຈະສະໜັບສະໜູນການພັດທະນາຄວາມສາມາດຂອງຊັບພະຍາກອນມະນຸດສະເພາະສຳລັບການຄຸ້ມຄອງທີ່ໄດ້ຮັບການປັບປຸງຂອງແຜນງານ ແລະ ແຫຼ່ງ HIV/AIDS ໃນຂົງເຂດອານຸພາກພື້ນແມ່ນ້ຳຂອງ, ໂດຍສະເພາະແມ່ນຕິດພັນກັບບັນດາໂຄງການພື້ນຖານໂຄງລ່າງຂະໜາດໃຫ່ຍ ແລະ ການພັດທະນາຂອງສູນກາງການຂະຫຍາຍໂຕດ້ານເສດຖະກິດ. ອົງປະກອບ ແລະ ຜົນຂອງການດຳເນີນງານລວມມີ (i) ແຜນງານການຝຶກອົບຮົມພາກພື້ນເພື່ອການພັດທະນາຄວາມສາມາດໃຫ້ແກ່ບັນດາຜູ້ບໍລິຫານແຜນງານຂັ້ນກາງ HIV/AIDS ໃນຂົງເຂດຂອງການເງິນສາກົນ, ການອອກແບບແຜນງານ ແລະ ການຈັດຕັ້ງປະຕິບັດ, ແລະ ການປະເມີນ ແລະ ຕິດຕາມ, ທີ່ເນັ້ນໜັກສະເພາະໃສ່ຜູ້ຈັດການ ແລະ ຄວາມສາມາດທີ່ຕ້ອງການສຳລັບແຜນງານການປ້ອງກັນໃນໂຄງການພັດທະນາພັດທະພື້ນຖານໂຄງລ່າງ (ເສັ້ນທາງ, ທາງລົດໄຟ, ພະລັງງານ), ສູນກາງການຂະຫຍາຍໂຕເສດຖະກິດ, ແລະ ເຂດຊາຍແດນ; (ii) ແຜນງານຂອງການເກັບກຳຂໍ້ມູນ,ການວິເຄາະ, ແລະ ການຖ່າຍທອດຄວາມຮູ້ສຳລັບການຈັດຕັ້ງການປະເມີນຜົນກະທົບດ້ານເສດຖະກິດ ແລະ ຄວາມທຸກຍາກ ເພື່ອທີ່ຈະສະໜັບສະໜູນເປົ້າໝາຍຍຸດທະສາດ ແລະ ແຜນງານ, ແລະ (iii) ການສະໜັບສະໜູນແຜນງານການຄວບຄຸມ HIV/AIDS ແລະ ຄວາມສາມາດສຳລັບກິດຈະກຳການຄວບຄຸມໂດຍຜ່ານການພັດທະນາຂອງຄວາມສາມາດທາງດ້ານວິຊາການໃນດ້ານລະບາດວິທະຍາ, ນັກວິທະຍາສາດສັງຄົມ ແລະ ອື່ນໆ. ໃນການຈັດຕັ້ງປະຕິບັດ, ການວິເຄາະ ແລະ ການນຳໃຊ້ຂໍ້ມູນການຄວບຄຸມໃນການປັບປຸງຜົນຕອບສະໜອງຂອງແຜນງານ. |

| | |
|---|---|
| ຜົນທີ່ຄາດວ່າຈະໄດ້ຮັບ | ໂຄງການຄາດວ່າຈະສ້າງຜູ້ຈັດການວິຊາການຂະແໜງການລັດ ແລະ ຄຸ້ມຄອງພ້ອມກັນກັບຄວາມສາມາດສຳລັບການພັດທະນາແຜນປ້ອງກັນ ແລະ ການຄຸ້ມຄອງ HIV/AIDS |
| **ຊື່ໂຄງການ** | **ການປັບປຸງຕາໜ່າງຂົນສົ່ງພາກເໜືອ ອານຸພາກພື້ນແມ່ນ້ຳຂອງ 2 ( 20.0 ລ້ານໂດລາ)** |
| ປົ້າໝາຍ, ອົງປະກອບ, ແລະ ຜົນໄດ້ຮັບ | ການປັບປຸງຄວາມມີປະສິດທິພາບຂອງການຂົນສົ່ງຕາມແລວພາກເໜືອອານຸພາກພື້ນແມ່ນ້ຳຂອງ ແລະ ເສັ້ນທາງຊອຍທີ່ເຂົ້າເຖິງຊົນນະບົດ, ໂຄງການຈະປະກອບສ່ວນເຮັດໃຫ້ເສດຖະກິດຂະຫຍາຍໂຕແລະຫຼຸດຜ່ອນຄວາມທຸກຍາກໃນສອງແຂວງທີ່ຖືວ່າເປັນແຂວງທີ່ທຸກຍາກທີ່ສຸດໃນບັນດາແຂວງຕ່າງໆຂອງ ສປປ ລາວ ແລະ ຫວຽດນາມ. ໂຄງການຈະໃຫ້ເອດີບີສ້າງຜົນປະໂຫຍດສູງສຸດຂອງການລົງທຶນຂະແໜງການຂົນສົ່ງໃນການປັບປຸງໃຫ້ແກ່ແລວເສດຖະກິດເໜືອໄຕ້.ໂຄງການຈະປະກອບເສີມກິດຈະກຳການຫຼຸດຜ່ອນຄວາມທຸກຍາກ ແລະ ການພັດທະນາເສດຖະກິດທີ່ເອດີບີກຳລັງສະໜັບສະໜູນທາງດ້ານການເງິນໃນຂົງເຂດໂຄງການແຂວງຫົວພັນໃນ ສປປ ລາວ ແລະ ແຂວງທັນໂຫປະເທດຫວຽດນາມ,ທີ່ເປັນເຂດທີ່ປະກອບສ່ວນໃຫ້ແກ່ກິດຈະກຳການພັດທະນາເສດຖະກິດ ໂດຍລວມຂອງແລວ. ການອອກແບບໂຄງການ ແລະ ການສຶກສາຄວາມເປັນ ໄປໄດ້ກຳລັງມີການກະກຽມສຳລັບເສັ້ນທາງ 217 ຄວາມຍາວປະມານ 200 ກິໂລແມັດໃນແຂວງ ທັນໂຫໃນປະເທດ ຫວຽດນາມ ແລະ ເສັ້ນທາງ ເລກ 6, ໄລຍະ 6A, ແລະ 6B ໃນແຂວງຫົວພັນ ຍາວປະມານ 140 ກິໂລແມດ ໃນ ສປປ ລາວ. ການອອກແບບໂຄງການ ແລະ ການສຶກສາຄວາມເປັນໄປໄດ້ຈະໃຫ້ບຸລິມະສິດ, ຄັດເລືອກ, ແລະ ກວມເອົາເສັ້ນທາງຊອຍທີ່ສາມາດເຂົ້າເຖິງເຂດຊົນນະບົດທີ່ເຊື່ອມຕໍ່ແລວໃສ່ເມືອງທ່າໃນ ສປປ ລາວ ແລະ ຫວຽດນາມຍາວປະມານ 200 ກິໂລແມັດ. ຜົນທີ່ຈະໄດ້ຮັບລວມມີ (i) ການຄາດຄະເນການຈໍລະຈອນສຳລັບເສັ້ນທາງໂຄງການ; (ii) ການອອກແບບເບື້ອງຕົ້ນ ແລະ ການປະເມີນຄ່າໃຊ້ຈ່າຍ; (iii) ການວິເຄາະທາງດ້ານເສດຖະກິຂອງການປັບປຸງເສັ້ນທາງທີ່ສະເໜີ; (iv)ການວິເຄານສະພາບແວດລ້ອມ, ສັງຄົມ, ການຍົກຍ້າຍຖິ່ນຖານ, ແລະ ຜົນກະທົບຂອງໂຄງການຕໍ່ປະຊາຊົນບັນດາຊົນເຜົ່າ; ແລະ ການກະກຽມຂອງການສຶກສາສະພາບແວດລ້ອມຂັ້ນເລີ້ມຕົ້ນ, ແຜນການຍົກຍ້າຍຖິ່ນຖານ, ແລະ ແຜນການສະເພາະຊົນເຜົ່າ; (v) ເອກະສານທີ່ຈຳເປັນສຳລັບການຮັບຮອງຂອງໂຄງການໂດຍລັດຖະບານຂອງ ສປປ ລາວ ແລະ ຫວຽດນາມ; ແລະ (vi) ການວິເຄາະ ແລະ ປັບປຸງທີ່ໄດ້ຮັບການຊີ້ນຳສຳລັບການຈັດຕັ້ງປະຕິບັດຂອງການສັນຈອນຂອງຜູ້ຄົນ ແລະ ການຈໍລະຈອນຂອງສິນຄ້າ ຕາມແລວຊາວຍແດນພາຍໄຕ້ເສັ້ນທາງໂຄງການ. |
| ຜົນທີ່ຄາດວ່າຈະໄດ້ຮັບ | ໂຄງການຄາດວ່າຈະສາມາດເພີ່ມຄວາມມີປະສິດທິພາບຂອງພື້ນຖານໂຄ່ງລ່າງການຂົນສົ່ງໃນແລວເໜືອໄຕ້ ອານຸພາກພື້ນແມ່ນ້ຳຂອງ ແລະ ຕາໜ່າງເສັ້ນທາງແຫ່ງຊາດ ຂອງ ສປປ ລາວ ແລະ ຫວຽດນາມ |
| **ຊື່ໂຄງການ** | **ການຊ່ວຍເຫຼືອລ້າເພີ້ມ ສຳລັບໂຄງການປັບປຸງຕາໜ່າງການຂົນສົ່ງພາກເໜືອອານຸພາກພື້ນແມ່ນ້ຳຂອງ (15.0 ລ້ານໂດລາ)** |
| ເປົ້າໝາຍ, ອົງປະກອບ, ແລະ ຜົນໄດ້ຮັບ | ການຊ່ວຍເຫຼືອລ້າເພີ້ມຈະປະກອບທຶນເພີ້ມເຕີມສຳລັບເງິນຊ່ວຍເຫຼືອລ້າ 0082-ລາວ: ໂຄງການປັບປຸງຕາໜ່າງການຂົນສົ່ງພາກເໜືອ ອານຸພາກພື້ນແມ່ນ້ຳຂອງ. ໂຄງການຈະເອື້ອອຳນວຍຄວາມສະດວກການຮ່ວມມືພາກພື້ນ ແລະ ຂະຫຍາຍການເຕີບໂຕເສດຖະກິດໃນອານຸພາກພື້ນແມ່ນ້ຳຂອງໂດຍມີການປັບປຸງເສັ້ນທາງທີ່ເຊື່ອມຕໍ່ຂົງເຂດຫຼວງພະບາງໃສ່ແລວຊາຍແດນຂອງ ສປປ ລາວ ແລະ ໄທ. ການປັບປຸງຂອງເສັ້ນທາງເສັ້ນນີ້ຈະອຳນວຍຄວາມສະດວກໃຫ້ແກ່ການສົ່ງອອກຂອງຜະລິດຕະພັນກະສິກຳຕາມແລວໂຄງການໄປປະເທດໄທເພີ້ມຂື້ນ ແລະ ນັກທ່ອງທ່ຽວເຂົ້າມາຫຼວງພະບາງ ແລະ ພາກເໜືອຂອງ ສປປ ລາວ ກໍ່ຈະເພີ້ມຂື້ນໂດຍລວມ. ໂຄງການຈະຊ່ວຍໃນການຂະຫຍາຍການຄ້າ ແລະ ເຮັດໃຫ້ເສດຖະກິດຂະຫຍາຍໂຕຕາມແລວ/ຂົງເຂດໂຄງການ ແລະ ພາກພື້ນ. ອົງປະກອບທີ່ສຳຄັນຂອງໂຄງການປະກອບມີ (i) ການປັບປຸງເສັ້ນທາງເລກ 4 ຈາກຊຽງເງິນ ຫາ ນາຄ່າ, ການກໍ່ສ້າງຂົວຂ້າມແມ່ນ້ຳຂອງຕາມເສັ້ນທາງໂຄງການ, ແລະ ການປັບປຸງເສັ້ນທາງຊອຍທີ່ສາສາດເຂົ້າເຖິງຊົນນະບົດປະມານ 100 ກິໂລແມດ; (ii) ການຈັດຊື້ອຸປະກອນໃຫ້ແກ່ການດຳເນີນງານ ແລະ ໃຫ້ຄວາມສະດວກໃນການຜ່ານດ່ານແກ່ນທ້າວ ແລະ ການບັງຄັບໃຊ້ການຄວບຄຸມສາຍພານ ທາງຂອງໂຄງການ; (iii) ການໃຫ້ຄຳປຶກສາໃນການບໍລິຫານການກໍ່ສ້າງ ການຕິດຕາມ ແລະ ການປະເມີນທີ່ດີອີງຕາມການອອກແບບຂອງເສັ້ນທາງຊອຍທີ່ສາມາດາເຂົ້າເຖິງຊົນນະບົດ; (iv) ການສະໜອງທຶນໃນການບູລະນະຮັກສາທາງເປັນໄລຍະຂອງຕາໜ່າງເສັ້ນທາງແຫ່ງຊາດ; (v) ໃຫ້ຄຳປຶກສາສຳລັບການປັບປຸງຄວາມປອດໄພໃນການໃຊ້ຖະໜົນໂດຍການສືບຕໍ່ແຜນງານການຊ່ວຍເຫຼືອຄວາມປອດໄພໃນການໃຊ້ຖະໜົນທີ່ກຳລັງດຳເນີນຢູ່; (vi) ແຜນງານເພື່ອທີ່ຈະລົດຄວາມສ່ຽງຂອງໂລກຕິດຕໍ່ທາງເພດສຳພັນ HIV/AIDS ແລະ ການຄ້າມະນຸດທີ່ອາດຈະເກີດຂຶ້ນໃນໄລຍະຂອງດຳເນີນການປັບປຸງ ແລະ ກໍ່ສ້າງຂອງທາງໂຄງການ. ການສະໜອງທຶນເພີ່ມເຕີມລ້າຈະຮັບປະກັນທາງການເງິນທີ່ພຽງພໍສຳລັບວຽກງານກໍ່ສ້າງເນື່ອງຈາກວ່າລາຄານ້ຳມັນສູງຂຶ້ນ ແລະ ໂຄງການກໍ່ໄດ້ຮັບອະນຸມັດ ໃນເດືອນ ກັນຍາ ປີ 2007. |

| | |
|---|---|
| ຜົນທີ່ຄາດວ່າຈະໄດ້ຮັບ | ຜົນຂອງການດໍາເນີນງານຂອງໂຄງການຈະເຮັດໃຫ້ການຂົນສົ່ງຕາມຕາໜ່າງຂົນສົ່ງພາກພື້ນ ແລະ ແຫ່ງຊາດມີປະສິດທິພາບຫຼາຍຂື້ນ. ຜົນຂອງການດໍາເນີນງານຂອງໂຄງການຈະປະກອບມີການປັບປຸງເສັ້ນທາງເລກ 4 ຍາວ 367 ກິໂລແມັດ ແລະ ເສັ້ນທາງຊອຍທີ່ສາມາດເຂົ້າເຖິງຊົນນະບົດ ຍາວ 100 ກິໂລແມັດ, ການຍົກຍາຍຖິ່ນຖານ ແລະ ການຕອບແທນຄືນຂອງຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ, ສໍາເລັດການສ້ອມແປງເສັ້ນທາງແຫ່ງຊາດເປັນໄລຍະ, ປັບປຸງຄວາມປອດໄພຕາມເສັ້ນທາງ, ແລະ ເພີ່ມຄວາມຮັບຮູ້ກ່ຽວກັບ HIV/AIDS ແລະ ການຄ້າມະນຸດ. |
| **ຊື່ໂຄງການ** | **ໂຄງການສຸຂະອານາໄມ ແລະ ນ້ຳປະປາ ອານຸພາກພື້ນແມ່ນ້ຳຂອງ ( 1.0 ລ້ານໂດລາ)** |
| ເປົ້າໝາຍ, ອົງປະກອບ, ແລະ ຜົນໄດ້ຮັບ | ໂຄງການແນໃສ່ເພື່ອຟື້ນຟູ ແລະ ປັບປຸງລະບົບນ້ຳປະປາ ແລະ ການໃຫ້ບໍລິການສຸຂະອານາໄມໃນ 9 ຕົວເມືອງຕາມແລວເສດຖະກິດ ອານຸພາກພື້ນແມ່ນ້ຳຂອງໃນປະເທດ ກຳປູເຈຍ, ສປປ ລາວ, ແລະ ຫວຽດນາມ. ຜົນທີ່ຄາດວ່າຈະໄດ້ຮັບລວມມີ (i) ເລັ່ງສ້າງລະບົບນ້ຳປະປາເພື່ອຫຼຸດຜ່ອນຄວາມທຸກຍາກ ແລະ ການລົງທຶນດ້ານສຸຂະອານາໄມໃນບັນດາຕົວເມືອງທີ່ຍັງຂາດເຂີນ; (ii) ເສີມຂະຫຍາຍຄວາມສາມາດຊັບພະຍາກອນມະນຸດ ແລະ ສະຖາບັນທັງພາກພື້ນ ແລະ ທ້ອງຖິ່ນເພື່ອທີ່ຈະເຮັດໃຫ້ການບໍລິການສຸຂະອານາໄມ ແລະ ນ້ຳປະປາໃຫ້ມີຄວາມຍືນຍົງ; (iii) ປະຕິຮູບຂະແໜງການທ້ອງຖິ່ນ; ແລະ (iv) ຜັນຂະຫຍາຍຄວາມສາມາດຂອງພາກສ່ວນຂະແໜງການເອກະຊົນທ້ອງຖິ່ນໃນການໃຫ້ການບໍລິການ. ໂຄງການແມ່ນຖືກອອກແບບເພື່ອ (i) ກໍ່ສ້າງສິ່ງອຳນວຍຄວາມສະດວກໃນການສືບຕໍ່ສະໜອງນ້ຳສະອາດໃຫ້ແກ່ຜູ້ຢູ່ອາໃສ 200,000 ຄົນຂອງບັນດາ 9 ຕົວເມືອງທີ່ມີຄວາມຂາດແຄນ; (ii) ການພັດທະນາຍຸດທະສາດສຸຂະອານາໄມເພື່ອທີ່ຈະໄດ້ມີການຮັບຮອງເອົາໂດຍແຕ່ລະເມືອງ, ທີ່ກວມເອົາການດຳເນີນງານໄລຍະສັ້ນ ແລະ ໄລຍະຍາວ; (iii) ການຈັດຕັ້ງແຜນການດຳເນີນງານໄລຍະສັ້ນ ແລະ ຍາວ, ລວມທັງ ການກໍ່ສ້າງຂອງພື້ນຖານໂຄງລ່າງ, ໃນບັນດາເມືອງທີ່ມີຄວາມຂາດເຂີນ; (iv) ຮັບປະກັນການສະໜອງ ແລະ ການເຂົ້າເຖິງລະບົບນ້ຳປະປາ ແລະ ການບໍລິການສຸກຂະລະນາໄມແບບຍືນຍົງໃຫ້ແກ່ປະຊາຊົນທີ່ທຸກຍາກເຂດຕົວເມືອງ; (v) ສ້າງຄວາມເຂັ້ມແຂງຄວາມສາມາດສະຖາບັນ, ເຕັກນິກ, ແລະ ການເງິນ ຂອງຜູ້ດຳເນີນງານພາກລັດ ແລະ ຂະແໜງເອກະຊົນ ໃນການສະໜອງການໃຫ້ການບໍລິການນ້ຳ ແລະ ສຸຂະອານາໄມ. |
| ຜົນທີ່ຄາດວ່າຈະໄດ້ຮັບ | ໂຄງການຄາດວ່າຈະຊ່ວຍຂະຫຍາຍລະບົບນ້ຳປະປາແບບຍືນຍົງ ແລະ ການໃຫ້ການບໍລິການສຸກຂະລະນາໄມໃນບັນດາ 9 ຕົວເມືອງຂາດເຂີນທີ່ຄັດເລືອກໃນ ກຳປູເຈຍ, ສປປ ລາວ, ແລະ ຫວຽດນາມ, ທີ່ສິ່ງຜົນໃຫ້ແກ່ການປັບປຸງສະພາບແວດລ້ອມ ແລະ ກ້າວໄປສູ່ການເພີ່ມຂຶ້ນຢ່າງຂາດໂຕຂອງການລົງທຶນ ແລະ ຫຼຸດຜ່ອນຄວາມທຸກຍາກ. |

## ຂ: ແຜນການປະເພດການຊ່ວຍເຫຼືອທີ່ບໍ່ແມ່ນເງິນກູ້ ແລະການບໍລິການ, 2009

| | |
|---|---|
| **ຊື່ໂຄງການ** | **ໂຄງການພັດທະນາພື້ນຖານໂຄງລ່າງຊົນນະບົດ** (ການຊ່ວຍເຫຼືອວິຊາການການກະກຽມໂຄງການ 0.8 ລ້ານໂດລາ) |
| ເປົ້າໝາຍ, ອົງປະກອບ, ແລະ ຜົນໄດ້ຮັບ | ໂຄງການແນໃສເພື່ອປັບປຸງເງື່ອນໄຂເສດຖະກິດສັງຄົມຂອງຊຸມຊົນ ໃນຂົງເຂດໂຄງການໂດຍຜ່ານການຜັນຂະຫຍາຍການດຳລົງຊີວິດ ແລະ ການເຂົ້າເຖິງຕະຫຼາດ ແລະ ການໃຫ້ບໍລິການດ້ານສັງຄົມ. |
| ຜົນທີ່ຄາດວ່າຈະໄດ້ຮັບ | ໂຄງການຈະປະກອບສ່ວນໃຫ້ແກ່ເປົ້າໝາຍຂອງການເຊື່ອມຕໍ່ຊົນນະບົດ ແລະ ປັບປຸງການຜະລິດກະສິກຳໂດຍການປະກອບຂອງນະໂຍບາຍຕ່າງໆໃນຂະແໜງການ. ມັນຈະບັນລຸເປົ້າໝາຍໂດຍການສຸມໃສ່ນະໂຍບາຍຍຸດທະສາດພື້ນຖານໂຄງລ່າງຊົນນະບົດທີ່ສອດຄ່ອງ ໂດຍຜ່ານແຜນງານການກະຈາຍອຳນາດຂອງສະຖາບັນໄປພ້ອມກັນກັບການໃຫ້ຄວາມສຳຄັນທີ່ແທດເໝາະຕໍ່ນະໂຍບາຍທີ່ຍາວນານເພື່ອທີ່ຈະເຮັດໃຫ້ນະໂຍບາຍພື້ນຖານໂຄງລ່າງເສດຖະກິດຊົນນະບົດ ແລະ ຜົນຜະລິດມີຄວາມຍືນຍົງ. |
| **ຊື່ໂຄງການ** | ແຜນງານການພັດທະນາຂະແໜງການສຶກສາ (ການຊ່ວຍເຫຼືອວິຊາການການກະກຽມໂຄງການ 0.7 ລ້ານໂດລາ) |

| | |
|---|---|
| ປົ້າໝາຍ, ອົງປະກອບ, ແລະ ຜົນໄດ້ຮັບ | ເປົ້າໝາຍແມ່ໃສ່ການຈັດສັນງົບປະມານຄືນໃໝ່ໃຫ້ເໝາະສົມໂດຍການໃຫ້ຄວາມສຳຄັນຕໍ່ສິ່ງອຳນວຍຄວາມສະດວກດ້ານການສຶກສາ, ຫຼຸດຜ່ອນຈຳນວນພະນັກງານທີ່ຫຼາຍເກີນໄປ, ແລະ ສົ່ງເສີມໃຫ້ພາກເອກະຊົນເຂົ້າມາມີສ່ວນຮ່ວມ. ຈຸດປະສົງເພື່ອສ້າງຄວາມເຂັ້ມແຂງໃຫ້ການຄຸ້ມຄອງການສຶກສາ ແລະ ແຜນງານການສຶກສາ. ການປະຕິຮູບທີ່ສຳຄັນໃນໄລຍະຂອງການຈັດຕັ້ງປະບັດໂຄງການລວມມີ: (i) ການປັບໂຄງສ້າງຂອງໂຮງຮຽນ, (ii) ການຝຶກອົບຮົມໃຫ້ແກ່ພະນັກງານ. (iii) ສະໜັບສະໜູນການສຶກສາແຫ່ງຊາດ ແລະ ແຜນການດຳເນີນງານສຳລັບການສ້າງຄວາມເຂັ້ມແຂງໃຫ້ແກ່ການສຶກສາດ້ານເຕັກນິກ ແລະ ຂະແໜງການຝຶກອົບຮົມວິຊາຊີບ, ແລະ (v) ພັດທະນາຫຼັກສູດການສຶກສາ. |
| ຜົນທີ່ຄາດວ່າຈະໄດ້ຮັບ | ແຜນງານຈະໄດ້ຮັບການຈັດຕັ້ງປະຕິບັດໂດຍການຮ່ວມມືຢ່າງໃກ້ສິດກັບບັນດາຄູ່ຮ່ວມພັດທະນາອື່ນໆ ຜູ້ທີ່ໄດ້ປະສານງານກັບເອດີບີ ລວມທັງອົດສະຕາລີ ທີ່ໄດ້ສະໜອງການສະໜັບສະໜູນໃຫ້ແກ່ການພັດທະນາຂະແໜງສຶກສາ, ການພັດທະນາອຸປະກອນການຮຽນ, ແລະ ການຝຶກອົບຮົມໃຫ້ແກ່ອາຈານເພື່ອທີ່ຈະປະກອບເພີ້ມເຕີມກັບສິ່ງທີ່ເອດີບີກຳລັງເຮັດ ແລະ ເຫັນວ່າປະສົບຜົນສຳເລັດທີ່ໜ້າພໍໃຈ. ໃນຂົງເຂດຕົວເມືອງ, ແຜນງານແມ່ນແນໃສ່ການຂະຫຍາຍຈຳນວນໂຮງຮຽນໃນຂົງເຂດຮອບນອກຕົວເມືອງທີ່ທຸກທີ່ສຸດ ໂດຍສະເພາະຊຸມຊົນທີ່ຄອບຄົວທີ່ອາໃສໃນເຮືອນແບບພື້ນເມືອງ. ໃນຂົງເຂດຊົນນະບົດ, ແຜນງານຈະຈັດຫໍພັກໃຫ້ເດັກນ້ອຍຈາກຄອບຄົວຊົນເຜົ່າ ແລະ ສາມາດກິນອາຫານທີ່ໂຮງຮຽນ. ໄປພ້ອມໆກັບການຊ່ວຍໃຫ້ເດັກນ້ອຍເຂົ້າໂຮງຮຽນຫຼາຍຂຶ້ນ, ແຜນງານຈະຮັບປະກັນວ່າເຂົາຈະໄດ້ຮັບການສຶກສາທີ່ມີຄຸນນະພາບ. ສິ່ງເຫຼົ່ານີ້ຈະເປັນໄປໄດ້ໂດຍການລົງທຶນໃນການຝຶກອົບຮົມອາຈານ, ສະໜອງປຶ້ມຄູ່ຮຽນທີ່ທັນສະໄໝ, ແຜນງານວິທະຍາສາດທັນສະໄໝ, ແລະ ເຊື່ອມໂຍງຂໍ້ມູນ ແລະ ເຕັກໂນໂລຊີການຊື່ສານເຂົ້າໃນຫຼັກສູດການສຶກສາ. |
| **ຊື່ໂຄງການ** | ການປະເມີນຂະແໜງການເງິນ **(RDTA 0.5 ລ້ານໂດລາ)** |
| ເປົ້າໝາຍ, ອົງປະກອບ, ແລະ ຜົນໄດ້ຮັບ | ໂຄງການແນໃສການປະເມີນຜົນຂອງການດຳເນີນງານຂອງຂະແໜງການເງິນເພື່ອທີ່ຈະກຳນົດບັນຫາຄວາມທ້າທາຍ, ກາລະໂອກາດ, ແລະ ຊ່ອງຫວ່າງທີ່ເອດີບີ ພ້ອມກັບຄູ່ຮ່ວມພັດທະນາອື່ນໆສາມາດສືບຕໍ່ສະໜັບສະໜູນການປະຕິບັດນະໂຍບາຍລັດຖະບານ. ໃນຂັ້ນຕອນເບື້ອງຕົ້ນ, ການປະເມີນຄາດວ່າຈະກຳນົດບັນຫາການປະມູນເພື່ອທີ່ຈະປັບປຸງທະນາຄານການຄ້າຂອງລັດ; ປັບປຸງການບໍລິຫານທະນາຄານ; ແລະ ນຳເອົາພື້ນຖານໂຄງລ່າງການເງິນທີ່ຕ້ອງການເຂົ້າມາລວມທັງແຜນງານລະບຽບ ແລະ ສະຖາບັນສຳລັບຕະຫຼາດທຸລະກຳລະຫວ່າງທະນາຄານ, ຫ້ອງການຂໍ້ມູນຂ່າວສານສິນເຊື່ອ ແລະ ກອງທຶນປົກປ້ອງເງິນຝາກ. |
| ຜົນທີ່ຄາດວ່າຈະໄດ້ຮັບ | ອີງໃສ່ບົດຮຽນທີ່ຜ່ານມາຂອງໂຄງການຂອງເອດີບີໃນຂະແໜງການການເງິນ, ການປະເມີນຈະໃຫ້ຄວາມສຳຄັນດັ່ງນີ້ (i) ເສດຖະກິດການເມືອງ ແລະ ຄວາມພະຍາຍາມຂອງລັດຖະບານ ຕໍ່ວາລະການປະຕິຮູບທີ່ຈະແຈ້ງຕ້ອງໄດ້ຮັບການປະເມີນຢ່າງລະມັດລະວັງ, (ii) ການປັບໂຄງສ້າງທະນາຄານລັດທີ່ປັດສະຈາກການຈັດລຳດັບບູລິມະສິດແມ່ນມີຄວາມຫຍຸ້ງຍາກເພື່ອທີ່ຈະບັນລຸ, (iii) ປະສົບການທົ່ວໄປທີ່ກ່ຽວກັບການໃຫ້ກູ້ທີ່ອີງໃສ່ນະໂຍບາຍເປັນຫຼັກແມ່ນກຳລັງໄດ້ຮັບການຢືນຢັນໂດຍການປະເມີນຂອງແຜນງານນີ້, ທີ່ເປັນເງື່ອນໄຂເບື້ອງຕົ້ນຂອງກຳມະສິດການເປັນເຈົ້າການສຳລັບການປະຕິຮູບ, ຄວາມຕ້ອງການສຳລັບຄວາມພະຍາຍາມ ແລະ ຄວາມສາມາດທີ່ຈະປະຕິຮູບ, ແລະ ຄວາມເໝາະສົມຂອງແຫຼ່ງຊັບພະຍາກອນມະນຸດ; (iv) ຍຸດທະສາດການພັດທະນາຄວາມສາມາດທີ່ລະອຽດແມ່ນມີຄວາມຈຳເປັນທີ່ກວມເອົານະໂຍບາຍທັງໝົດ, ການບໍລິຫານຄຸ້ມຄອງ, ແລະ ໂຄງຮ່າງການສ້າງແຮງຈູງໃນທີ່ມີຜົນຕໍ່ຄວາມມີປະສິດທິພາບຂອງການຊ່ວຍເຫຼືອດັ່ງກ່າວ. |
| **ຊື່ໂຄງການ** | ການສະໜັບສະໜູນແຜນງານການພັດທະນາຂະແໜງສາທາ( ການຊ່ວຍເຫຼືອວິຊາການການກະກຽມໂຄງການ 0.5 ລ້ານໂດລາ) |
| ເປົ້າໝາຍ, ອົງປະກອບ, ແລະ ຜົນໄດ້ຮັບ | ເປົ້າໝາຍໂດຍລວມຂອງໂຄງການການຊ່ວຍເຫຼືອດ້ານວິຊາການແມ່ນເພື່ອປະກອບສ່ວນຕໍ່ການປັບປຸງສຸກຂະພາບຂອງຜູ້ທຸກຍາກໃນການບັນລຸເປົ້າໝາຍພັດທະນາສະຫັດສະຫວັດຂອງການຫຼຸດຜ່ອນການຕາຍຂອງແມ່ ແລະ ເດັກ. ມັນແນໃສ່ເພື່ອປັບປຸງຜົນຂອງການດຳເນີນງານຂະແໜງສາທາໂດຍສ້າງໃຫ້ມີການຮັກສາທີ່ມີຄຸນນະພາບ, ໂດຍສະເພາະແມ່ນຜູ້ທຸກຍາກ, ແມ່ຍິງ, ເດັກນ້ອຍ, ຊົນເຜົ່າໃນເຂດຊົນນະບົດ. ການສະໜັບສະໜູນສອງປະເພດຮ່ວມກັບບັນດາຕົວແທນອື່ນໆທີ່ເຫັນໄດ້ແຈ້ງແມ່ນ: (i) ການແນະນຳການປະຕິຮູບນະໂຍບາຍ ແລະ ໂຄງຮ່າງເພື່ອທີ່ຈະປັບປຸງໜ້າທີ່ຂອງຂະແໜງສາທາ, ໂດຍສະເພາະແມ່ນການໃຫ້ການຮັກສາສຸກຂະພາບໃນຂັ້ນພື້ນຖານເພື່ອຫຼຸດຜ່ອນຄວາມທຸກຍາກ; ແລະ (ii) ການສ້າງຄວາມເຂັ້ມແຂງໃຫ້ແກ່ການຮັກສາສຸກຂະພາບໃນຂັ້ນພື້ນຖານໃນເຂດ 8 ແຂວງພາກເໜືອ, ໂດຍສະເພາະແມ່ນການພັດທະນາຊັບພະຍາກອນມະນຸດ, ສາທາ, ແລະ ໂພສະນາການ. |
| ຜົນທີ່ຄາດວ່າຈະໄດ້ຮັບ | ໂຄງການການຊ່ວຍເຫຼືອດ້ານວິຊາການຈະຊ່ວຍ (i) ປະເມີນບັນຫາ ແລະ ໂອກາດສຳລັບການພັດທະນາລະບົບສາທາ; (ii) ຈັດຕັ້ງຂັ້ນຕອນການວາງແຜນແບບມີສ່ວນຮ່ວມເພື່ອທີ່ສ້າງບູລິມະສິດໃນການປະຕິຮູບນະໂຍບາຍ, ການສ້າງຄວາມສາມາດ, ແລະ ການລົງທຶນ; ແລະ (iii) ກະກຽມບົດສະເໜີແຜນງານ ແລະ ບົດຊ່ວຍຈຳຂອງການຈັດຕັ້ງປະຕິບັດສຳລັບການຊ່ວຍເຫຼືອ |

| | |
|---|---|
| | ຂອງເອດີບີທີ່ອາດຈະເປັນໄປໄດ້. ແຜນງານ ແລະ ແຜນງານຍຸດທະສາດທີ່ມີແລ້ວນີ້, ໂຄງການຊ່ວຍເຫຼືອວິຊາການຈະສຸມໃສ່ຫ້າຂົງເຂດ: ການພັດທະນາຊັບພະຍາກອນມະນຸດ, ການສະໜອງທຶນສາທາ, ການວາງແຜນ ແລະ ການຂື້ນງົບປະມານ, ການໃຫ້ການບໍລິການ ການໃຫ້ການຮັກສາສຸກຂະພາບໃນຂັ້ນພື້ນຖານ, ແລະ ສາທາ ແລະ ການສົ່ງເສີມໂພສະນາການ. |
| **ຊື່ໂຄງການ** | ການສຳຫຼວດຕະຫຼາດແຮງງານ (RDTA  0.5 ລ້ານໂດລາ) |
| ເປົ້າໝາຍ, ອົງປະກອບ, ແລະ ຜົນໄດ້ຮັບ | ໂຄງການຈະຈັດໃຫ້ມີການສຳຫຼວດຕະຫຼາດແຮງງານລາວ. ມັນຈະສຸມໃສ່ການວິເຄາະແນວໂນ້ມປະຈຸບັນ, ບັນຫາ, ໂອກາດ, ແລະ ຄວາມທ້າທາຍ |
| ຜົນທີ່ຄາດວ່າຈະໄດ້ຮັບ | ຜົນຂອງການສຳຫຼວດຈະປະກອບສ່ວນຕໍ່ການພັດທະນາຂອງລະບົບສະຖະຕິແຫ່ງຊາດພ້ອມທັງສ້າງການພັດທະນາຂອງຫຼັກສູດທີ່ອາດສາມາດພັດທະນາພາຍໃຕ້ໂຄງການການຝຶກອົບຮົມດ້ານເຕັກນິກ ແລະ ວິຊາຊີບ. |
| **ຊື່ໂຄງການ** | ສ້າງຄວາມເຂັ້ມແຂງຄວາມສາມາດໃຫ້ແກ່ກົມສະຖິຕິຂອງ ກະຊວງ ແຜນການ ແລະ ການລົງທຶນ, ໝວດການຊ່ວຍເຫຼືອ (C-CDTD 0.5 ລ້ານໂດລາ) |
| ເປົ້າໝາຍ, ອົງປະກອບ, ແລະ ຜົນໄດ້ຮັບ | ໂຄງການແນໃສ່ເພື່ອພັດທະນາຄວາມສາມາດສະຖາບັນຂອງ ສປປ ລາວ ສຳລັບຂະແໜງການສະຖິຕິໃຫ້ມີໜ້າທີ່ຄົບຖ້ວນ. ມັນຈະສຸມໃສ່ການພັດທະນາກົນໄກລະບົບປະສານງານ, ການຝຶກອົບຮົມ, ແລະ ອຸປະກອນຂອງກົມສະຖິຕິຂອງກະຊວງແຜນການ ແລະ ການລົງທຶນ. ມັນຈະໃຊ້ແນວທາງທີ່ມີລັກສະນະໝວດໝູ່ ແລະ ເນັ້ນໜັກໃສ່ບັນຫາລະບົບສະຖິຕິທີ່ຍັງອ່ອນແອ ແລະ ຄ້າງຄາມາຕະຫຼອດ. |
| ຜົນທີ່ຄາດວ່າຈະໄດ້ຮັບ | ໂຄງການຈະປະກອບສ່ວນໃຫ້ແກ່ເປົ້າໝາຍຂອງການຜັນຂະຫຍາຍຄວາມສາມາດຂອງລະບົບສະຖິຕິແຫ່ງຊາດ ຂອງ ສປປ ລາວ. ໜ້າທີ່ຫຼັກຂອງມັນຈະລວມເອົາການຝຶກອົບຮົມໃຫ້ແກ່ພະນັກງານຂອງກົມສະຖິຕິ, ແລະ ຈັດຫາອຸປະກອນໃຫ້ກົມທີ່ເຮັດໜ້າທີ່ເປັນຜູ້ປະສານງານຫຼັກຂອງວຽກງານສະຖິຕິໃນປະເທດເຊັ່ນ ຄອມພິວເຕີ, ກົນໄກການປະສານງານ, ຄູ່ມືການດຳເນີນງານ, ແລະ ດຳລັດວ່າດ້ວຍສະຖິຕິແຫ່ງຊາດ. |
| **ຊື່ໂຄງການ** | **ໂຄງການພັດທະນາຂະແໜງຂົນສົ່ງ** (ການຊ່ວຍເຫຼືອວິຊາການການກະກຽມໂຄງການ PPTA 0.7 ລ້ານໂດລາ) |
| ເປົ້າໝາຍ, ອົງປະກອບ, ແລະ ຜົນໄດ້ຮັບ | ໂຄງການແນໃສ່ປະກອບສ່ວນໃຫ້ແກ່ການພັດທະນາຂອງຂະແໜງຂົນສົ່ງ. ອົງປະກອບຈະກວມເອົາທັງເສັ້ນທາງແຫ່ງຊາດ ແລະ ແຂວງ |
| ຜົນທີ່ຄາດວ່າຈະໄດ້ຮັບ | ໂຄງການຈະເຮັດໃຫ້ມີຄວາມຕໍ່ເນື່ອງ, ສ້າງຄວາມສຳເລັດ ແລະ ບົດຮຽນຈາກວຽກງານທີ່ກຳລັງດຳເນີນຢູ່, ແລະ ແນໃສ່ເພື່ອສ້າງຜົນປະໂຫຍດສູງສຸດທີ່ໄດ້ຈາກການຂະຫຍາຍຂອງຕາໜ່າງເສັ້ນທາງ. ມັນຈະຕໍ່ເຕີມການສະໜັບສະໜູນການຊ່ວຍເຫຼືອຂອງເອດີບີ ທີ່ຜ່ານມາໃນຂະແໜງການ ແລະ ຊ່ວຍໃຫ້ລັດຖະບານບັນລຸເປົ້າໝາຍຂອງຂະແໜງການຂົນສົ່ງທີ່ວາງໄວ້ໃນແຜນພັດທະນາເສດຖະກິດສັງຄົມຄັ້ງທີ່6. |
| **ຊື່ໂຄງການ** | **ໂຄງການຄວບຄຸມໂລກຕິດຕໍ່ ອານຸພາກພື້ນແມ່ນ້ຳຂອງ ຂັ້ນທີ 2** (ການຊ່ວຍເຫຼືອວິຊາການການກະກຽມໂຄງການ ພາກພື້ນ 0.5 ລ້ານໂດລາ) |
| ເປົ້າໝາຍ, ອົງປະກອບ, ແລະ ຜົນໄດ້ຮັບ | ໂຄງການມີເປົ້າໝາຍເພື່ອທີ່ຈະປັບປຸງສະພາບແວດລ້ອມສາທາ ແລະ ຫຼຸດຜ່ອນພະລະແບກຫາບທີ່ເກີດຈາກໂລກຕິດຕໍ່ທີ່ມີຄວາມສຳຄັນແກ່ ກຳປູເຈຍ, ສປປ ລາວ, ແລະ ຫວຽດນາມ, ທີ່ເປັນຂົງເຂດທີ່ຈະຕ້ອງປະກອບສ່ວນໃນການກ້າວໄປສູ່ເປົ້າໝາຍພັດທະນາສະຫະສະຫວັດທີ່ກ່ຽວຂ້ອງກັບດ້ານສາທາ ກ່ອນປີ 2015. ການຈັດຕັ້ງປະຕິບັດຂອງໂຄງການຄາດວ່າຈະຊ່ວຍໃຫ້ມີການປັບປຸງການປ້ອງກັນ ແລະ ຈຳກັດຂອບເຂດຂອງໂລກຕິດຕໍ່ທີ່ບໍ່ຄາດຄິດໃນກຸ່ມປະຊາຊົນທີ່ມີຄວາມສ່ຽງສູງ, ໂດຍສະເພາະແມ່ນຜູ້ທຸກຍາກ, ແມ່ຍິງ ແລະ ເດັກນ້ອຍ, ແລະ ປະຊາຊົນເຂດຊົນເຜົ່າໃນ 20 ແຂວງ (6 ແຂວງໃນກຳປູເຈຍ, 6 ແຂວງໃນ ສປປ ລາວ, ແລະ 8 ແຂວງໃນ ຫວຽດນາມ). ໃນບັນດາແຂວງດັ່ງກ່າວນີ້ຖືວ່າເປັນແຂວງບູລິມະສິດສູງ ອີງໃສ່ການຄວບຄຸມຂອງໂລກຕິດຕໍ່ທີ່ບໍ່ຄາດຄິດ (CDC), ກ່ຽວກັບພາກພື້ນ ແລະ ສອດຄ່ອງກັບການລົງທຶນໃນຂະແໜງການອື່ນໆ. ຜົນຂອງການດຳເນີນງານທີ່ສຳຄັນສາມດ້ານທີ່ສາມາດເຫັນໄດ້: (i) ສ້າງຄວາມເຂັ້ມແຂງການ |

| | |
|---|---|
| | ສົ່ງເສີມການຄຸ້ມຄອງສະພາບແວດລ້ອມສາທາທ້ອງຖິ່ນໃນບັນດາ 20 ແຂວງບູລິມະສິດທີ່ເນັ້ນໜັກໃສ່ບັນຫາສະພາບແວດລ້ອມສາທາທີ່ສຳຄັນທີ່ນຳໃຊ້ຍຸດທະສາດ, ແນວທາງທີ່ອີງໃສ່ຂະແໜງການລວມໃນແຜນງານການຄຸ້ມຄອງທ້ອງຖິ່ນທີ່ໄດ້ຖືກຮັບຮອງ, ພ້ອມກັບການໃຫ້ຄວາມສຳຄັນພິເສດຕໍ່ກຸ່ມປະຊາຊົນທີ່ມີຄວາມສ່ຽງສູງ. ມັນຈະລວມເອົາແນວທາງການຈັດຕັ້ງນຳພາ, ການຝຶກອົບຮົມ; ແລະ ແຜນງານປະຈຳປີທີ່ລວມເອົາການລົບນະລ້າງສະພາບແວດລ້ອມສາທາ, ແລະ ການສົ່ງເສີມຫ້ອງກວດສຸກຂະພາບ ແລະ ສຸກສາລາ. (ii) ເປົ້າໝາຍຂອງການດຳເນີນງານສຳລັບການຄວບຄຸມໂລກຕິດຕໍ່ທີ່ບໍ່ຄາດຄິດທີ່ກ່ຽວກັບພາກພື້ນລວມທັງໝົດການຕິດເຊື້ອໄວລັດຜ່ານລະບົບຫາຍໃຈ, ແລະ ຖອກທ້ອງ ລວມທັງການຄວບຄຸມ ແລະ ການຕອບສະໜອງ. ມັນລວມທັງການປະເມີນຂອງກິດຈະກຳການສົ່ງເສີມດ້ານສາທາ ແລະ ສະໜັບສະໜູນການປັບປຸງຂອງສິ່ງເລົ່ານີ້. (iii) ຜັນຂະຫຍາຍການຮ່ວມມືພາກພື້ນ ສຳລັບການຄວບຄຸມໂລກຕິດຕໍ່ທີ່ບໍ່ຄາດຄິດ (CDC) ແລະ ການພັດທະນາລະບົບປ້ອງກັນສາທາທ້ອງຖິ່ນ, ໂດຍຜ່ານ (ກ) ສ້າງຄວາມເຂັ້ມແຂງຄວາມສາມາດສະຖາບັນສຳລັບການຮ່ວມມື ການຄວບຄຸມໂລກຕິດຕໍ່ທີ່ບໍ່ຄາດຄິດ (CDC), (ຂ) ການຄຸ້ມຄອງຄວາມຮູ້ ແລະ ການພັດທະນາຊັບພະຍາກອນມະນຸດ, ແລະ (ຄ) ການຮ່ວມມືຕາມແລວຊາຍແດນ ສຳລັບການຄວບຄຸມໂລກຕິດຕໍ່ທີ່ບໍ່ຄາດຄິດ (CDC) ແລະ ກາຍບໍລິການມັນຈະລວມທັງການຄຸ້ມຄອງໂຄງການພາກພື້ນ ແລະ ແຫ່ງຊາດ. |
| ຜົນທີ່ຄາດວ່າຈະໄດ້ຮັບ | ໂຄງການຂັ້ນທີ 2 ຈະສ້າງຄວາມຕໍ່ເນື່ອງ, ສ້າງຄວາມສຳເລັດ, ແລະ ບົດຮຽນຈາກຂັ້ນທີ 1, ແລະ ແນໃສ່ການສ້າງຜົນປະໂຫຍດສູງສຸດໃນການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາບແວດລ້ອມສາທາ ແລະ ສຳລັບການຄວບຄຸມໂລກຕິຕໍ່ທີ່ບໍ່ຄາດຄິດ (CDC), ຄວາມສຳພັນໄດ້ມີການສ້າງຂຶ້ນພ້ອມກັບແຜນງານພາກພື້ນທີ່ຊ່ວຍຜັນຂະຫຍາຍຄວາມຍືນຍົງຂອງການລົງທຶນໂຄງການ. ໂດຍຜ່ານກອງປະຊຸມສາທາພາກລັດພາກພື້ນ, ການຮ່ວມມືກັບປະເທດຈີນ, ພະມ້າ ແລະ ໄທ ຈະເພີ່ມທະວີ ແລະ ເຂັ້ມແຂງຂຶ້ນ. |
| **ຊື່ໂຄງການ** | **ແຜນງານການຮັກສາຊີວະນາພັນຕາມແລວອານຸພາກພື້ນແມ່ນ້ຳຂອງ** (ການຊ່ວຍເຫຼືອວິຊາການການກະກຽມໂຄງການ ພາກພື້ນ 1.0 ລ້ານໂດລາ) |
| ເປົ້າໝາຍ, ອົງປະກອບ, ແລະ ຜົນໄດ້ຮັບ | ຂໍ້ລິເລີ້ມແລວການຮັກສາຊີວະນາພັນແມ່ນແຜນງານທີ່ສຳຄັນຂອງແຜນງານສະພາບແວດລ້ອມຕົ້ນຕໍຂອງອານຸພາກພື້ນແມ່ນ້ຳຂອງ. ຈຸດປະສົງແມ່ນການຈັດຕັ້ງອຳນາດບໍລິຫານຄຸ້ມຄອງແບບຍືນຍົງເພື່ອຟື້ນຟູສຳລັບການເຊື່ອມຕໍ່ລະບົບນິເວດວິທະຍາ ແລະ ຈິດສຳນຶກໃນຂົງເຂດຊີວະນາພັນທີ່ເລືອກເຟັ້ນ. ໃນໂຄງການຂັ້ນທີ 1 ຂໍ້ລິເລີ້ມແລວການຮັກສາຊີວະນາພັນ BCI (2006 -2009), ໂຄງການຕົວແບບໄດ້ມີການຈັດຕັ້ງປະຕິບັດພາຍໃນຂອບເຂດທີ່ໄດ້ມີການຄັດເລືອກຢູ່ພາຍໃນຂອບເຂດຮັກສາຊີວະນາພັນ, ທີ່ຖືກກຳນົດເອົາໂດຍບັນດາປະເທດ ອານຸພາກພື້ນແມ່ນ້ຳຂອງ 9 ແຫ່ງ ພ້ອມກັບການສະໜັບສະໜູນຂອງບັນດາຄູ່ຮ່ວມພັດທະນາໂຄງການທີ່ສະເໜີຈະໄດ້ມີການຈັດຕັ້ງປະຕິບັດໃນຂັ້ນທີ 2 ຂອງຂໍ້ລິເລີ້ມແລວການຮັກສາຊີວະນາພັນ BCI (200 -2012), ແລະ ລວມເອົາການກະກຽມເພື່ອທີ່ຈະເພີ່ມຂະຫຍາຍກິດຈະກຳການຮັກສາຊີວະນາພັນໃນບັນດາຂົງເຂດທີ່ໄດ້ຄັດເລືອກຂອງກຳປູເຈຍ, ສປປ ລາວ, ແລະ ຫວຽດນາມ, ໂດຍການນຳໃຊ້ຜົນຂອງການທົດລອງຈັດຕັ້ງປະຕິບັດ ຂໍ້ລິເລີ້ມແລວການຮັກສາຊີວະນາພັນ BCI, ໂດຍສະເພາະວິທີ ແລະ ແຜນງານຂອງການຈັດຕັ້ງປະຕິບັດທີ່ໄດ້ພັດທະນາໃນຂັ້ນທີ 1. ກິດຈະກຳຂໍ້ລິເລີ້ມແລວການຮັກສາຊີວະນາພັນ ທີ່ຈະຈັດຕັ້ງປະຕິບັດປະກອບມີ (i) ການຫຼຸດຜ່ອນຄວາມທຸກຍາກໂດຍຜ່ານການນຳໃຊ້ແຫຼ່ງຊັບພະຍາກອນທຳມະຊາດແບບຍືນຍົງ ແລະ ການພັດທະນາການເປັນຢູ່, (ii) ກຳນົດຢ່າງຈະແຈ້ງຂອງການນຳໃຊ້ທີ່ດິນທີ່ດີທີ່ສຸດ ແລະ ການບໍລິຫານທີ່ດິນແບບລວມສູນ; (iii) ການທົດແທນຄືນ ແລະ ການປັບປຸງການເຊື່ອມຕໍ່ລະບົບນິເວດວິທະຍາ; (iv) ການສ້າງຄວາມສາມາດຊຸມຊົນທ້ອງຖິ່ນ ແລະ ພະນັກງານລັດຖະບານ; ແລະ (v) ກົນໄກການເງິນທີ່ຍືນຍົງ ແລະ ໂຄງສ້າງທີ່ລວມສູນກັບຂັ້ນຂອງການວາງແຜນ ແລະ ການຂຶ້ນງົບປະມານລັດຖະບານ. |
| ຜົນທີ່ຄາດວ່າຈະໄດ້ຮັບ | ເປົ້າໝາຍຂອງການຈັດຕັ້ງປະຕິບັດຂໍ້ລິເລີ້ມແລວການຮັກສາຊີວະນາພັນ BCI ກ່ອນປີ 2015, ບັນດາປະເທດອານຸພາກພື້ນແມ່ນ້ຳຂອງຈະພະຍາຍາມເພື່ອທີ່ຈະຮັກສາ ແລະ ປັບປຸງຂອບເຂດ, ເງື່ອນໄຂ ແລະ ຊີວະນາພັນຂອງເຂດປ່າ ແລະ ລະບົບນິເວດວິທະຍາໃນຂົງເຂດ ແລະ ແລວຮັກຊີວະນາພັນບູລິມະສິດ. ໃນໄລຍະການຈັດຕັ້ງປະຕິບັດໂຄງການ, ການປະເມີນຢ່າງຮີບດ່ວນຈະໄດ້ມີການຈັດຕັ້ງປະຕິບັດ ເພື່ອໃຫ້ຂໍ້ສັງເກດວ່າໂຄງການໄດ້ປະກອບສ່ວຍຕໍ່ເປົ້າໝາຍໄລຍະສັ້ນ-ຍາວ ( 2009-2011) ຂອງ ຂໍ້ລິເລີ້ມແລວການຮັກສາຊີວະນາພັນ BCI ຫຼືບໍ່, ອີກດ້ານອື່ນໆການຈັດຕັ້ງປະຕິບັດຂອງລະບອບການຄຸ້ມຄອງແບບຍືນຍົງສຳລັບການຟື້ນຟູການເຊື່ອມຕໍ່ລະບົບນິເວດວິທະຍາ ແລະ ຈິດສຳນຶກລວມຂອງຂົງເຂດຊີວະນາພັນທີ່ສຳຄັນ, ລວມກັນເຂົ້າກັບການຈັດຫາການໃຫ້ການບໍລິການ ແລະ ສິນຄ້າຈາກແຫຼ່ງທຳມະຊາດທີ່ມີສ່ວນໃຫ້ແກ່ການປັບປຸງຊີວິດການເປັນຢູ່ ໃນບໍລິເວນຂອບເຂດ ແລະ ອ້ອມຂ້າງແລວສຳຄັນດັ່ງກ່າວ. ພາຍຫຼັງການສິ້ນສຸດ |

| | |
|---|---|
| | ຂອງໂຄງການ, ມັນຈະສອດຄ່ອງກັບຂັ້ນຕອນລິເລີ່ມ ຂໍ້ລິເລີ່ມແລວການຮັກສາຊີວະນາພັນ BCI ຂັ້ນທີ 3, ແລະ ການປະເມີນຂອງແນວທາງໂຄງການ, ວິທີການ, ການບັນລຸ, ແລະ ຜົນຂອງການດຳເນີນງານທີ່ໄດ້ຮັບ ຖືວ່າແມ່ນຄວາມພະຍາຍາມເບື້ອງຕົ້ນເພື່ອທີ່ຈະພິດຈາລະນາການລົງທຶນໃນເຂດ ແລະ ແລວ ຊີວະນາພັນບຸລິມະມິດທັງໝົດໃນໄລຍະຂອງການດຳເນີນງານຂັ້ນທີ 3. |
| **ຊື່ໂຄງການ** | **ການເອື້ອອຳນວຍຄວາມສະດວກການຄ້າພະລັງງານທີ່ເປັນມິດຕໍ່ສະພາບແວດລ້ອມ, ແລະ ຍືນຍົງ ອານຸພາກພື້ນແມ່ນ້ຳຂອງ ຂັ້ນ 2**<br>(ການຊ່ວຍເຫຼືອວິຊາການການກະກຽມໂຄງການ ພາກພື້ນ 2.0 ລ້ານໂດລາ) |
| ເປົ້າໝາຍ, ອົງປະກອບ, ແລະ ຜົນໄດ້ຮັບ | ໂຄງການຈະປະກອບສ່ວນໃຫ້ແກ່ເປົ້າໝາຍຍາວນານຂອງໂຄງການຂັ້ນທີ 1, ທີ່ຈະສ້າງຕາໜ່າງການຄ້າພະລັງງານທີ່ມີປະສິດທິພາບ ແລະ ມີການແຂ່ງຂັນ, ແລະ ຫຼຸດຜ່ອນຜົນກະທົບຕໍ່ສະພາບແວດລ້ອມໃນການພັດທະນາໂຄງການພະລັງງານເພື່ອການຄ້າພະລັງງານພາກພື້ນ. ໂດຍສະເພາະ, ໂຄງການຈະສຸມໃສ່ການຈັດຕັ້ງພາກສ່ວນສະໜັບສະໜູນທີ່ຕ້ອງການເພື່ອທີ່ຈະພັດທະນາສາຍສົ່ງເຊື່ອມຕໍ່ພະລັງງານ ຈີນ-ລາວ-ກຳປູເຈຍ ທີ່ລວມມີ: (i) ການປະເມີນພື້ນຖານໂຄງລ່າງສາຍສົ່ງ ແລະ ອຸປະກອນທີ່ຕ້ອງການເພື່ອທີ່ຈະເຊື່ອມຕໍ່ພະລັງງານຈີນ ແລະ ກຳປູເຈຍ ຜ່ານ ສປປ ລາວ ເພື່ອການຄ້າພະລັງງານສອງທາງ ຫຼືວ່າການຄ້າແບບສາມແຈ; (ii) ການປະເມີນເພື່ອທີ່ຈະກຳນົດການແບ່ງປັນຜົນປະໂຫຍດກັບ ສປປ ລາວ ແນວໃດ; (iii) ເອື້ອອຳນວຍຂໍ້ຕົກລົງຂອງສັນຍາລະຫວ່າງ ກຳປູເຈຍ, ຈີນ, ແລະ ສປປ ລາວ ໃນການໃຊ້ດິນລາວເພື່ອສ້າງສາຍສົ່ງ; (iv) ການທົບທວນບົດສຶກສາຄວາມເປັນໄປໄດ້ຂອງການພັດທະນາພະລັງງານໄຟຟ້າພາກເໜືອຂອງ ສປປ ລາວ ກຳລັງໄດ້ມີການດຳເນີນໂດຍ ບໍລິສັດ China Southern Power Grid ແລະ ການກຳນົດຄວາມເປັນໄປໄດ້ຂອງການພັດທະນາບັນດາສະຖານນີໄຟຟ້າ ເພື່ອສົ່ງອອກໄປແຂວງ ຢຸນນານ ຫຼື ແຫຼ່ງພະລັງງານໄຟຟ້າທີ່ເປັນທ່າແຮງເພື່ອທີ່ຈະສະຫຼຸບເຂົ້າໃນສັນຍາການຄ້າພະລັງງານ; (v) ການກຳນົດຜົນກະທົບທາງສັງຄົມ ແລະ ສະພາບແວດລ້ອມຂອງການລົງທຶນດັ່ງກ່າວນີ້ ແລະ ການໃຫ້ຄຳແນະນຳມາດຕະການຫຼຸດຜ່ອນ; (vi) ການໃຫ້ຄຳແນະນຳລະບຽບປະຕິບັດທີ່ດີທີ່ສຸດ, ການວາງລະບຽບ, ລະຫັດ, ໂຄງການສະຖາບັນ, ແລະ ກົນໄກຕະຫຼາດອື່ນໆທີ່ພັດທະນາໃນຂັ້ນທີ 1 ເພື່ອທີ່ຈະໃຊ້ໃນການເຊື່ອມຕໍ່. |
| ຜົນທີ່ຄາດວ່າຈະໄດ້ຮັບ | ໂຄງການຄາດວ່າຈະສະໜອງ (i) ແນະນຳການຈັດຮູບແບບທີ່ດີທີ່ສຸດຂອງສາຍເຊື່ອມຕໍ່ພະລັງງານ ທີ່ເຊື່ອມ ຈີນ, ສປປ ລາວ, ແລະ ຫວຽດນາມ, ທີ່ເນັ້ນໜັກໃສ່ດ້ານພື້ນຖານໂຄງລ່າງສາທາ, ທາງເລືອກຂອງການສະໜອງຂອງການຜະລິດ, ແລະ ສິ່ງທີ່ພົວພັນກັບສັງຄົມ ແລະ ສະພາບແວດລ້ອມ; (ii) ເງື່ອນໄຂ ແລະ ແຜນງານເຮັດວຽກສຳລັບວຽກງານກະກຽມທີ່ຈຳເປັນຂອງໂຄງການທີ່ສຳຄັນ ສຳລັບອົງປະກອບທີ່ສຳຄັນຂອງສາຍສົ່ງ ແລະ ແຜນການຍົກຍ້າຍຖິ່ນຖານຢ່າງລະອຽດ, ການປະເມີນຜົນກະທົບຂອງສະພາບແວດລ້ອມ, ແລະ ແຜນການຄຸ້ມຄອງສະພາບແວດລ້ອມ; (iii) ຮ່າງສັນຍາລະຫວ່າງ ປະເທດ ຈີນ, ສປປ ລາວ, ແລະ ກຳປູເຈຍ ທີ່ກວມເອົາລະບຽບ ຫຼັກການ, ລະຫັດ, ແລະ ກົນໄກຕະຫຼາດ ແລະ ສະຖາບັນ ເພື່ອທີ່ຈະສ້າງຄວາມເປັນໄປໄດ້ຂອງການຄ້າແບບສອງທາງ ແລະ ສາມແຈ ລະຫວ່າງປະເທດ. |
| **ຊື່ໂຄງການ** | **ການພັດທະນາພະລັງງານທົດແທນ ອານຸພາກພື້ນແມ່ນ້ຳຂອງ** (ການຊ່ວຍເຫຼືອວິຊາການການກະກຽມໂຄງການ ພາກພື້ນ 2.0 ລ້ານໂດລາ) |
| ເປົ້າໝາຍ, ອົງປະກອບ, ແລະ ຜົນໄດ້ຮັບ | ໂຄງການມີເປົ້າໝາຍແນໃສ່ປະກອບສ່ວນໃຫ້ແກ່ການພັດທະນາຊີນນະບົດແບບຍືນຍົງ ແລະ ຮັບປະກັນພະລັງງານໃຫ້ແກ່ທ້ອງຖິ່ນ. ມັນຈະສະໜອງ (I) ສະໜັບສະໜູນນະໂຍບາຍສຳລັບການລົງທຶນແລວຊາຍແດນ, ກະສິກຳແບບສັນຍາ, ແລະ ການຄ້າ; (ii) ການສະໜັບສະໜູນພື້ນຖານໂຄງລ່າງ ແລະ ການຝຶກອົບຮົມໃຫ້ແກ່ການເຂົ້າຮ່ວມຊຸມຊົນໃຫ້ຫຼາຍຂຶ້ນໃນການສະໜອງອາຫານສັດ, ແລະ ການພັດທະນາວິສາຫະກິດຂະໜາດກາງ ແລະ ນ້ອຍ (SME); (iii) ການຄົ້ນຄ້ວາ ແລະ ການພັດທະນາທີ່ສະໜັບສະໜູນການຄັດເລືອກສະນິດຂອງເຄື່ອງປູກ, ເທັກໂນໂລຊີທີ່ຫຼາກຫຼາຍ, ລະບົບກະສິກຳ, ແລະ ຂະບວນການສ້າງແນວພັນ ແລະ ການຕະຫຼາດໂດຍໃຫ້ຄວາມສະດວກການຮ່ວມມືໃນສູນຂໍ້ມູນສາກົນ, ພາກພື້ນ, ແລະ ແຫ່ງຊາດ; ແລະ (v) ຜົນຂະຫຍາຍຄວາມສາມາດຂອງສະຖາບັນເທັກໂນໂລຊີແຫ່ງຊາດ, ເສດຖະກິດ, ແລະ ແນວທາງການວາງແຜນສັງຄົມ ແລະ ການຈັດຕັ້ງປະຕິບັດທີ່ແນໃສ່ການສະໜັບສະໜູນການພັດທະນາການປູກຝັງສຳລັບພະລັງງານທົດແທນທ້ອງຖິ່ນ. |
| ຜົນທີ່ຄາດວ່າຈະໄດ້ຮັບ | ໂຄງການຈະຊ່ວຍ (i) ລວມສູນນະໂຍບາຍຂອງການພັດທະນາພະລັງງານທົດແທນຊົນນະບົດ; (ii) ເພີ່ມການສະໜອງພະລັງງານໃນຂົງເຂດຊົນນະບົດ; ແລະ (iii) ກະຕຸ້ນການຂະຫຍາຍໂຕຂອງກະສິກຳ ແລະ ປັບປຸງບາຍຮັບຂອງຜູ້ຜະລິດນ້ອຍ. ໝາກຜົນຂອງໂຄງການຈະລວມມີ: (i) ຍຸດທະສາດການພັດທະນາພະລັງງານທົດແທນຊົນນະບົດແຫ່ງຊາດທີ່ຄົບຊຸດກວ່າເກົ່າ (ສຳລັບ |

| | |
|---|---|
| | ແຕ່ລະປະເທດ ແລະ ຍຸດທະສາດທີ່ລວມເຂົ້າກັນ); (ii) ກຳນົດລາຍການຄົ້ນຄ້ວາບູລິມະສິດ ແລະ ໂຄງການພັດທະນາເພື່ອທີ່ຈະພັດທະນາເທັກໂນໂລຊີທີ່ຈຳເປັນເພື່ອທີ່ຈະສະໜັບສະໜູນການພັດທະນາພະລັງງານທົດແທນຊົນນະບົດໃນບັນດາປະເທດ; (iv) ບັນຊີຂອງໂຄງການເງິນກູ້ທີ່ສະໜອງໃຫ້ແກ່ການພັດທະນາພະລັງງານທົດແທນທີ່ກວມເອົາການພັດທະນາຊີວະເຂດ ແລະ ການພັດທະນາທານສັດ, ຄວາມຕ້ອງການຂອງພື້ນຖານໂຄງລ່າງ, ແລະ ການພັດທະນາວິສາຫະກິດຂະໜາດກາງ ແລະ ຂະໜາດນ້ອຍ (SMEs). |
| **ຊື່ໂຄງການ** | ແຜນການພະນົມເປັນເພື່ອການຄຸ້ມຄອງໂຄງການ ຂັ້ນ 4 ອານຸພາກພື້ນແມ່ນ້ຳຂອງ (ການຊ່ວຍເຫຼືອວິຊາການການພັດທະນາຄວາມສາມາດ ພາກພື້ນ 1.0 ລ້ານໂດລາ) |
| ເປົ້າໝາຍ, ອົງປະກອບ, ແລະ ຜົນໄດ້ຮັບ | ແຜນງການພະນົມເປັນເພື່ອການຄຸ້ມຄອງການພັດທະນາ (PPP) ເປັນແຜນງານບຸກເບີກເພື່ອທີ່ຈະສ້າງຄວາມສາມາດໃນການຄຸ້ມຄອງນະໂຍບາຍ ແລະ ການພັດທະນາຂອງພະນັກງານລັດຖະກອນ ແລະ ສະຖາບັນໃນບັນດາປະເທດອານຸພາກພື້ນແມ່ນ້ຳຂອງ. ເປົ້າໝາຍແມ່ນເພື່ອປັບປຸງຄວາມມີປະສິດທິພາບ ແລະ ປະສິດທິຜົນຂອງການຄຸ້ມຄອງການພັດທະນາເພື່ອທີ່ຈະຂະຫຍາຍການເຕີບໂຕດ້ານເສດຖະກິດ ແລະ ການພັດທະນາສັງຄົມ. ເປົ້າໝາຍສະເພາະແມ່ນ (i) ຝຶກຂະຫຍາຍຄວາມສາມາດດ້ານເຕັກນິກ, ແລະ ຄວາມສາມາດໃນການນຳພາ ແລະ ການຄຸ້ມຄອງຂອງບັນດາພະນັກງານລັດຖະກອນໃນອານຸພາກພື້ນແມ່ນ້ຳຂອງ; (ii) ປັບປຸງຄວາມມີປະສິດທິພາບ ແລະ ປະສິດທິຜົນຂອງແຜນງານແຫ່ງຊາດ ແລະ ໂຄງການ; (iii) ສົ່ງເສີມຄວາມເຂົ້າໃຈ ແລະ ຄວາມຮັບຮູ້ໃຫ້ຫຼາຍຂຶ້ນຂອງການຮ່ວມມືໃນອານຸພາກພື້ນແມ່ນ້ຳຂອງ; (iv) ເສີມຂະຫຍາຍການຮ່ວມມື ແລະ ຍົກສູງການຮ່ວມມືໃນບັນດາປະເທດອານຸພາກພື້ນແມ່ນ້ຳຂອງ; (v) ສ້າງໂອກາດໃນດ້ານການສຶກສາໄລຍະຍາວໃຫ້ແກ່ສິດເກົ່າ; (vi) ພັດທະນາຄວາມສາມາດໂດຍຜ່ານການຈັດການທີ່ໄປພ້ອມໆກັນ, ແບ່ງປັນຄວາມຮູ້, ແລະ ການຖ່າຍທອດຄວາມຮູ້ລະຫວ່າງຄູ່ຮ່ວມສ້າງຄວາມສາມາດ ແລະ ສະຖາບັນຄົ້ນຄ້ວາ;(vii) ສົ່ງເສີມການຄົ້ນຄ້ວາທີ່ເກາະກ່າຍຂອງອານຸພາກພື້ນແມ່ນ້ຳຂອງ ແລະ ການພັດທະນາຊັບພະຍາກອນທີ່ສະຫຼາດທີ່ຈະຊ່ວຍໃນການສ້າງຄວາມສາມາດ ແລະ ການປະກອບສ່ວນໃນການພັດທະນານະໂຍບາຍ; ແລະ (viii) ສົ່ງເສີມກິດຈະກຳການແບ່ງປັນຄວາມຮູ້ ແລະ ສົ່ງເສີມການເຂົ້າເຖິງຂໍ້ມູນຂ່າວສານການພັດທະນາ. ອົງປະກອບ ແລະ ຜົນຂອງການດຳເນີນງານຫຼັກລວມມີແຜນງານການຮຽນຮູ້ (ແຜນງານລະອຽດ ແລະ ກິດຈະກຳການຮຽນຮູ້ໄລຍະສັ້ນ), ການພັດທະນາແຫຼ່ງຄວາມຮູ້ (ບົດຄົ້ນຄ້ວາການດຳເນີນງານ ແລະ ວາລະສານ), ການລົນນະລົງ, ແລະ ກິດຈະກຳການແບ່ງປັນຄວາມຮູ້ (ແຜ່ນພັບ, ເວບໄຊ, ແລະ ສູນກາງຄວາມຮູ້), ເຄືອຂ່າຍສະຖາບັນ(ຄູ່ຮ່ວມສ້າງຄວາມສາມາດ, ແລະ ການຈັດຕັ້ງການນຳພາອານຸພາກພື້ນທີ່ສຳຄັນຂອງອານຸພາກພື້ນແມ່ນ້ຳຂອງ (ແຜນງານສິດເກົ່າ ແລະ ແຜນງານພະນົມເປັນ ເພື່ອການຄຸ້ມຄອງການພັດທະນາ (PPP). |
| ຜົນທີ່ຄາດວ່າຈະໄດ້ຮັບ | ໂຄງການຂັ້ນທີ iv ຈະສ້າງຄວາມຕໍ່ເນື່ອງ, ການເຂົ້າເຖິງ, ແລະ ບົດຮຽນຈາກໂຄງການຂັ້ນ ທີ່ຜ່ານມາຈະປະເມີນຄືນບາດກ້າວຍຸດທະສາດທີ່ສຳຄັນ ເພື່ອທີ່ຈະຮັບປະກັນຄວາມກ່ຽວຂ້ອງ ແລະ ປະສິດທິພາບທີ່ຕໍ່ເນື່ອງ. ໂດຍອີງໃສ່ຜົນຂອງການດຳເນີນງານ ແລະ ການຊີ້ແນະຂອງການດຳເນີນການປະເມີນ, ໝາກຜົນ ແລະ ຜົນຂອງການດຳເນີນງານຈະຊ່ວຍໃຫ້ມີຄວາມໜັກແໜ້ນຂຶ້ນ ແລະ ຈະລວມມີ (i) ພະນັກງານລັດຖະກອນຈະເຂົ້າຮ່ວມປະມານ 300 ຄົນໃນແຜນງານການສຶກສາ; (ii) ການຮ່ວມແຮງຮ່ວມໃຈສຳລັບແຜນງານໄລຍະສັ້ນໃນມະຫາວິທະຍາໄລທີ່ໄດ້ສ້າງຊື່ສຽງໃຫ້ແກ່ບັນດາສິດເກົ່າທີ່ສ້າງຜົນງານໃນລະດັບສູງສຸດອັນດັບທີ 6 ຂອງແຜນງານພະນົມເປັນເພື່ອການຄຸ້ມຄອງການພັດທະນາ (PPP); (iii) ແຜນເພື່ອທີ່ຈະສະໜັບສະໜູນການຄົ້ນຄ້ວາ; (iv) ສຸມໃສ່ຢ່າງຕັ້ງໜ້າໃຫ້ແກ່ການສຶກສາໄລຍະສັ້ນເພື່ອທີ່ຈະກະຕຸ້ນຜົນທີ່ຈະເກີດຂຶ້ນ, ການຖົກຖຽງແລກປ່ຽນ, ແລະ ການປະຕິບັດໃນບັນດາຄູ່ຮ່ວມອານຸພາກພື້ນແມ່ນ້ຳຂອງ; (v) ຂະຫຍາຍການສຶກສາໃຫ້ຍາວນານ ແລະ ໂອກາດດ້ານການຂະຫຍາຍເຄືອຄ່າຍສຳລັບສະມາຊິກເກົ່າ ຂອງ ແຜນງການພະນົມເປັນເພື່ອການຄຸ້ມຄອງການພັດທະນາ (PPP); (vi) ຂະຫຍາຍສູນກາງການສຶກສາໃນກຳປູເຈຍ ແລະ ສ້າງຕັ້ງສູນກາງການສຶກສາໃນ ສປປ ລາວ ເພື່ອທີ່ຈະສະໜອງຄວາມສາມາດຂອງການເຂົ້າເຖິງຂໍ້ມູນຂອງອານຸພາກພື້ນແມ່ນ້ຳຂອງ GMS); ແລະ (vii) ວາລະສານ ແລະ ບົດຄົ້ນຄ້ວາເພື່ອທີ່ຈະກະຈາຍຂໍ້ມູນຂອງອານຸພາກພື້ນແມ່ນ້ຳຂອງ (GMS) ແລະ ໃຊ້ເປັນຂໍ້ມູນໃນການສົນທະນາ ແລະ ປຶກສາຫາລື. |
| **ຊື່ໂຄງການ** | ການພັດທະນາການຂົນສົ່ງສິນຄ້າ ແລະ ເອື້ອອຳນວຍຄວາມສະດວກໃຫ້ແກ່ການຄ້າ ອານຸພາກພື້ນແມ່ນ້ຳຂອງ (ການຊ່ວຍເຫຼືອວິຊາການການກະກຽມໂຄງການ ພາກພື້ນ 0.8 ລ້ານໂດລາ) |
| ເປົ້າໝາຍ, ອົງປະກອບ, ແລະ ຜົນໄດ້ຮັບ | ຈຸດປະສົງຂອງໂຄງການແມ່ນເພື່ອສ້າງວາລະການຄ້າໃຫ້ມີຄວາມກ້າວໜ້າ ແລະ ຄວາມສະດວກດ້ານການຂົນສົ່ງໃນອານຸພາກພື້ນແມ່ນ້ຳຂອງ. ມັນປະກອບມີ: (i) ສ້າງຄວາມເຂັ້ມແຂງໃຫ້ແກ່ມາດຕະການການຄວບຄຸມສຸກຂະອານະໄມ ແລະ ສຸກຂະອານະໄມທີ່ຕ່ຳ (SPS) ແລະ ການຄຸ້ມຄອງຄວາມສ່ຽງ, (ii) ຝຶກຂະຫຍາຍຄວາມສາມາດໃນການເຮັດທົດລອງໃນອານຸພາກພື້ນແມ່ນ້ຳຂອງ ເພື່ອທີ່ຈະສະໜັບສະໜູນການຈັດຕັ້ງປະຕິບັດການຄວບຄຸມ, ການວິເຄາະຄວາມສ່ຽງ, ແລະ ການກວດສອບ, (iii) ຮັບປະກັນວິສາຫະກິດຂະໜາດກາງ ແລະ ນ້ອຍໃຫ້ເຫັນດີ/ປະຕິບັດມາດຕະການດ້ານສຸກຂະອານະໄມ ແລະ ສຸກຂະອານະໄມທີ່ຍັງຕ່ຳ (SPS), ແລະ (iv) ການພັດທະນາການຂົນສົ່ງສິນຄ້າທີ່ເປັນເປົ້າໝາຍ. ໃນທາງດຽວກັນ, ບັນດາອົງປະກອບດັ່ງ |

| | |
|---|---|
| | ກ່າວຈະສະໜອງຜົນດັ່ງນີ້ (i) ແຜນງານພາກພື້ນຕາມຂັ້ນສຳລັບການຄວບຄຸມ ແລະ ການຄຸ້ມຄອງຄວາມສ່ຽງ, ທີ່ສະໜັບສະໜູນໂດຍຄ່າໃຊ້ຈ່າຍທີ່ໄດ້ມີການປະເມີນ ແລະ ແຫຼ່ງທຶນທີ່ຕ້ອງການໄດ້ມີການປຶກສາຫາລືກັບບັນດາປະເທດອານຸພາກພື້ນແມ່ນ້ຳຂອງ; (ii) ຫ້ອງທົດລອງການປະເມີນໃນອານຸພາກພື້ນແມ່ນ້ຳຂອງ ລວມທັງການປະເມີນ (ກ) ການພັດທະນາການທົດສອບຂອງພາກລັດ ແລະ ຂະແໜງເອກະຊົນ ແລະ ເຄື່ອງມືການວິໃຈ; (ຂ) ການກະກຽມແຜນສຳລັບການຍ້ອງຍໍຜົນງານ ແລະ ການໃຫ້ຄວາມດີຄວາມຊອບ; (ຄ) ການປະເມີນຄວາມຍືນຍົງ ແລະ ສະໜອງຂອງຫ້ອງທົດລອງ; ແລະ (ງ) ການກຳນົດແຜນງານການຝຶກອົບຮົມດ້ານເຕັກນິກການທົດລອງສະເພາະໃຫ້ແກ່ພະນັກງານຫ້ອງທົດລອງ; (iii) ສ້າງທາງເລືອກ ແລະ ຄວາມເປັນໄປໄດ້ເພື່ອທີ່ຈະສະໜັບສະໜູນຂະແໜງເອກະຊົນ, ໂດຍສະເພາະແມ່ນວິສະຫະກິດຂະໜາດກາງ ແລະ ນ້ອຍໃນການຫຼີກລ້ຽງຜົນກະທົບທີ່ອັນຕະລາຍໃຫ້ແກ່ຄວາມຕ້ອງການການສົ່ງອອກ, ແລະ ຕອບສະໜອງຄວາມຕ້ອງການອາຫານທີ່ປອດໄພໃຫ້ແກ່ຕະຫຼາດທ້ອງຖິ່ນ; ແລະ (iv) ກຳນົດບັນຫາກະຈຸກໂຕຂອງການຂົນສົ່ງທີ່ຕ້ອງການການລົງທຶນ. |
| ຜົນທີ່ຄາດວ່າຈະໄດ້ຮັບ | ຜົນຂອງການດຳເນີນງານລວມເອົາການຮັບຮອງຂອງແຜນການດຳເນີນງານພາກພື້ນ, ການກະກຽມແຜນສຳລັບການສ້າງຄວາມສາມາດທົດລອງ ອານຸພາກພື້ນແມ່ນ້ຳຂອງ, ການກຳນົດອົງປະກອບການໃຫ້ການກູ້ຢືມທີ່ຫຼາກຫຼາຍ, ແລະ ການປະເມີນຂອງຄວາມຕ້ອງການ. |
| **ຊື່ໂຄງການ** | ແລວຕາເວັນອອກ ຕາເວັນຕົກ ອານຸພາກພື້ນແມ່ນ້ຳຂອງ ໂຄງການທີ 2(ການຊ່ວຍເຫຼືອວິຊາການການກະກຽມໂຄງການ ພາກພື້ນ 1.0 ລ້ານໂດລາ) |
| ເປົ້າໝາຍ, ອົງປະກອບ, ແລະ ຜົນໄດ້ຮັບ | ໂຄງການແນໃສ່ເພື່ອປັບປຸງສອງໄລຍະຂອງຕາໜ່າງຂົນສົ່ງໃນໃຈກາງຂອງຫວຽດນາມ ແລະ ພາກໄຕ້ຂອງ ສປປ ລາວ ເພື່ອເຮັດໃຫ້ການຈໍລະຈອນຂອງສິນຄ້າ ແລະ ການເດີນທາງຂອງຜູ້ຄົນມີຄ່າໃຊ້ຈ່າຍຖືກລົງ ແລະ ມີປະສິດທິພາບໃນ ອານຸພາກພື້ນແມ່ນ້ຳຂອງ (ໂດຍສະເພາະ ລະຫວ່າງ ກວາງນຳ ໃນປະເທດຫວຽດນາມ ແລະ ແຂວງ ເຊກອງ ໃນ ສປປ ລາວ). ການຊ່ວຍວິຊາການການກະກຽມໂຄງການ ຈະມີການຈັດຕັ້ງການສຶກສາຄວາມເປັນໄດ້ ແລະ ການອອກແບບໂຄງການເບື້ອງຕົ້ນທີ່ຈະຟື້ນຟູ ແລະ ຍົກລະດັບການເຊື່ອມຕໍ່ການຂົນສົ່ງ ແລະ ສິ່ງອຳນວຍຄວາມສະດວກ ທັງທາງດ້ານເສດຖະກິດ ແລະ ເຕັກນິກ, ແລະ ການຍອມຮັບຂອງສັງຄົມ ແລະ ສະພາບແວດລ້ອມ. ກອບຂອງກິດຈະກຳ ຈະອີງໃສ່ກິດຈະກຳທີ່ກຳລັງດຳເນີນຢູ່ ແລະ ສາມາດສະໜັບສະໜູນການປັບປຸງແກ່ (i) ທາງຫຼວງ (QL) 606 ໃນຫວຽດນາມ, ຈາກ ທັນມີ ຫາ ດາກຍົງ, ແລະ (ii) ເສັ້ນທາງເລກທີ 16 ໃນ ສປປ ລາວ ຈາກ ດາກຈຶງ ຊາຍແດນ ລາວ-ຫວຽດນາມ ໄປທາງເໜືອຫາ ເຊກອງ. |
| ຜົນທີ່ຄາດວ່າຈະໄດ້ຮັບ | ບັນດາການປັບປຸງດັ່ງກ່າວຊ່ວຍໃຫ້ຕາໜ່າງເສັ້ນທາງຫຼວງເຊື່ອມຕໍ່ໃສ່ ປາກເຊ ໃນ ສປປ ລາວ ສຳເລັດ, ແລະ ຕໍ່ໃສ່ ດານັງ ໃນຫວຽດນາມ. ຈາກປາກເຊຈະມີການເຊື່ອມຕໍ່ໃສ່ປະເທດໄທ, ແລະ ຈາກດານັງມີການເຊື່ອມຕໍ່ ຫາ ຮາໂນຍ ແລະ ໂຮ່ຈິ່ມິນ ຕາມເສັ້ນທາງຫຼວງທີ່ສຳຄັນ. ໂຄງການຍັງຈະສະໜອງ (i) ການຈັດຕັ້ງການວິເຄາະຂອງການເຊື່ອມຕໍ່ການຂົນສົ່ງເພື່ອທີ່ຈະກຳນົດຄວາມເປັນໄປໄດ້ທາງດ້ານເຕັກນິກ ແລະ ເສດຖະກິດ, ແລະ ການຍອມຮັບຂອງສັງຄົມ ແລະ ສະພາບແວດລ້ອມ, ການຍົກລະດັບຂອງເສັ້ນທາງທີ່ມີຢູ່ແລ້ວ, (ii) ການກະກຽມແຜນການທີ່ວາງທາງເລືອກ ແລະ ອົງປະກອບໂດຍລວມໃນການເຊື່ອມເຂົ້າກັນຂອງອົງປະກອບເພື່ອທີ່ຈະຈັດຕັ້ງໂຄງການທີ່ເໝາະສົມສຳລັບຂອບເຂດລະດັບຂອງການສະໜອງທຶນ; (iii) ການທົບທວນຂອງສິ່ງອຳນວຍຄວາມສະດວກຕາມແລວຊາຍແດນ ລາວ-ຫວຽດ ຕາມເສັ້ນທາງໂຄງການ; (iv) ການປັບປຸງການປະເມີນຂອງຂະແໜງຫຍ່ອຍເສັ້ນທາງໃນ ຫວຽດນາມ ແລະ ສປປ ລາວ ທີ່ໄດ້ມີການຈັດຕັ້ງປະຕິບັດພາຍໄຕ້ໂຄງການຊ່ວຍເຫຼືອດ້ານວິຊາການທີ່ຜ່ານມາ. ສິ່ງທີ່ຄວນພິດຈາລະນາໃນມຸມມອງຂອງຄວາມຍືນຍົງຂອງໂຄງການຈະລວມມີການທົບທວນຂອງການສະໜອງທຶນການສ້ອມແປງເສັ້ນທາງໃນສອງປະເທດ. |

ADTA = ການຊ່ວຍເຫຼືອການໃຫ້ຄຳແນະນຳທາງວິຊາການ; CDTA = ການຊ່ວຍເຫຼືອວິຊາການການພັດທະນາຄວາມສາມາດ; GMS = ອະນຸພາກພື້ນແມ່ນ້ຳຂອງ; PATA = ການຊ່ວຍເຫຼືອດ້ານວິຊາການໃຫ້ຄຳແນະນຳນະໂຍບາຍ; PPTA = ການຊ່ວຍເຫຼືອວິຊາການການກະກຽມໂຄງການ; RPPTA = ການຊ່ວຍເຫຼືອວິຊາການການກະກຽມໂຄງການພາກພື້ນ.

ແຫຼ່ງຂໍ້ມູນ: ທະນາຄານພັດທະນາອາຊີ

## ຕາຕະລາງ 4: ແຜນການຜະລິດຕະພັນການຊ່ວຍເຫຼືອຂອງການຊ່ວຍເຫຼືອທີ່ເປັນເງິນກູ້/ການຊ່ວຍເຫຼືອລ້າ, 2008

| ຂະແໜງ<br>ໂຄງການ/ແຜນງານ<br>ຊື່ໂຄງການ | ຈັດປະເພດ<br>ການວາງເປົ້າ<br>ໝາຍ | ບູລິມະສິດ<br>ຕາມຫົວຂໍ້<br>ພັດທະນາ | ພະແນກ | ປີທີ່ມີການ<br>ຊ່ວຍເຫຼືອ<br>ກະກຽມ<br>ໂຄງການ | ລວມ | ມູນຄ່າ (ລ້ານ$)<br>ADB<br>OCR | ADF | Total | ລັດຖະ<br>ບານ | ມີການ<br>ຮ່ວມທຶນ |
|---|---|---|---|---|---|---|---|---|---|---|
| **ເງິນກູ້ແຫ່ງຊາດ ແລະ ການຊ່ວຍເຫຼືອລ້າ** | | | | | | | | | | |
| **ກະສິກຳ ແລະຊັບພະຍາກອນທຳມະຊາດ** | | | | | | | | | | |
| 1. ໂຄງການ ການຂະຫຍາຍຜົນພະລິດ ແລະ ການ ຄຸ້ມຄອງຊັບພະຍາກອນທຳມະຊາດແບບຍືນຍົງ | GI | ECO, ENV | SEAE | 2007 | 30.0 | 0.0 | 20.0 | 20.0 | 2.0 | 8.0 (IFAD, Finland) |
| **ການຄຸ້ມຄອງຂີ້ເຫຍື້ອ, ນ້ຳປະປາ, ສຸກຂະອານາໄມ** | | | | | | | | | | |
| 2. ໂຄງການຂະແໜງການສາທາລະນະສຸກ ແລະ ລະບົບນ້ຳປະປາຕົວເມືອງນ້ອຍ | TI | ISD, ECO | SESS | 2006 | 35.0 | 0.0 | 23.0 | 23.0 | 2.0 | 10.0 (Australia) |
| **ລວມ** | | | | | **65.0** | **0.0** | **43.0** | **43.0** | **4.0** | **18.0** |
| **ເງິນກູ້ອານຸພາກພື້ນ ແລະ ການຊ່ວຍເຫຼືອລ້າ** | | | | | | | | | | |
| **ອຸດສະຫະກຳ ແລະ ການຄ້າ** | | | | | | | | | | |
| 1. ໂຄງການພັດທະນາການທ່ອງທ່ຽວແບບຍືນຍົງ ອານຸພາກພື້ນແມ່ນ້ຳຂອງ | GI | ECO, RCI | SESS | 2005 | 11.0 | 0.0 | 10.0 | 10.0 | 1.0 | 0.0 |
| **ລວມ** | | | | | **11.0** | **0.0** | **10.0** | **10.0** | **1.0** | **0.0** |
| **ລວມແຫ່ງຊາດ ແລະ ອານຸພາກພື້ນ** | | | | | **76.0** | **0.0** | **53.0** | **53.0** | **5.0** | **18.0** |

ADB = **ທະນາຄານພັດທະນາອາຊີ** ; ADF = **ກອງທຶນພັດທະນາອາຊີ;** ECO = **ການເຕີບໂຕທາງດ້ານເສດຖະກິດແບບຍືນຍົງ**; GI = ສັນຍາທົ່ວໄປ; GMS = **ອະນຸພາກພື້ນແມ່ນ້ຳຂອງ;** Gov't = **ລັດຖະບານ**; IFAD = ກອງທຶນສາກົນເພື່ອການພັດທະນາກະສິກຳ; ISD = ການພັດທະນາສັງຄົມໂດຍລວມ; OCR = **ທຶນກູ້ຢືມປົກະຕິ**; RCI = ການເຊື່ອມໂຍງ ແລະ ການຮ່ວມມືພາກພື້ນ; SEAE = **ພະແນກກະສິກຳ ສິ່ງແວດລ້ອມ ແລະ ຊັບພະຍາກອນທຳມະຊາດຂອງກົມອາຊີອາຄະເນ;** SESS = **ພະແນກສັງຄົມຂອງກົມອາຊີອາຄະເນ**; TI = **ກິດຈະກຳທີ່ເລັງໃສ່ເປົ້າໝາຍ**.

ແຫຼ່ງຂໍ້ມູນ: ທະນາຄານພັດທະນາອາຊີ

## ຕາຕະລາງ 5: ແຜນການຜະລິດຕະພັນການຊ່ວຍເຫຼືອທີ່ບໍ່ແມ່ນເງິນກູ້ ແລະການບໍລິການ, 2008

| ຂະແໜງ<br>ຊື່ຂອງການຊ່ວຍເຫຼືອ | ພະແນກ<br>ຮັບຜິດຊອບ | ປະເພດການ<br>ຊ່ວຍເຫຼືອ | ແຫຼ່ງທຶນ<br>ADB<br>ແຫຼ່ງທຶນ | ADB<br>ຈຳນວນ<br>($'000) | Others<br>ແຫຼ່ງທຶນ | Others<br>ຈຳນວນ<br>($'000) | ລວມ<br>($'000) |
|---|---|---|---|---|---|---|---|
| **ກະສິກຳ ແລະ ຊັບພະຍາກອນທຳມະຊາດ** | | | | | | | |
| 1. ແຜນງານການພັດທະນາຂະແໜງກະສິກຳ( ໂຄງການສະໜັບສະໜູນໃຫ້ໂຄງການ ຂະຫຍາຍຜົນຜະລິດ ແລະ ການຄຸ້ມຄອງຊັບພະຍາກອນທຳມະຊາດ ແບບຍືນຍົງ) | SEAE | PATA | TASF | 700.0 | | 0.0 | 700.0 |
| 2.ການສະໜອງທຶນເພີ່ມໃຫ້ແກ່ ໂຄງການຊ່ວຍເຫຼືອດ້ານວິຊາການ TA 4843 LAO: ການປະເມີນຄວາມຕ້ອງການຂອງຂະແໜງຊັບພະຍາກອນທຳມະຊາດ ແລະ ກະສິກຳ | SEAE | PPTA | TASF | 245.0 | | 0.0 | 245.0 |
| **ການສຶກສາ** | | | | | | | |
| 3. ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ການສຶກສາຊັ້ນສູງ | SESS | PPTA | TASF | 600.0 | | 0.0 | 600.0 |
| **ພະລັງງານ** | | | | | | | |
| 4. ໂຄງການພັດທະນາພະລັງງານໄຟຟ້າ ຂະໜາດກາງ ແລະ ນ້ອຍ | SEID | PPTA | Climate Change Fund, CEFP | 700.0 | | 0.0 | 700.0 |
| **ສາທາລະນະສຸກ, ສຸກຂະອານາໄມ, ແລະ ການປົກປ້ອງສັງຄົມ** | | | | | | | |
| 5.ການສະໜັບສະໜູນ ການພັດທະນາແຜນງານສະທາລະນະສຸກແຫ່ງຊາດ | SESS | PATA | TASF | 500.0 | | 0.0 | 500.0 |
| **ອຸດສະຫະກຳ ແລະ ການຄ້າ** | | | | | | | |
| 6. ໂຄງການສ້າງຄວາມເຂັ້ມແຂງການຄຸ້ມຄອງການເງິນພາກລັດ | SEGF | PATA | TASF | 1,100.0 | | 0.0 | 1,100.0 |
| **ກົດໝາຍ, ການຄຸ້ມຄອງເສດຖະກິດ, ແລະ ນະໂຍບາຍພາກບັດ** | | | | | | | |
| 7. ການສ້າງຄວາມສາມາດຕໍ່ການພັດທະນາເຂດເສດຖະກິດພິເສດ | LRM | CDTA | TASF | 700.0 | UNIDO | 150.0 | 850.0 |

| ຂະແໜງ<br>ຊື່ຂອງການຊ່ວຍເຫຼືອ | ພະແນກ<br>ຮັບຜິດຊອບ | ປະເພດການ<br>ຊ່ວຍເຫຼືອ | ແຫຼ່ງທຶນ<br>ADB<br>ແຫຼ່ງທຶນ | <br><br>ຈຳນວນ ($'000) | <br>Others<br>ແຫຼ່ງທຶນ | <br><br>ຈຳນວນ ($'000) | ລວມ<br>($'000) |
|---|---|---|---|---|---|---|---|
| 8. ການສ້າງຄວາມສາມາດໃຫ້ແກ່ການປັບປຸງຄວາມມີປະສິດທິພາບຂອງການຊ່ວຍເຫຼືອ | LRM | CDTA | TASF | 600.0 | UNDP | 0.0 | 600.0 |
| **ຄົມມະນາຄົມຂົນສົ່ງ** | | | | | | | |
| 9. ການສ້າງຄວາມກຽມພ້ອມແຜນງານຂະແໜງງການຂະແໜງການຂົນສົ່ງ | SEID | PATA | TASF | 700.0 | | 0.0 | 700.0 |
| **ລວມ** | | | | **5,845.0** | | **150.0** | **5,995.0** |
| | | | | | | | |
| **ສຳຮອງ** | | | | | | | |
| ການຄຸ້ມຄອງຂີ້ເຫຍື້ອ, ນ້ຳປະປາ, ສຸກຂະອານາໄມ | | | | | | | |
| 1. ໂຄງການຄຸ້ມຄອງຂີ້ເຫີຍອ ແລະ ສະພາບແວດລ້ອມທີ່ສະອາດ | SEID | PPTA | Climate Change Fund/CEFP | 600.0 | | 0.0 | 600.0 |
| | | | | | | | |
| **ອານຸພາກພື້ນ** | | | | | | | |
| **ກະສິກຳ ແລະ ຊັບພະຍາກອນທຳມະຊາດ** | | | | | | | |
| 1.ການປ້ອງກັນ ແລະ ການຄຸ້ມຄອງ ຄວາມສ່ຽງໄພແຫ້ງແລ້ງ ແລະ ນ້ຳຖ້ວມ | SEAE | RPPTA | JSF | 2,000.0 | | 0.0 | 2,000.0 |
| **ພະລັງງານ** | | | | | | | |
| 2. ການຕິດຕາມການປົກປ້ອງສັງຄົມ ໂຄງການນ້ຳເທີນ 2 ອານຸພາກພື້ນແມ່ນ້ຳຂອງ | SEID | RPATA | TASF | 400.0 | | 0.0 | 400.0 |
| 3. ໂຄງການພະລັງງານທົດແທນ ແລະ ຊົນນະບົດ ອານຸພາກພື້ນ | SEID | RPPTA | TASF | 1,000.0 | | 0.0 | 1,000.0 |
| 4. ການເຊື່ອມຕໍ່ພະລັງງານ (ບ້ານ ສົກເປືອຍ) ອານຸພາກພື້ນແມ່ນ້ຳຂອງ | SEID | RPPTA | TASF | 1,000.0 | | 0.0 | 1,000.0 |

| ຂະແໜງ<br>ຊື່ຂອງການຊ່ວຍເຫຼືອ | ພະແນກ<br>ຮັບຜິດຊອບ | ປະເພດການ<br>ຊ່ວຍເຫຼືອ | ແຫຼ່ງທຶນ: ADB<br>ແຫຼ່ງທຶນ | ADB<br>ຈຳນວນ ($'000) | Others<br>ແຫຼ່ງທຶນ | Others<br>ຈຳນວນ ($'000) | ລວມ<br>($'000) |
|---|---|---|---|---|---|---|---|
| **ອານາໄມ, ແລະ ການປົກປ້ອງສັງຄົມ** | | | | | | | |
| 5. ການສ້າງຄວາມສາມາດສຳລັບການປ້ອງກັນ HIV/AIDS | SESS | RPPTA | TASF | 500.0 | AusAID | 5,000.0 | 5,500.0 |
| **ຄົມມະນາຄົມຂົນສົ່ງ** | | | | | | | |
| 6. ການປັບປຸງຕາໜ່າງຂົນສົ່ງ ພາກເໜືອ ອານຸພາກ ພື້ນແມ່ນ້ຳຂອງ 2 | SEID | RPPTA | TASF | 1,500.0 | | 0.0 | 1,500.0 |
| **ການຄຸ້ມຄອງຂີ້ເຫຍື້ອ, ນ້ຳປະປາ, ສຸກຂະອານາໄມ** | | | | | | | |
| 7. ສຸກຂະລະນາໄມ ແລະ ນ້ຳປະປາ ອານຸພາກພື້ນແມ່ນ້ຳຂອງ | SESS | RPPTA | JSF | 400.0 | RCIF | 500.0 | 900.0 |
| | | | | | Multidonor Trust Fund | 300.0 | 300.0 |
| | | | | | Water Financing Facility | | |
| ລວມ | | | | **6,800.0** | | **5,800.0** | **12,600.0** |
| ລວມແຫ່ງຊາດ ແລະ ອານຸພາກພື້ນ | | | | **12,655.0** | | **5,950.0** | **18,595.0** |

ADB = ທະນາຄານພັດທະນາອາຊີ; ADTA = ການຊ່ວຍເຫຼືອການໃຫ້ຄຳແນະນຳທາງວິຊາການ; AusAID = ຕົວແທນອົດສະຕາລີເພື່ອການພັດທະນາສາກົນ; CDTA =ການຊ່ວຍເຫຼືອວິຊາການການພັດທະນາຄວາມສາມາດ; CEFP = ແຜນງານການສະໜອງທຶນພະລັງງານສະອາດ; GMS = ອະນຸພາກພື້ນແມ່ນ້ຳຂອງ; Gov't = ລັດຖະບານ; LRM = ຫ້ອງການທະນາຄານພັດທະນາອາຊີປະຈຳ ສປປ ລາວ; PATA = ການຊ່ວຍເຫຼືອດ້ານວິຊາການໃຫ້ຄຳແນະນຳ ແລະ ນະໂຍບາຍ; PPTA = ການຊ່ວຍເຫຼືອວິຊາການການກະກຽມໂຄງການ; PRC = ປະເທດຈີນ; RCIF = ກອງທຶນສະໜັບສະໜູນການເຊື່ອມໂຍງ ແລະ ການຮ່ວມມືພາກພື້ນ; RPPTA = ການຊ່ວຍເຫຼືອວິຊາການການກະກຽມໂຄງການພາກພື້ນ; SEAE = ພະແນກກະສິກຳ ສິ່ງແວດລ້ອມ ແລະຊັບພະຍາກອນທຳມະຊາດຂອງກົມອາຊີອາຄະເນ; SEGF = ພະແນກການປົກຄອງບໍລິຫານ, ການເງິນແລະການຄ້າກົມອາຊີອາຄະເນ; SEID = ພະແນກພື້ນຖານໂຄງລ່າງ ຂອງກົມອາຊີອາຄະເນ; SESS = ພະແນກສັງຄົມຂອງກົມອາຊີອາຄະເນ; TASF = ກອງທຶນການຊ່ວຍເຫຼືອພິເສດດ້ານວິຊາການພິເສດ; RPPTA = ການຊ່ວຍເຫຼືອວິຊາການການກະກຽມໂຄງການພາກພື້ນ; RPATA = ການຊ່ວຍເຫຼືອດ້ານ ິຊາການໃຫ້ຄຳແນະນຳພາກພື້ນ.

[a] ບໍ່ລວມເອົາກອງທຶນຂອງ ເອດີບີທີ່ເອົາກອງທຶນຍີ່ປຸ່ນສຳລັບຫຼຸດຜ່ອນຄວາມທຸກຍາກ

ແຫຼ່ງຂໍ້ມູນ: ທະນາຄານພັດທະນາອາຊີ

.